L
959.4
S843v

ຫໍພິພິດທະພັນແຫ່ງຊາດ

# ວິຣະກັມເຈົ້າອະນຸວົງ

ກອງປະຊຸມສັມມະນາປະຫວັດສາດລາວຄັ້ງພິເສດ
ວັນທີ 15-16 ສິງຫາ 2001 ທີ່ຫໍວັດທະນະທັມແຫ່ງຊາດ ນະຄອນວຽງຈັນ

ໂດຍ : ດຣ.ສຸເນດ ໂພທິສານ

(3.1.0?

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງກະແຫລງຂ່າວແລະວັດທະນະທຳ
ຫໍພິພິດທະພັນແຫ່ງຊາດ, ໂທ: 212460-2 ມືຖື 020 614351

ບົດບັນຍາຍເລື່ອງ

# ວິຣະກຳເຈົ້າອະນຸວົງ

ສະເຫນີຕໍ່ກອງປະຊຸມສຳມະນາປະຫວັດສາດລາວຄັ້ງພິເສດ

ວັນທີ 15-16 ສິງຫາ 2001, ທີ່ຫໍວັດທະນະທຳແຫ່ງຊາດ, ນະຄອນວຽງຈັນ.

ໂດຍ ດຣ. ສຸເນດ ໂພທິສານ

ນະມັດສະການພະເຖຣານຸເຖຣະ

ຮຽນທ່ານລັດຖະມົນຕີວ່າການ ລັດຖະມົນຕີຊ່ວຍວ່າການ

ທ່ານຫົວໜ້າກົມ ກອງ ຄູອາຈານ ນັກຮຽນ ນັກສຶກສາ ປັນຍາຊົນ ທະຫານ ຕຳຫລວດ ແລະ ແຂກຜູ້ມີກຽດ ທີ່ເຄົາລົບທຸກທ່ານ

ຂ້າພະເຈົ້າ ຮູ້ສຶກເປັນກຽດຢ່າງສູງ ທີ່ຫ້ອງການກະຊວງກະແຫລງຂ່າວແລະວັດທະນະທຳ ຮ່ວມກັບສະຖາບັນຄົ້ນຄວ້າວັດທະນະທຳ ໄດ້ໃຫ້ກຽດເຊີນຂ້າພະເຈົ້າເຂົ້າຮ່ວມບັນຍາຍໃນກອງປະຊຸມສົນທະນາເລື່ອງ "ວິຣະກຳເຈົ້າອະນຸວົງ" ໃນຄັ້ງນີ້ ຂ້າພະເຈົ້າຄິດວ່າອັນນີ້ແມ່ນອີກບັ້ນຮົບຫນຶ່ງ ເພື່ອສືບຕໍ່ວິຣະກຳເຈົ້າອະນຸວົງຂອງຄົນລາວລຸ້ນໃຫມ່, ແຕ່ໃນຄັ້ງນີ້ ແມ່ນບັ້ນຮົບແບບໃຫມ່ ທີ່ໃຊ້ປັນຍາວຸດຫລືໃຊ້ປັນຍາເປັນອາວຸດ ຈະຊະນະຫລືປຣາໄຊແມ່ນ ຂຶ້ນຢູ່ກັບຄວາມພ້ອມພຽງສາມັກຄີຂອງພວກເຮົາ.

ສະນັ້ນ, ຂ້າພະເຈົ້າຈຶ່ງຕີລາຄາສູງສຸດ ຕໍ່ກອງປະຊຸມທາງວິຊາການປະຫວັດສາດລາວໃນຄັ້ງນີ້ ເພາະຂ້າພະເຈົ້າຖືວ່າອັນນີ້ຈະການເປັນຂີດຫມາຍໃຫມ່ອັນຫນຶ່ງຂອງວຽກງານປະຫວັດສາດລາວ ທີ່ມີບັນດາຊັ້ນຄົນຕ່າງໆເຂົ້າຮ່ວມຢ່າງຫລວງຫລາຍ ໂດຍສະເພາະກໍແມ່ນໃຫ້ຄວາມສົນໃຈເປັນພິເສດຕໍ່ ວິຣະກຳຂອງເຈົ້າອະນຸວົງ ວິຣະກະສັດລາວ ຜູ້ດີເດັ່ນ ເຊິ່ງແມ່ນຫນຶ່ງໃນສີ່ ຂອງວິຣະກະສັດລາວທີ່ໄດ້ຮັບການຍົກຍ້ອງວ່າສຳຄັນສຸດຄື: ພະຍາຟ້າງູ່ມ ເຈົ້າໄຊຍະເຊດຖາທິຣາດ ເຈົ້າສຸຣິຍະວົງສາທຳມິກະຣາດ ແລະເຈົ້າອະນຸວົງ.

NATIONAL LIBRARY OF AUSTRALIA

ຂ້າພະເຈົ້າຍັງດີໃຈທີ່ຈະໄດ້ຮັບຟັງຄວາມຄິດເຫັນ ຈາກທ່ານຜູ້ຊົງຄຸນນະວຸດທີ່ຈະບັນຍາຍໃນຄັ້ງນີ້ ແລະຈະໄດ້ຟັງການປະກອບຄຳເຫັນ ການຕອບຄຳຖາມຂອງບັນດາທ່ານ ເພາະໂອກາດດີໆໃນການເສີມສ້າງຄວາມຮູ້ແນວນີ້ບໍ່ແມ່ນຈະຫາໄດ້ງ່າຍ.

ກອງປະຊຸມມື້ນີ້ ຂ້າພະເຈົ້າຈະສະເຫນີ 5 ຈຸດໃຫຍ່ຄື: ບົດນຳເຂົ້າສູ່ປະຫວັດສາດ, ບາງບັນຫາປະຫວັດສາດລາວ, ວິຣະກຳເຈົ້າອະນຸວົງ, ເອກະສານຫລັກຖານ ແລະ ພາກສະລຸບ.

## I. ບົດນຳເຂົ້າສູ່ປະຫວັດສາດ.

ໃນບົດນຳເຂົ້າສູ່ປະຫວັດສາດລາວຂ້າພະເຈົ້າຈະສະເຫນີເປັນ 4 ຈຸດຄື: **ຈຸດທີຫນຶ່ງ** ການຄົ້ນຄວ້າປະຫວັດລາວ ໃນຈຸດນີ້ ຂ້າພະເຈົ້າຢາກສະເຫນີກ່ຽວກັບວຽກງານຄົ້ນຄວ້າປະຫວັດສາດລາວ ທີ່ທາງກະຊວງຖະແຫລງຂ່າວແລະວັດທະນະທຳ ກໍຄືພັກແລະລັດຖະບານລາວພວກເຮົາໄດ້ດຳເນີນມາ ແລະ ໄດ້ປະສົບຜົນສຳເລັດໃນຂັ້ນຕົ້ນ ຈົນກາຍມາເປັນປຶ້ມປະຫວັດສາດລາວ ເຫລັ້ມໃຫຍ່ ມີຄວາມຫນາ 1310 ຫນ້າ, ມີພາບປະກອບ 70 ກວ່າພາບ. ຜົນສຳເລັດອັນນີ້ນັ້ນ ແມ່ນຜົນສຳເລັດລວມແບບຕໍ່ເນື່ອງຍາວນານຂອງຊາດເຮົາ.

ການຄົ້ນຄວ້າປະຫວັດສາດລາວນັ້ນ ເລີ່ມມີມາແຕ່ຄັ້ງສະໄຫມເຈົ້າວິຊຸນລະຣາດ ທີ່ປາກົດຢູ່ໃນນິທານຂຸນບໍຣົມວ່າ ພະເຈົ້າວິຊຸນ ພ້ອມພະມະຫາເທບຫລວງ ແລະພະມະຫາມຸງຄຸນສິດທິ ໄດ້ພ້ອມກັນຂຽນຂຶ້ນ, ເຊິ່ງຕໍ່ມາກໍມີການຂຽນຂຶ້ນຕໍ່ເຕີມ ແຕ່ງໃຫມ່ມາເປັນລຳດັບ ແຕ່ທັງຫມົດແມ່ນເນັ້ນຫນັກພຽງເຫດການໃນພະຣາຊະວັງເປັນສຳຄັນ ແຕ່ກໍກືໄດ້ວ່າເປັນປະຫວັດສາດລາວໃນຍາມນັ້ນ ເປັນທັດສະນະ ເປັນວິທີການຂອງຍຸກນັ້ນ.

ໃນສະໄຫມຝຣັ່ງປົກຄອງລາວ ການຄົ້ນຄວ້າປະຫວັດສາດລາວມີລັກສະນະເປັນວິທະຍາສາດຫລາຍຂຶ້ນ, ແຕ່ແມ່ນແນໃສ່ເພື່ອຮັບໃຊ້ລະບອບການປົກຄອງຂອງພວກເຂົາຄືແບ່ງແຍກເພື່ອປົກຄອງ, ເຂົາຈະຂຽນວ່າດິນແດນນີ້ເປັນຂອງເຜົ່າລາວເທິງ ລາວລຸ່ມຫາກໍ່ມາຕີໃຫ້ລາວເທິງຂຶ້ນຢູ່ເທິງພູ, ໃນສະໄຫມຣາຊະອານາຈັກການຄົ້ນຄວ້າກໍມີຢູ່ທັງສອງເຂດ ຜົນງານທີ່ເດັ່ນໆ ກໍແມ່ນຂອງອາຈານມະຫາສີລາ ວີຣະວົງ ຄືພົງສາວະດານລາວ ສະບັບປີ 1957, 1973 (ແລະກຳລັງພິມຄືນປີ 2001), ສ່ວນເຂດປົດປ່ອຍເກົ່າກໍມີຜົນງານປະຫວັດສາດລາວ ຂອງ ທ່ານມະຫາປະມອນ ສຸຣິວົງ, ຄຳພັນວີຣະຈິດ ແລະ ສ.ເດຊາ, ພິມຢູ່ວຽງໄຊ (ພິມດີດ) 371 ຫນ້າ. ພາຍຫລັງປົດປ່ອຍແລ້ວ ທ່ານພູມີວົງ ວິຈິດໄດ້ມອບໃຫ້ມະຫາຄຳ ຈຳປາແກ້ວມະນີ ເປັນຜູ້ຄົ້ນຄວ້າຈາກປີ 1976-82 ໄດ້ຜົນງານໃຫຍ່ເປັນປະຫວັດສາດລາວ 9 ພາກ, ມາຮອດປີ 1983 ທາງກະຊວງສຶກສາ ພາຍໃຕ້ການຊີ້ນຳຂອງທ່ານພູມີ ວົງວິຈິດ ໄດ້ແຕ່ງຕັ້ງຄະນະຄົ້ນຄວ້າປະຫວັດສາດລາວຂຶ້ນ, ໄດ້ຂຽນປະຫວັດ

ສາດລາວເຫລັ້ມ 3 ສຳເລັດໃນປີ 1989, ພາຍຫລັງ ພັກ-ລັດໄດ້ຕົກລົງສ້າງຕັ້ງຄະນະກຳມະການວິທະຍາສາດສັງຄົມຂື້ນ ພາຍໃຕ້ການເປັນປະທານຂອງ ທ່ານສີຊະນະ ສີສານແລ້ວວຽກງານການຄົ້ນຄວ້າປະຫວັດສາດລາວ ກໍມາຂື້ນກັບທ່ານສີຊະນະ ສີສານ ຈົນມາຮອດປີ 1993 ຄະນະກຳມະການວິທະຍາສາດສັງຄົມຖືກຍຸບ ແລະວຽກງານປະຫວັດສາດລາວຖືກໂອນມາໃຫ້ ກະຊວງຖະແຫລງຂ່າວແລະວັດທະນະທຳ ໂດຍມີທ່ານໂອສະກັນ ທຳມະເທວາ ລມຕ. ວ່າການໃນຕອນນັ້ນເປັນຜູ້ຊີ້ນຳ, ຈົນຮອດປີ 1997 ຂ້າພະເຈົ້າກໍຖືກບັນຈຸໃຫ້ປະກອບສ່ວນໃນວຽກນີ້ ໂດຍກະຊວງຖະແຫລງຂ່າວເປັນເຈົ້າການ ແລະສາມາດພິມປື້ມປະຫວັດສາດລາວສຳເລັດສົມບູນຂັ້ນພື້ນຖານທັນວັນຊາດທີ່ 2/12/2000. ກໍຖືວ່າເປັນຄັ້ງທຳອິດທີ່ຊາດລາວເຮົາມີປະຫວັດສາດແຫ່ງຊາດທີ່ສົມບູນແບບ ຄືບໍ່ແມ່ນເປັນພຽງພົງສາວະດານ ແຕ່ໄດ້ນຳເອົາຫລາຍບັນຫາໃນອະດີດຂອງຊາດແຕ່ບູຮານ ຮອດປະຈຸບັນມາຂຽນໄວ້ ຢ່າງຄົບຖ້ວນພໍຄວນ ເຮັດໃຫ້ຜູ້ອ່ານເຫັນໄດ້ຂະບວນວິວັດຂອງຊາດ ລາວຢ່າງເປັນລະບົບ, ອັນນີ້ຄືປະຫວັດການຄົ້ນຄວ້າປະຫວັດສາດລາວໂດຍຫຍໍ້ ແລະກໍຖືວ່າເປັນຜົນງານລວມຂອງຊາດ.

**ຈຸດທີສອງ** ທີ່ຢາກສະເໜີ ແມ່ນວິທີການຄົ້ນຄວ້າປະຫວັດສາດລາວເຫລັ້ມນີ້ ນັ້ນແມ່ນຄະນະຂອງພວກເຮົາໄດ້ນຳໃຊ້ຫລັກການຄົ້ນ 4 ປະການ, ແທ້ທີ່ຈິງນັ້ນການຄົ້ນຄວ້າປະຫວັດສາດນັ້ນ ມີແບບວິທີສະເພາະຂອງມັນ ເຊິ່ງເອີ້ນວ່າ Historical Method ຫລື Historical Reseach ເຊິ່ງບໍ່ສາມາດຈະອະທິບາຍໄດ້ຫມົດໃນບ່ອນນີ້, ແຕ່ຂ້າພະເຈົ້າຢາກສະລຸບຫຍໍ້ໃນ 4 ຫລັກການຄົ້ນຄວ້າປະຫວັດສາດລາວຄືການນຳໃຊ້ 4 ຂໍ້ມູນເປັນຫລັກຄື: ຂໍ້ມູນຕຳນານພົງສາວະດານ, ຂໍ້ມູນດ້ານບູຮານຄະດີ, ຂໍ້ມູນພົງສາວະດານປະເທດອ້ອມຂ້າງ ແລະຜົນງານການຄົ້ນຄວ້າແລະການບັນທຶກຂອງຕາເວັນຕົກ.

<u>1. ຕຳນານພົງສາວະດານລາວ</u> ຖືວ່າເປັນຂໍ້ມູນປະຖົມມະພູມ ຄືນິທານຂຸນບູຣົມ ເຊິ່ງລວບລວມໄດ້ 39 ສະບັບ ໄດ້ນຳມາວິໄຈໄຈ້ແຍກອອກເປັນ 8 ກຸ່ມ ແລະມີ 2 ກຸ່ມໃຫຍ່ ຄືກຸ່ມນິທານ ແລະ ພົງສາວະດານ, ທັງສອງກຸ່ມແມ່ນມີພື້ນຖານພິເສດທີ່ແຕກຕ່າງກັນ, ຄືກຸ່ມນິທານຈະເວົ້າແບບບຸກຄະລາທິຖານເປັນແບບສະບັບຂອງພະສົງ ຄືຈະພະຍາຍາມຊອກຫາຕົວຢ່າງມາເພີ່ມໃສ່ເປັນອຸທາຫອນ ອາດຈະຈິງ ແລະອາດບໍ່ຈິງກໍໄດ້.

ສ່ວນກຸ່ມພົງສາວະດານແມ່ນຈະແບບສະບັບຂອງພວກມະໂຮງ ຫລືພາມໃນຣາຊະສຳນັກທີ່ມັກຈະບັນທຶກຕົວຈິງຫລາຍກວ່າ ໂດຍສະເພາະທາງດ້ານເຫດການວັນເດືອນປີ, ເພາະສະນັ້ນເມື່ອອ່ານພົງສາວະດານລາວ ຕ້ອງເບິ່ງລັກໆວ່າເປັນກຸ່ມໃດຄວນເຊື່ອແລະບໍ່ຄວນເຊື່ອຊ່ຳໃດ.

ຕົວຢ່າງເລື່ອງພະຍາຟ້າງຸ່ມ ຈະມີຄວາມສັບສົນຫລາຍ, ຕຳນານບາງສະບັບວ່າເກີດມາ ປຸບມີແຂ້ວເຕັມປາກ 33 ເຫລັ້ມຈື່ງຖືກເນລະເທດ ໂດຍການໄຫລແພ, ບາງສະບັບວ່າຮອດອາຍຸ 3 ປີຈຶ່ງຖືກໄຫລແພ, ຖ້າເຮົາສຶກສາຢ່າງຄົບຖ້ວນ ໂດຍບໍ່ຟ້າວເຊື່ອສະບັບໃດກ່ອນ, ໂດຍນາໄຈ້ແຍກອອກເປັນກຸ່ມ ເປັນຫມວດແລ້ວປຽບທຽບກັບໄປກັບມາ ຊອກຫາເຫດຫາຜົນ ສຸດທ້າຍຈະມີຂໍ້ສະລຸບໄດ້ຄື:

ພະຍາຟ້າງຸ່ມເກີດປີ 1316, ຖືກເນລະເທດອາຍຸ 23 ປີໃນປີ 1339, ຮຽນຢູ່ນຳພະປາສະຫມັນ 1341-1343, ຮຽນຢູ່ພະລາຊະວັງອະເຫມນ 1344-1350, ແຕ່ງງານປີ 1348, ຍົກທັບທ້ອນໂຮມລາວ 1351, ຂຶ້ນຄອງຊຽງດົງຊຽງທອງ 1353, ສະຫລອງຢູ່ວຽງຈັນ 1358, ຖືກເນລະເທດໄປເມືອງນ່ານ 1373, ສະຫວັນນະຄົດ 1375. ໃນວັນໃຫ້ໂອວາດແລະສະລອງໄຊປີ 1358 ພະຍາຟ້າງຸ່ມມີອາຍຸ 41 ປີພໍດີ, ໃນເດືອນຍີ່ອອກໃຫມ່ 3 ຄ່ຳ (ປະມານວັນທີ 5 ເດືອນມັງກອນ 1353-2003) ພະຍາຟ້າງຸ່ມຈຶ່ງຖືວ່າເປັນກະສັດລາວອົງທຳອິດທີ່ສຳເລັດການສຶກສາຂັ້ນສູງ (ປະລິນຍາເອກ) ຈາກຕ່າງປະເທດ.

2. <u>ບູຮານຄະດີ ສິລາຈາລຶກ,</u>

ບູຮານຄະດີ ເປັນຫລັກຖານຫນຶ່ງທີ່ນັກປະຫວັດສາດ ຕ້ອງໃຫ້ຄວາມສຳຄັນຄູ່ກັບພົງສາວະດານ ເຊັ່ນການຄົ້ນພົບບູຮານວັດຖຸຕ່າງໆ ບໍ່ວ່າຈະເປັນ ຫີນຕັ້ງ ຕັ່ງຫີນ ໄຫຫີນ ຄ້ອງບ້າງ ເຄື່ອງປະດັບ ຜາແຕ້ມ ຫມໍ້ໄຫ ດິນເຜົາ ເປັນຕົ້ນເພາະຫລັກຖານເຫລົ່ານີ້ມີຄຸນຄ່າທີ່ຈະຕ້ອງສຶກສາປຽບທຽບ ຫາຄວາມຈິງ ແລະຈະເປັນຂໍ້ມູນໃຫ້ແກ່ປະຫວັດສາດຍຸກຕົ້ນ, ສ່ວນສິລາຈາລຶກ ເປັນຂໍ້ມູນດິບ ທີ່ຈະຕ້ອງເອົາໃຈໃສ່ຫລາຍກວ່າຈຳພວກຕຳນານ ເພາະການບັນທຶກໃນສິລາຈາລຶກ ແມ່ນເຫດການທີ່ເປັນຈິງທີ່ບໍ່ມີການປ່ຽນແປງໄດ້, ແຕ່ກໍມີຂໍ້ຈຳກັດທີ່ວ່າ ມັນເປັນການບັນທຶກສະເພາະເລື່ອງ ທີ່ກັບລະປະນາຫລືການໃຫ້ເຂດແດນເປັນສ່ວນໃຫຍ່, ແຕ່ມັນມີຄຸນຄ່າທີ່ສຸດທີ່ຈະຕ້ອງນຳມາປຽບທຽບກັບຂໍ້ມູນດ້ານພົງສາວະດານ ເພື່ອຊອກຫາຂໍ້ຍຸດຕິ. ໂດຍສະເພາະໃນສະໄຫມລ້ານຊ້າງມີສິລາຈາລຶກ ຢູ່ຢ່າງຫລວງຫລາຍທັງຕົວທຳ ແລະຕົວລາວບູຮານ, ບັນດາວັນເດືອນປີ ຊື່ບຸກຄົນສະຖານທີ່ ທີ່ຄາດເຄື່ອນບໍ່ຊັດເຈນ ຫລືມີບັນຫາໃນພົງສາວະດານ ຈະໃຊ້ສິລາຈາລຶກມາຊ່ວຍຕັດສິນໄດ້, ສະນັ້ນຄຸນຄ່າຂອງຈາລຶກຈຶ່ງມີສູງ.

3. <u>ຫລັກຖານການບັນທຶກຂອງປະເທດອ້ອມຂ້າງ,</u>

ບັນດາພົງສາວະດານຂອງປະເທດອ້ອມຂ້າງລາວ ເຊັ່ນຂອງຈີນ ຫວຽດນາມ ກຳປູເຈັຍ ໄທ ພະມ້າ ທີ່ພົວພັນກັບລາວເຮົາ, ພວກເຮົາກໍໄດ້ເອົາໃຈໃສ່ອ່ານເປັນພິເສດ ເພື່ອສົມທຽບຊອກຫາຄວາມຈິງ ບາງເທື່ອມີການຄາດເຄື່ອນຢ່າງແຮງໃນເອກະສານຂອງລາວ ເຊັ່ນສົງ

ສາມໃນສະໄໝໄຊຍະຈັກກະພັດ ທີ່ຕໍ່ຕ້ານດາຍຫວຽດ ເຊິ່ງຕົວເລກວ່າ ດາຍຫວຽດມີທະຫານລວມຮອດ 20 ລ້ານຄົນເອົ້າ ມາຕີລາວແບບສາຍຟ້າແລບ, ແຕ່ເມື່ອຄົ້ນເບິ່ງເອກະສານຂອງຝ່າຍຫວຽດນາມກໍເຫັນວ່າມີເຫດການຕົວຈິງຂອງສົງຄາມ ທີ່ເວົ້າຄ້າຍໆກັນ, ແຕ່ວ່າຕົວເລກຂອງລາວສູງໂພດອາດຍ້ອນບູຮານລາວ ນິຍົມຂຽນແນວນັ້ນ ແຕ່ຄວາມໝາຍບໍ່ແມ່ນຢ່າງທີ່ເຮົາເຂົ້າໃຈປະຈຸບັນ ເຊັ່ນສິບເອັດ ເພິ່ນຂຽນເປັນ 101 ປະຈຸບັນເຮົາກໍອ່ານເປັນຮ້ອຍເອັດ ເຊິ່ງມັນເພິ່ນເປັນ 10 ເທົ່າຕົວ, ສະນັ້ນບັນຫາແມ່ນພວກເຮົາບໍ່ເຂົ້າໃຈວິທີການໃນອະດີດເທົ່ານັ້ນ ແລະອີກຢ່າງໜຶ່ງໜັງສືໃບລານ ແມ່ນມີການກ່າຍຕົດຕໍ່ກັນມາ ເຊິ່ງຜູ້ກ່າຍກໍອາດໄປປ່ຽນແປງເພີ່ມເຕີມແລະ ເຮັດໃຫ້ມີການຄາດເຄື່ອນໄດ້ ເຮົາຈຶ່ງຈຳເປັນຕ້ອງປຽບທຽບກັບ ເອກະສານຂອງປະເທດອ້ອມຂ້າງ ເພື່ອຊອກຫາຂໍ້ເທັດຈິງ.

ບາງຄັ້ງເອກະສານລາວເອງຈະໃຫ້ຂໍ້ມູນແບບບໍ່ຊັດເຈນ ເຊັ່ນເວົ້າວ່າເຈົ້າໄຊຍະເຊດຖາທິຣາດ ໄດ້ຫາຍສາບສູນໄປໃນລະຫວ່າງລົງໄປຕີເມືອງຣາມະລັກອົງການ, ເອກະສານລາວທຸກສະບັບບໍ່ມີລາຍ ລະອຽດເລີຍຕໍ່ບັນຫານີ້ ພວກເຮົາຈຳເປັນຢາກຮູ້ວ່າ ເມືອງລາມມະລັກອົງການແມ່ນເມືອງໃດ ກ້າເອົ້າໄປສຶກສາໜັງສືໃບລານຜູກອື່ນໆ ພັດເວົ້າວ່າ ແມ່ນເມືອງໂລມວັນອົງການ, ແຕ່ພາຍຫລັງ ໄດ້ສຶກສາເຫດການນີ້ຈາກພົງສາວະດານກຳປູເຈັຍຈຶ່ງຮູ້ລາຍລະອຽດວ່າ ສົງຄາມນີ້ເກີດຂຶ້ນ 3 ນັ້ນ ຍ້ອນຝ່າຍກຳປູເຈັຍມາຍຶດໂຄຣາດຝ່າຍລ້ານຊ້າງສົ່ງແມ່ນທັບໄປປາບບໍ່ແພ້ ສົ່ງໄປອີກຄັ້ງທີສອງກໍບໍ່ແພ້, ເຈົ້າໄຊຍະເຊດຖາທິຣາດຈຳເປັນຕ້ອງໄປເອງ ຕີໄປຮອດອັງກໍ ຈົນເກືອງເກາະເຈົ້າຣາມ ແຕ່ສຸດທ້າຍພ່າຍໃຫ້ກຳປູເຈັຍ ຝ່າຍກຳປູເຈັຍຈຶ່ງເອີ້ນວ່າເຈົ້າລາວເຮືອທັກ. ແຕ່ເຈົ້າໄຊຍະເສດຖາສາມາດເອົາຕົວລົບໜີມາຮອດອັດຕະປື ແລະເສັຍຊີວິດຢູ່ທັ້ນຍ້ອຍປ່ວຍໄຂ້. ສະນັ້ນເຮົາໄດ້ຂໍ້ມູນເພີ່ມຂຶ້ນ ຍ້ອນອາໄສຂໍ້ມູນຂອງປະເທດເພື່ອນບ້ານ ຈຶ່ງເຫັນໄດ້ຄວາມເປັນຈິງ.

4. <u>ການບັນທຶກຂອງຊາວຕາເວັນຕົກ</u> ແມ່ນເອກະສານພິເສດທີ່ຕ້ອງໄດ້ເອົາໃຈໃສ່ໃຫ້ດີ, ເພາະຊາວຕາເວັນຕົກທີ່ເຂົ້າມາລາວໃນສະໄໝລ້ານຊ້າງຕອນນັ້ນໄດ້ມາເຫັນເຫດການຕົວຈິງ ແລະໄດ້ບັນທຶກໄວ້ເປັນເຫລັ້ມ ເຊັ່ນ ວັນວຸສະຕົຟ ໄດ້ເຂົ້າມາລາວໃນປີ 1641 ແລະຄຸນພໍ່ມາລີນີ ແລະເລີເລຍ ໃນປີ 1642.

ເຣື່ອງຂອງທ່ານວັນວຸດສະຕົບ ອອກຈາກກຸງລະແວກນະຄອນຫລວງຂອງກຳປູເຈຍເມື່ອວັນທີ 20 ກໍລະກົດ (7) ປີ ຄ.ສ. 1641 ຂຶ້ນມາຮອດວຽງຈັນເມື່ອເດືອນພະຈິກ (11) ປີ ຄ.ສ. 1641 (ກົງກັບ ເດືອນລາວແມ່ນເດືອນ 12) ກົງກັບມື້ເຮັດບຸນໄຫວ້ພະທາດຫລວງປະຈຳປີ. ເຈົ້າຊີວິດສຸຣິຍະວົງສາທຳມິກະຣາດ ໄດ້ຈັດພິທີຕ້ອນຮັບ ທ່ານວັນວຸດສະຕົບ ແລະ ຄະນະໃນການະຜູ້ນຳສານຂອງທ່ານ ນາຍພົນວັນເດຍແມນຢ່າງສົມກຽດທີ່ສຸດ ພິທີນັ້ນໄດ້ຈັດຂຶ້ນຢູ່ທີ່

ເຖິ່ນພະທາດຫລວງ. ການເດີນທາງມາຜູກສາຍສຳພັນກັບອານາຈັກລາວລ້ານຊ້າງຂອງລະນະທູດໂຮນລັງ ໃນເວລານັ້ນໄດ້ຮັບຫມາກຜົນເປັນທີ່ພໍໃຈທີ່ສຸດ, ພໍ່ຄ້າໂຮນລັງຫລັງຈາກກວາຍສານ ແລະເຄື່ອງບັນນາການແກ່ເຈົ້າສຸຣິຍະວົງສາທຳມິກະຣາດແລ້ວ ກໍ່ໄດ້ແລກປ່ຽນສິນຄ້າກັບປະຊາຊົນ ພິເສດກັບປະຊາຊົນຊາວນະຄອນວຽງຈັນ ແລະ ໄດ້ຕັ້ງຕົວແທນການຄ້າຂອງເຂົາເຈົ້າຢູ່ນະຄອນວຽງຈັນ.

ວັນທີ 20 ທັນວາ (12) 1641, ທ່ານວັນວຸດສະຕົບ ໄດ້ຈາກວຽງຈັນກັບໄປປະເທດຂະເຫມນ ເຖິງກຸງລະແວກ ເມື່ອວັນທີ 11 ເມສາ (4) 1642 ການກັບຄືນປະເທດຂະເຫມນດັ່ງນັ້ນທ່ານວັນວຸດສະຕົບ ໄດ້ປະຜູ້ຊ່ວຍ 2 ຄົນ ໄວ້ທີ່ວຽງຈັນ ເພື່ອດຳເນີນການຊື້ຂາຍຕໍ່ໄປມາຮອດເດືອນສິງຫາ (8) 1642 ພວກພໍ່ຄ້າໂຮນລັງ ຈຶ່ງໄດ້ເດີນທາງກັບພ້ອມດ້ວຍເຮືອບັນທຸກສິນຄ້າລາວ, ສານ ແລະເຄື່ອງບັນນາການ ຂອງເຈົ້າຊີວິດລາວທີ່ສົ່ງໄປຫາທ່ານນາຍພົນວັນເດຍແມນທີ່ປັດຕະວິຍ. ເຈົ້າຊີວິດສຸຣິຍະວົງສາທຳມິກະຣາດ ບໍ່ໄດ້ສົ່ງຄະນະທູດລາວຕິດຕາມໄປພ້ອມ. ແຕ່ໄດ້ເວົ້າວ່າສະພາບການທີ່ຊາຍແດນລາວ ແລະກຳປູເຈຍກຳລັງມີຄວາມເຄັ່ງຕຶງຢູ່.

ນອກຈາກພໍ່ຄ້າຊາວໂຮນລັງ ໄດ້ເຂົ້າມາຜູກສາຍສຳພັນກັບອານາຈັກລາວ ລ້ານຊ້າງແລ້ວ ໃນປີ ຄ.ສ. 1642 ໄດ້ມີຄຸນພໍ່ ປອກຕຸຍການ 2 ທ່ານ ຄື: ຄຸນພໍ່ເລີເລຍ ແລະ ຄຸນພໍ່ມາລີນີເຂົ້າມານະ ຄອນຫລວງວຽງຈັນ ເຊິ່ງມີຈຸດປະສົງເຜີຍແຜ່ສາສະຫນາຄຣິດໃຫ້ແກ່ປະຊາຊົນລາວລ້ານຊ້າງ ແຕ່ບໍ່ສຳເລັດດັ່ງຄວາມຕັ້ງໃຈ ຍ້ອນວ່າເວລານັ້ນປະຊາຊົນລາວມີຄວາມເຫລື້ອມໃສສັດທາໃນພະພຸດທະສາສະຫນາທີ່ມີລະດັບສູງແລ້ວ.

ການເຂົ້າມາອານາຈັກລາວລ້ານຊ້າງ ຂອງຄະນະທູດການຄ້າຂອງຊາວໂຮນລັງກໍ່ດີ ແລະ ການເຂົ້າມາຂອງຄຸນພໍ່ສາສະຫນາຄຼິດ ປອກຕຸຍການ 2 ທ່ານນັ້ນກໍ່ດີ ລ້ວນແຕ່ໄດ້ຂຽນຂໍ້ມູນດ້ານຕ່າງໆ ກ່ຽວກັບອານາຈັກລາວ ເຮັດໃຫ້ເຮົາສາມາດນຳມາສຶກສາປຽບທຽບກັບຂໍ້ມູນອື່ນໆ ແລະສາມາດ ມີຂໍ້ສະລຸບທີ່ດີກວ່າເກົ່າໄດ້.

ສະນັ້ນຂໍ້ມູນທັງ 4 ແຫລ່ງທີ່ກ່າວມານັ້ນ ແມ່ນຄະນະຄົ້ນຄວ້າຊຸດນີ້ໄດ້ເອົາ ໃຈໃສ່ສຶກສາຢ່າງຕັ້ງຫນ້າ ເຮັດໃຫ້ມີຜົນດີຕໍ່ການຂຽນປະຫວັດສາດລາວເຫລັ້ມນີ້ ຈຶ່ງຢາກຮຽກຮ້ອງໃຫ້ທ່ານ ໄດ້ອ່ານປະຫວັດສາດລາວເຫລັ້ມນີ້ແລ້ວທ່ານຈະບໍ່ຜິດຫວັງ ແລະໂດຍສະເພາະສົງຄາມສະໄຫມເຈົ້າອະນຸວົງນີ້ນຳ ເພາະມີຫລາຍເອກະສານຍັງຂຽນບັນຫານີ້ຕາມ ເອກະສານໄທ.

**ຈຸດທີສາມ** ແມ່ນທັດສະນະປະຫວັດສາດ, ໂດຍຜ່ານການຄົ້ນຄວ້າແລະນຳໃຊ້ຂໍ້ມູນຫລັກຖານທັງ 4 ແບບທີ່ກ່າວມາແລ້ວນັ້ນ, ຈຶ່ງສາມາດໄຈ້ແຍກໄດ້ບັນດາທັດສະນະຕໍ່ປະຫວັດສາດລາວ ການຈຳແນກໄດ້ວ່າ ເອກະສານຂໍ້ຄວາມທີ່ເຮົາກຳລັງອ່ານຢູ່ນັ້ນ ແມ່ນຕົກ

ຢູ່ໃນທັດສະນະໃດ ກໍເປັນສິ່ງຈຳເປັນຂອງການຄົ້ນຄວ້າ ເພາະເປົ້າຫມາຍການຄົ້ນຄວ້າຂອງແຕ່ລະທັດສະນະແມ່ນບໍ່ຄືກັນ.

ຈາກການຄົ້ນຄວ້າຜ່ານມາ ເຮັດໃຫ້ສາມາດສະລຸບໃຫ້ເຫັນບັນດາຈຸດພິເສດຂອງທັດສະນະທີ່ແຕກຕ່າງກັນຢ່າງຫລວງຫລາຍ ເຊິ່ງໃນສະໄຫມປະຈຸບັນ ຄົນເຮົາສ່ວນຫລາຍກໍມັກຈະເຂົ້າໃຈ ແຕ່ສະເພາະທັດສະນະ Nationalist History ເທົ່ານັ້ນ ຍ້ອນວ່າທັດສະນະນີ້ໄດ້ຮັບການເຜີຍແຜ່ ແລະເປັນທີ່ຮູ້ຈັກກັນຢ່າງກວ້າງຂວາງ ໃນບໍ່ພໍເທົ່າໃດປີມານີ້ເອງ. ແຕ່ຖ້າເຮົາຫາກເອົາໃຈໃສ່ລົງເລິກຄົ້ນຄວ້າຂໍ້ມູນເອກະສານລາວເດີມແທ້ໆຈາກໃບລານແລ້ວຄ່ອຍໆມາອ່ານຜົນງານໃຫມ່ໃນຍຸກຫລັງ ເຮົາຈຶ່ງຈະຮູ້ໄດ້ແຍກວ່າ ທັດສະນະຕໍ່ປະຫວັດສາດລາວນັ້ນມີ ຫລາຍທັດສະນະທີ່ແຕກຕ່າງກັນ ເຊິ່ງລວມມີຮອດ 8 ທັດສະນະຄື:

Buddhist History: ເປັນທັດສະນະປະຫວັດສາດໃນໃບລານ ທີ່ເນັ້ນຫນັກພຸດທະສາສນາ ທັດສະນະນີ້ຈະບອກເຮົາວ່າປະຫວັດສາດລາວແມ່ນຕິດພັນຢ່າງສະນິດແນ່ນກັບພຸດທະສາສະນາ, ໂດຍເລີ່ມມາຈາກພະເຈົ້າ 5 ພະອົງ, ຈົນຮອດສະໄຫມພະໂຄດົມ, ຈະເວົ້າເຖິງ 16 ເມືອງໃຫຍ່ຢູ່ອິນເດຍແລະ 15 ເມືອງນ້ອຍຢູ່ລຸ່ມນ້ຳຂອງ, ໃນເວລາສ້າງເມືອງຊວານັ້ນ ໄດ້ມີເຈົ້າຣັດສີສອງພີ່ນ້ອງມາປັກຫລັກຫມາຍເພື່ອຕັ້ງເມືອງ, ຈະມີເສົາອິນທະຂິນຢູ່ກາງ, ມີກ້ອນກາຍຟ້າ ຫລັກຫມັ້ນ ທ້າຍອັນ, ແລະຮອບນອກມີພູຊ້າງນັ່ງພູຊ້າງຫລວງພູລ້ານ ສະນັ້ນ ເຈົ້າຣັດສີຈຶ່ງໃຫ້ຊື່ເມືອງວ່າ ເມືອງລ້ານຊ້າງຍ້ອນເອົາພູລ້ານແລະພູຊ້າງເປັນນິມິດ ນັ້ນເອງ. ນິທານອຸນບໍຣົມບາງສະບັບ, ອຸຣັງຄະທາດ, ພະເຈົ້າລຽບໂລກແລະອື່ນໆແມ່ນເນັ້ນໃຫ້ເຫັນການຕິດພັນລະຫວ່າງປະຫວັດສາດລາວກັບພະພຸດທະສາສນາ ແລະຈະເອີ່ຍສະເພາະບັນດາກະສັດທີ່ມີຜົນງານຕໍ່ພຸດທະສາສນາອັນນີ້ແມ່ນທັດສະນະປະຫວັດສາດທີ່ຍຶດສາສນາເປັນຫລັກ.

Traditionalist History: ເປັນທັດສະນະປະຫວັດສາດທີ່ເນັ້ນຫນັກຮາຊະວົງພື້ນເມືອງ ຄົນພື້ນເມືອງ ເຊັ່ນ ພວກນາກ ພະຍານາກ 15 ຕະກຸນທີ່ເປັນເຈົ້າຢູ່ໃນຫນອງກະແສ ຫລືຫນອງກະແສ ຫລືຫນອງກະແສແສນຍ່ານ, ຈາກນັ້ນຈະເວົ້າເຖິງຜູ້ປົກຄອງເຊິ່ງເປັນຍັກຕົນຫນຶ່ງຊື່ວ່າ "ບັນ-ທາ" ມາຈາກເມືອງລົງກາໄດ້ເປັນໃຫຍ່ ຢູ່ເມືອງຊວາ, ຕໍ່ມາເມື່ອບັນທາຕາຍແລ້ວເມັຍບັນທາ ຊື່ວ່ານາງພາລາເທວີ ໄດ້ໄປແຕ່ງດອງກັບເຈົ້າ ພະຍາອິນທະປັດຖານະຄອນ (ເມືອງຂະເຫມນບູຮານ) ແລະນາງກາງຣີ ລູກສາວຂອງນາງພາລາເທວີໄດ້ໄປເອົາກັບ ທ້າວພຸດທະເສນລູກຊາຍຂອງເຈົ້າພະຍາ ເມືອງອິນທະປັດຖານະຄອນແລ້ວມາເປັນໃຫຍ່ ຢູ່ເມືອງຊວາສືບມາ.

ພາຍຫລັງວົງກະສັດ "ບັນທາ" ທີ່ເປັນໃຫຍ່ຢູ່ເມືອງຊວາ ສິ້ນສຸດລົງແລ້ວ ວົງກະສັດທີສອງແມ່ນວົງ "ພະຍານາກ" ໄດ້ຂຶ້ນມາເປັນໃຫຍ່ຢູ່ເມືອງຊວາສືບມາ. ວົງພະຍານາກນີ້

ກໍສືບເນື່ອງມາຈາກວົງບັນທາ ເຊິ່ງມີກຸ່ມຖານດັ້ງເດີມຢູ່ບໍລິເວນຫນອງກະແສແສນຍ່ານ ກໍລີຕາມໂຫລ້ງແມ່ນ້ຳຂອງ ແລະ ສາຂາແມ່ນ້ຳຂອງ, ແມ່ນ້ຳຂອງແມ່ນຢູ່ ບໍລິເວນພູກາງສີ (ພູສີຫລວງພະບາງ), ສີໂຄດຕະບອງ. ຫນອງຫານຫລວງ (ສາກົນນະຄອນ) ແລະ ຫນອງຫານນ້ອຍ (ອຸດອນທານີ) ໂດຍສະເພາະແມ່ນໄດ້ມີຫລັກແຫລ່ງຫມັ້ນຄົງຢູ່ພາກກາງ ຄືບໍລິເວນແຂວງຄຳມ່ວນ, ວຽງຈັນ ແລະ ສະຫວັນນະເຂດ.

ເມື່ອວົງ "ພະຍານາກ" ໄດ້ສິ້ນສຸດລົງກໍມີວົງ "ຈັນທະພານິດ" ໄດ້ເປັນໃຫຍ່ ຢູ່ເມືອງຊວາ ແທນ. ພົງສາວະດານເມືອງຫລວງພະບາງກ່າວວ່າ "ຈັນທະພານິດ" ແມ່ນພໍ່ຄ້າ ຂຶ້ນໄປຈາກວຽງຈັນ ໄດ້ເປັນໃຫຍ່ປົກຄອງເມືອງຊວາຕໍ່. ຈັນທະພານິດນີ້ ເຂົ້າໃຈວ່າແມ່ນ ເຜົ່າໄຕ-ລາວ ແຫ່ງອານາຈັກສີໂຄດຕະບອງທີ່ວຽງຈັນ ຂຶ້ນໄປຄ້າຂາຍທີ່ເມືອງຊວາ ໃນລະຫວ່າງສະຕະວັດທີ VIII ເພາະຢູ່ວຽງຈັນ ເວລານັ້ນຂຶ້ນກັບ ອານາຈັກສີໂຄດຕະບອງ ໄດ້ມີຄວາມຈະເລີນຮຸ່ງເຮືອງທີ່ສຸດ ແລະ ຄິດວ່າເມືອງຊວາ ສະໄຫມກ່ອນຂຸນລໍມາປົກຄອງ ນັ້ນ ຕົກຢູ່ໃຕ້ອິດທິພົນຂອງສີໂຄດຕະບອງ ທັດສະນະແບບພື້ນເມືອງ ແມ່ນຈະລຽງລຳດັບ ການປົກຄອງໂດຍຄົນພື້ນເມືອງ.

Royalist History: ເປັນທັດສະປະຫວັດສາດທີ່ເນັ້ນຫນັກຣາຊະວົງວົງຂຸນລໍ, ເປັນວົງ ສຳຄັນ ໂດຍອ້າງການມາແຕ່ຟ້າແຖນ ແລະບໍ່ໃຫ້ຄວາມສຳຄັນແກ່ ຣາຊະວົງພື້ນເມືອງອື່ນໆ ຈະກີ່ເອົາຄວາມບໍລິສຸດແບບເທວະຣາຊະ ຫລືເທວະຣາດ. ພື້ນຂຸນບໍຣົມກ່າວວ່າ ນັບແຕ່ຂຸນລໍ ມາປົກຄອງສ້າງອານາຈັກລ້ານຊ້າງມາເຖິງ ສະໄຫມພະຍາລັງທີລາດ ເປັນເຈົ້າແຜ່ນດິນ ລ້ານຊ້າງ ເມື່ອປີ ຄ.ສ. 1271. ໄດ້ມີເຈົ້າກະສັດປົກຄອງລ້ານຊ້າງ ສືບທອດກັນມາກ່ອນ ແລ້ວໄດ້ 22 ອົງ, ຈາກພະຍາລັງ ກໍແມ່ນສຸວັນນະຄຳຜົງ ພະຍາຜີຟ້າ ຄຳຮຽວ ຟ້າງຸ່ມໄປ ຕາມລຳດັບ ຈົນກະສັດລາວອົງສຸດທ້າຍ ລ້ວນແຕ່ໍາງການສືບເຊື້ອຈາກຂຸນບໍຣົມພຸ້ນດາຍ.

Localist History : ເປັນທັດສະນະປະຫວັດສາດທີ່ເນັ້ນຫນັກຣາຊະວົງທ້ອງຖິ່ນ ກໍກາຍເປັນປະຫວັດສາດທ້ອງຖິ່ນ ເຊັ່ນ ພົງສາວະດານເມືອງກໍເນັ້ນ ຣາຊະວົງຂຸນເຈືອງ ຄອງເມືອງພວນຊຽງຂວາງ, ພົງສາວະດານ 12 ຈຸໄຕກໍເນັ້ນຣາຊະວົງ 12 ຈຸໄຕຄອງເມືອງ ແຖງ, ນອກນັ້ນກໍມີພົງສາວະດານອັດຕະປື ພົງສາວະດານຈຳປາສັກ ເປັນຕົ້ນທີ່ເນັ້ນຫນັກປະ ຫວັດສາດທ້ອງຖິ່ນ.

Colonist History: ເປັນທັດສະນະປະຫວັດສາດທີ່ເນັ້ນຫນັກອິດທິພົນຝຣັ່ງ ຂຽນຂຶ້ນໃນສະໄຫມຝຣັ່ງປົກຄອງ ແນໃສ່ໃຫ້ນັບຖືຝຣັ່ງ ແລະເນັ້ນຄົນພື້ນເມືອງແມ່ນຂ້າ ແມ່ນຂອມ ບໍ່ແມ່ນລາວ ລາວພຽງແຕ່ມາຕີເອົາດິນຕອນນີ້.

Thaist History: ເປັນທັດສະນະປະຫວັດສາດທີ່ເນັ້ນຫນັກຊົນຊາດໄຕ ແລະແນໃສ່ການລວມຕົວເປັນອັນດຽວກັນຂອງເຜົ່າໄຕເປັນສໍາຄັນ ແລະຂຽນວ່າລາວກໍເປັນພາກສ່ວນຫນຶ່ງຂອງປະຫວັດສາດໄທ ເຊັ່ນປະຫວັດສາດລາວທີ່ຂຽນໂດຍມາບົດ ຊຸມສາຍ ແລະອື່ນໆ.

Nationalist History ທັດສະນະທີ່ສໍາຄັນທີ່ສຸດແລະມີອິດທະພົນທີ່ສຸດ ເພາະເປັນທີ່ຮູ້ຈັກ ກັນຫລາຍ ເຊິ່ງແມ່ນທັດສະນະປະຫວັດສາດແບບຊາດນິຍົມ, ທັດສະນະນີ້ຍັງແຕກຍ່ອຍອອກໄປອີກ ເຊິ່ງພໍສະລຸບໄດ້ຄື:

1. ກຸ່ມເດີມຂອງ ລາວແມ່ນຢູ່ເອເຊັຍຕາເວັນຕົກແລະເອເຊັຍກາງ, ທິດສະດີນີ້ແມ່ນອີງໃສ່ສົມ ມຸດຖານທີ່ວ່າແຫລ່ງອາລະຍະທໍາຂອງໂລກມະນຸດ ແມ່ນອອກຈາກເອເຊັຍກາງໃກ້ໆກັບທະເລສາບແຄສະປຽນ (Caspian) ຈາກນັ້ນຈຶ່ງແຜ່ກະຈາຍໄປທິດຕ່າງໆ ແລະກາຍເປັນຄອກເຄຊອຍ ອັຟຣິກກອຍ ແລະ ມົງໂກນລອຍ, ແຕ່ຈາກການຂຸດຄົ້ນທາງບູຮານຄະດີຂອງຈີນ ໃນປີ 1927 ໃກ້ໆປັກກິ່ງ ໄດ້ພົບກະດູກຄົນສະໄຫມກ່ອນປະຫວັດສາດ ຈາກການພິສູດແລ້ວນັກປະຫວັດສາດຂອງຈີນ ຈຶ່ງໄດ້ປະຕິເສດທິດສະດີນີ້.

2. ທ່ານຫມໍດອດດ໌ (Dodd) ໄດ້ຕັ້ງທິດສະດີວ່າຊົນຊາດໄທ-ລາວ ແມ່ນຢູ່ທາງຕາເວັນອອກສຽງເຫນືອຂອງມົນທົນເສສວນ, ການຄົ້ນຄວ້ານີ້ ແມ່ນອີງໃສ່ປະຫວັດສາດຈີນບູຮານສະໄຫມຣາຊະວົງຮັ່ນ ເຊິ່ງບັນທຶກກ່ຽວກັບອານາຈັກຂອງຄົນປ່າເຖື່ອນ ວ່າມີອານາຈັກຕ້າມຸງ ລຸງ ປາ ແລະອ້າຍລາວ ວ່າເປັນກຸ່ມຂອງຄົນທີ່ເວົ້າພາສາໄຕ ແລະທິດສະດີນີ້ຍັງມີຄວາມສໍາພັນກັບອານາຈັກນ່ານເຈົ້າອີກນໍາ ໂດຍພວກອ້າຍລາວເປັນຜູ້ສະຖາປະນາຂຶ້ນພາຍຫລັງນະຄອນລຸງນະຄອນປາ ແລະນະຄອນງ້ຽວຖືກຈີນຕີແຕກ, ຕໍ່ມານ່ານເຈົ້າ ກໍຖືກມົງໂກນຮຸກຮານແລ້ວລົງມາທາງໃຕ້ ມາສ້າງລັດຂອງຕົນໃນແຫລມອິນດູຈີນ, ສົມມຸດຖານນີ້ໄດ້ຮັບການຄັດຄ້ານຢ່າງຫນັກຈາກການຄົ້ນຄວ້າດ້ານຊາດພັນວິທະຍາ ແລະພາສາສາດ, ເພາະວ່າພວກທີ່ໃຊ້ພາສາຕະກຸນໄຕນີ້ ເປັນພວກດຽວກັບພວກທີ່ເຮັດນາດໍາເປັນຫລັກ ດັ່ງນັ້ນກຸ່ມເດີມຂອງຄົນພວກນີ້ຕ້ອງພວກທີ່ຢູ່ເຂດຮ້ອນແລະຊຸ່ມຊື້ນຫລາຍກວ່າ ບໍ່ແມ່ນຍ້າຍລົງມາຈາກເຫນືອ. ນອກຈາກນັ້ນ ການສໍາຫລວດທາງດ້ານຈົດຫມາຍເຫດຈີນທັງຫມົດ ພົບວ່າບໍ່ເຄີຍມີຄົນປາກພາ ສາຕະກຸນໄຕຢູ່ທາງຕອນເຫນືອຂອງຈີນມາກ່ອນ ແລະບໍ່ມີແມ້ແຕ່ການອົບພະຍົບຂອງຜູ້ຄົນທີ່ຫນີການ ຄອບງໍາຂອງຈີນ ແລະນະໂຍບາຍຈີນກໍບໍ່ເຄີຍມີການຂັບໄລ່ຜູ້ຄົນ ມີແຕ່ສົງຄາມທີ່ຕ້ອງການຍຶກຄົນໄວ້ໃນຄອບຄອງ. ໂດຍສະເພາະພາສາສ່ວນໃຫຍ່ໃນ ອານາຈັກນ່ານເຈົ້ານັ້ນບໍ່ແມ່ນພາສາໄຕ ຕະຫລອດຈົນຂະນົບທໍານຽມປະເພນີແລະວັດທະນະທໍາຂອງນ່ານເຈົ້າກໍບໍ່ໄດ້ໃກ້ຄຽງກັບພວກຄົນກຸ່ມໄຕ. ການສືບເຊື້ອ ແບບຟີລໍ້ໂກະ

ໂກະລໍ້ພົງ ພົງຕາອີ້ ຕາລີ້ຝູ ກໍບໍ່ແມ່ນຂອງໄຕ ແຕ່ເປັນຂອງເຜົ່າໂລໂລ. ທິດສະດີນາຍຫມໍດອດຈຶ່ງຖືກປະຕິເສດ.

3. ກຸ່ມເດີມຂອງ ໄທ-ລາວຢູ່ພາກກາງຈີນ ແລະລຸ່ມນ້ຳຮວງໂຫ ແລະແຍ່ງຊີກຽງຕອນກາງ, ອັນນີ້ເປັນທິດສະດີທີ່ເກົ່າແກ່ທີ່ສຸດທິດສະດີຫນຶ່ງ ຈາກນັ້ນຄົນຈຶ່ງລົງມາຕັ້ງອານາຈັກນ່ານເຈົ້າ, ໃນຂະນະນີ້ພວກຈີນຍັງຢູ່ລຸ່ມນ້ຳຮວງໂຫຕອນບົນ, ແຕ່ທິດສະດີນີ້ ຖືກນັກພາສາດຊື່ Chamberlin ຫັກລ້າງໄປແລ້ວ.

4. ໄຕ-ລາວ ມີກຸ່ມເດີມຢູ່ມົນທົນຍູນນານ ແລະທິດຕາເວັນຕົກສຽງໃຕ້ຂອງຈີນ, ທິດສະດີນີ້ ສະເຫນີຢູ່ໃນຫນັງສືຊື່ The Thai People ໂດຍອີງໃສ່ທິດສະດີການຈັດກຸ່ມ ພາສາໄຕ-ກະໄດ-ອິນໂດນີເຊັຍ ແລະເຊື່ອວ່າ ກຸ່ມຄົນພາສາໄຕຕ້ອງຢູ່ໃນເຂດຮ້ອນ ແລະຊຸ່ມຊື້ນ ແລະທັງຍັງເຊື່ອວ່າພວກ ນີ້ຈະຕ້ອງ ອົບພະຍົບຂຶ້ນເຫນືອ ໂດຍໄປຈາກທິດໃຕ້, ທິດສະດີນີ້ໄດ້ຮັບການສະນັບສະຫນູນຈາກ ເອກະສານບູຮານຂອງລາວ ເຊັ່ນ ອຸລັງຄະທາດ ກໍວ່າເມື່ອຮ້ອຍເອັດແຕກແລ້ວ ຄົນກໍອົບພະຍົບ ຂຶ້ນເຫນືອລວມມີ 11 ກຸ່ມໃຫຍ່, ສ່ວນຂູນບໍຣົມກໍວ່າໄດ້ສົ່ງໂອລົດ ຊື່ ຍີ່ຜາລ້ານ ໄປຢູ່ຫໍແຕ້.

5. ກຸ່ມເດີມຂອງໄຕລາວຢູ່ບໍລິເວນຕອນໃຕ້ຂອງຈີນຕອນເຫນືອຫວຽດນາມ ແລະຕອນເຫນືອລາວ, ອັນນີ້ເປັນສົມມຸດຖານທີ່ເປັນທີ່ຫນ້າເຊື່ອຖືຫລາຍທີ່ສຸດ ແລະມີຂໍ້ມູນຫລາຍສາຂາສະນັບສະຫນູນ ຄື: ຫລັກຖານດ້ານມະນຸດວິທະຍາ ກ່ຽວກັບການດຳລົງຊີວິດຂອງຄົນໄຕ-ລາວວ່າກຸ່ມຄົນ ພວກນີ້ຈະອາໄສຢູ່ທີ່ຮາບທຸ່ງເຂົາມັກເຮັດນາດຳແລະປຸກພືດເມືອງຮ້ອນ ແລະເປັນພວກທີ່ມາ ຈາກເຂດຮ້ອນ ຫລາຍກວ່າຈະມາຈາກທາງເຫນືອ ດັ່ງນັ້ນພວກນີ້ຈຶ່ງອາດຈະມີກຸ່ມເດີມ ຢູ່ທີ່ມົນ ທົນກວາງສີແລະກວາງຕຸ້ງ.

ຫລັກຖານທາງພາສາສາດທັ້ງຂອງ Benedict, gedney ແລະ Chamberlin ຕ່າງກໍຢັ້ງຢືນວ່າ ບໍລິເວນນີ້ເປັນກຸ່ມກຳເນີດຂອງຄົນຕະກຸນພາສາ "ໄຕ".ຫລັກຖານດານພົງສາວະດານແລະປະຫວັດສາດ ກໍເຊື່ອວ່າໄຕ-ລາວ ຄົນໄຕ-ລາວ ຢູ່ຕອນໃຕ້ຂອງຈີນແລະຕອນເຫນືອຂອງຫວຽດນາມ, ການແຜ່ຂະຫຍາຍພາສາໄຕ ແມ່ນໃນ ສະຕະວັດທີ່ 8 ແລ້ວມີການຂະຫຍາຍຕົວຂຶ້ນເປັນລຳດັບ ຈາກນັ້ນກໍມີການອົບພະຍົບ ຈາກຕາເວັນອອກໄປ ຕາເວັນຕົກ.

6. ກຸ່ມເດີມຂອງລາວແມ່ນຢູ່ລຸ່ມແມ່ນ້ຳຂອງຕອນກາງນີ້ເອງ, ອັນນີ້ເປັນສົມມຸດຖານໃຫມ່ລ່າສຸດທີ່ໄດ້ອີງໃສ່ຫລັກຖານທາງດ້ານບູຮານຄະດີ ແລະກາຍະວິພາກ ໂດຍມີການສຶກສາປຽບທຽບໂຄງກະດູກ ລະຫວ່າງຄົນສະໄຫມກ່ອນແລະປະຈຸບັນ ພົບວ່າຄ້າຍຄືກັນ ອັນນີ້ມີຫລັກຖານຈາກຜົນງານ ການວິໄຈ ມະນຸດກ້ຳຜາເລີຍ ແລະ ຜົນງານຂອງນາຍ

ແພດສຸດ ແສງວິຊຽນຂອງໄທ. ແຕ່ສົມມຸດຖານນີ້ ຍັງຂາດການຍອມຮັບດ້ານພາສາ ແລະວັດທະນະທຳ ເພາະຍາກທີ່ຈະກຳນົດໄດ້ວ່າຄົນເຫລົ່ານັ້ນ ປາກພາສາຫຍັງກັນແທ້.

ທັງ 6 ສົມມຸດຖານນັ້ນ, ສົມມຸດຖານ 3-6 ມີຄຸນຄ່າທີ່ຈະຕ້ອງສຶກສາທາງດ້ານວິຊາການເພາະມັນອີງ ໃສ່ຂໍ້ມູນດ້ານພາສາສາດ ບູຮານຄະດີ ປະຫວັດສາດ ແລະມະນຸດວິທະຍາ, ໂດຍສະເພາະແມ່ນສົມມຸດ ຖານທີ່ 5 ແມ່ນໄດ້ຮັບການຍອມຮັບຫລາຍທີ່ສຸດ.

ດັ່ງນັ້ນ ເຮົາອາດເວົ້າໄດ້ວ່າ ຫລວງພະບາງ ກໍຄືພາກເຫນືອລາວ ຄືຕົ້ນກຳເນີດຂອງແຫລ່ງ ອາລະຍະທຳຂອງລາວ ມາແຕ່ດົນນານແລ້ວຈຶ່ງຄົງບໍ່ມີຫຍັງຜິດພາດ.

ເຖິງຢ່າງໃດກໍຕາມ ເມື່ອຮູ້ວ່າລາວເຮົາມີກົກກຳເນີດຢູ່ບໍລິເວນລຸ່ມນ້ຳຂອງນີ້ແລ້ວ ສິ່ງທີ່ຈະຕ້ອງ ພິຈາລະນາຕໍ່ໄປກໍຄື ການແຜ່ຂະຫຍາຍຂອງອາລະຍາທຳອິນເດັຍແລະຈີນເຂົ້າສູ່ຂົງເຂດລຸ່ມ ແມ່ນ້ຳຂອງ ແລະການຜະສົມຜະສານກັບວັດທະນະທຳດັ້ງເດີມ ຂອງຄົນແຖບນີ້ ເຊິ່ງໄດ້ກໍ່ໃຫ້ເກີດຮາກຖານທາງດ້ານວັດທະນະທຳໃນລຸ່ມແມ່ນ້ຳຂອງ. ໂດຍສະເພາະແມ່ນມັນກໍ່ໃຫ້ເກີດ ເປັນນະຄອນລັດຂຶ້ນ ຢ່າງກວ້າງຂວາງໃນແຖບນີ້.

Marxist History: ເປັນທັດສະນະທີ່ເນັ້ນຫນັກການຂະຫຍາຍຕົວຂອງ 5 ລະບອບສັງຄົມ ທີ່ເວົ້າວ່າ ສັງຄົມແມ່ນຕ້ອງຜ່ານ 5 ລະບອບຈາກສັງຄົມປະຖົມບູຮານ ມາສູ່ຂ້າທາດ ສັກດີນາ ນາຍທຶນ ແລະສັງຄົມຄອມມູນິດ, ເຊິ່ງ 5 ລະບອບສັງຄົມ ນີ້ແມ່ນເປັນທີ່ເຂົ້າໃຈກັນຫມົດໃນລາວ ເພາະຄົນລາວ ເກືອບທຸກຄົນໄດ້ຜ່ານການຮຽນຮູ້ 5 ລະບອບສັງຄົມນີ້ແລ້ວ ຕອນປົດປ່ອຍໃຫມ່ໆ ໂດຍສະເພາະບັນດານັດທິດສະດີທັງຫລາຍ ແຕ່ຈຸດພິເສດແມ່ນຄວນ ເບິ່ງຄືນ ແບບວິທີການຜະລິດອາຊີ ຂອງມາກ ທີ່ເນັ້ນວ່າບໍ່ມີລະບອບຂ້າທາດໂດຍກົງໃນອາຊີ ເຊິ່ງອັນນີ້ແຕກຕ່າງຈາກໃນຢູໂຣບ.

Modernist History: ເປັນທັດສະນະປະຫວັດສາດທີ່ເນັ້ນຫນັກວິທີວິທະຍາປະຫວັດສາດຕາມຫລັກການ Historical Research ການນຳໃຊ້ຂໍ້ມູນ ຫລັກຖານ ເອກະສານຢ່າງຖືກຫລັກການແລະ ຜ່ານການວິໄຈໄຈ້ແຍກຢ່າງເປັນລະບົບແລ້ວຈຶ່ງເຊື່ອຖືເອົາໄດ້.

ສະນັ້ນ ຈຶ່ງກ່າວໄດ້ວ່າການຂຽນປະຫວັດສາດລາວຜ່ານມາ ແມ່ນຂຽນແບບຕາບອດຄຳຊ້າງ ຄືຖືກຫມົດທຸກທັດສະນະ ຖືກແຕ່ບໍ່ແມ່ນ ແລະແມ່ນແຕ່ບໍ່ຖືກ, ເພາະຜູ້ຄຳຖືກຂາ ຖືກງາ ຖືກງວງ ຖືກຫູ ຖືກຫາງ ຖືກຂ້າງ ກໍບອກວ່າຊ້າງຄືສູບ ຄືດ້າມພ້າ ຄືທ່ອນກ້ວຍ ຄືວີ ຄືຟອຍ ຄືຝາເຮືອນ, ປະຫວັດສາດລາວກໍຄືກັນແລ້ວແຕ່ການຄົ້ນຄວ້າ ທັດສະນະຈຶ່ງແຕກຕ່າງກັນ ເພື່ອແກ້ໄຂບັນຫານີ້ໄດ້ນັ້ນ ຕ້ອງໃຫ້ຜູ້ຄຳຊ້າງໄດ້ຄຳໄປຫມົດທຸກບ່ອນ ແລະໄດ້ຄຳສັດຕົວອື່ນພ້ອມ ຈຶ່ງຈະຮູ້ວ່າຊ້າງແມ່ນຫຍັງແທ້, ດີແທ້ຕ້ອງໄດ້ໃຊ້ຊີວິດຕິດພັນກັບຊ້າງດົນນານ ຈຶ່ງຈະຮູ້ນິດໄສຊ້າງ ຮູ້ຊີວິດຊ້າງ ຮູ້ຄວາມຊ້າງສຸດທ້າຍກໍຈະຮູ້ວ່າແທ້ຈິງນັ້ນຊ້າງແມ່ນຫຍັງ, ປະ

ຫວັດສາດລາວກໍເຊັ່ນດຽວກັນ ຕ້ອງມີຂໍ້ມູນຫລັກຖານຈາກຫລາຍແຫລ່ງ ຕ້ອງຮູ້ຂອງປະເທດເພື່ອນບ້ານດີແລະກໍຕ້ອງໃຊ້ເວລາອົດທົນຄົ້ນຄວ້າຈຶ່ງຈະເຂົ້າໃຈແຈ້ງດີຂຶ້ນ. ເຊິ່ງປະຫວັດສາດລາວເຫລັ້ມປະຈຸບັນແມ່ນ ໄດ້ນຳໃຊ້ຫລັກການອັນນີ້ ຈຶ່ງພໍເຂົ້າໃຈໄດ້ເຖິງການຂະຫຍາຍຕົວຂອງສັງຄົມລາວເລີ່ມມາແຕ່ສັງຄົມປະຖົມບູຮານເປັນລຳດັບມາ, .ໂດຍມີຫລາຍເຜົ່າພັນປະກອບກັນ ແລະກ້າວເຂົ້າສູ່ການເປັນລັດຊາດຢ່າງເຕັມສ່ວນ ໃນສະໄໝ ລ້ານຊ້າງ.

**ຈຸດທີສີ່** ຄືຄວາມຮັກຊາດ ຫລືຊາດນິຍົມ, ທີ່ມັກອ້າງເຖິງຢູ່ໃນຫລາຍປະເທດໃນປະຈຸບັນ, ທັງນີ້ກໍຍ້ອນມັນມີຜົນດີຫລາຍປະການຕໍ່ຊາດນັ້ນໆ ຂ້າພະເຈົ້າຈຶ່ງຂໍສະເໜີທ່ານລອງໆພິຈາລະນາເບິ່ງຊື່ໆ ເຊິ່ງມັນກໍມີລັກສະນະຄ້າຍໆກັບທັດສະນະປະຫວັດສາດ ຄືມັນຕິດພັນກັບແຕ່ລະໄລຍະປະຫວັດສາດ, ແຕ່ມັນກໍມີບາງຈຸດແຕກຕ່າງທີ່ຄວນໄຈແຍກ ເບິ່ງໃຫ້ລັກແນ່ວ່າອັນຄວາມຮັກຊາດຫລືຊາດນິຍົມຂອງເຮົານັ້ນ ມັນຄວນແມ່ນແນວໃດແທ້, ເຊິ່ງພໍສະລຸບຂະບວນວິວັດຂອງມັນໄດ້ດັ່ງນີ້:

Royal Nationalism ຮັກຊາດແບບສັກດີນາ, ຕົວຢ່າງຂອງລາວເຮົາ ຈະເທີດທູນວົງກະສັດ ໂດຍສະເພາະວົງຂູນບໍຣົມວ່າສູງສົ່ງ, ຣາຊະວົງອື່ນກ່ອນນັ້ນ ຈະບໍ່ໃຫ້ຄວາມນັບຖື, ເຊັ່ນມັກອ້າງວ່າເຮົານີ້ຫາກແມ່ນເຊື້ອສາຍມາແຕ່ຂຸນບໍຣົມພຸ້ນດາຍ, ກ້າອ້າງແນວນີ້ແມ່ນຈະໄດ້ຮັບຄວາມຊອບທຳໃນການຂຶ້ນຄອງບັນລັງ. ດັ່ງນັ້ນຣາຊະວົງລ້ານຊ້າງຈຶ່ງແປກກວ່າຣາຊະວົງຂອງປະເທດອື່ນ ຄືຈະສືບເຊື້ອສາຍມາບໍ່ຂາດຕອນຈົນອົງສຸດທ້າຍ ນີ້ເປັນຄວາມຮັກຊາດລາວແບບບູຮານ.

Creole Nationalism ເປັນຄວາມຮັກຊາດຂອງພວກອົບພະຍົບພົ້ນທະເລໄປຢູ່ຕ່າງກິ່ນໃນດິນແດນໃໝ່ ຕົວຢ່າງຄົນຍູໂຣບໄປຢູ່ອາເມລິກາໃນເມື່ອກ່ອນ ຫລື ຄົນຈີນໄປໄຕຫວັນໄປສິງຄະໂປ ກໍເປັນຄວາມຮັກຊາດແບບໃໝ່ ທີ່ຜະສົມຊາດແມ່ກັບຊາດໃໝ ຈົນຕັ້ງເປັນຊາດຂຶ້ນມາໄດ້.

Official Nationalism ຮັກຊາດແບບມາຈາກເບື້ອງເທິງ ເຊັ່ນລະບອບເຈົ້າຂຸນມູນນາຍແມ່ນມີແຕ່ເຮັດຕາມແລະທຳຕາມຈຶ່ງຖືວ່າຮັກຊາດ ເຊັ່ນໃນສະໄໝຝຣັ່ງປົກຄອງ ເມື່ອເຈົ້າຂຸນມຸນນາຍສັ່ງກໍຕ້ອງປະຕິບັດ ບໍ່ເຮັດບໍ່ໄດ້ ແມ່ນບໍ່ຮັກຊາດ ເຊັ່ນເຈົ້າສີສະຫວ່າງວົງເຊີນຝຣັ່ງກັບມາຄອງລາວ ຄົນອື່ນກໍຕ້ອງປະຕິບັດ ອັນນີ້ແມ່ນຮັກຊາດທີ່ຕິດພັນກັບຝຣັ່ງ.

Popular Nationalism ຮັກຊາດແບບປະຊາຊົນຫລືແບບມວນຊົນ ເຊັ່ນການຕໍ່ຕ້ານຝຣັ່ງເຊິ່ງເກີດຂຶ້ນແບບກະແຈກກະຈາຍຂອງມວນຊົນ ໃນທ້ອງຖິ່ນຕ່າງໆ ກ່ອນພັກນຳພາຫລືແມ້ແຕ່ການພາກັນປ້ຳຮູບປັ້ນປາວີອອກໃນມື້ສັງຂານລ່ວງ ປີ 1945 ກຸ້ມລົງຂອງ ຈົນຝຣັ່ງ

ລົງໄປຈົນມາໄວ້ຫນ້າສະຖານທູດອັນນີ້ກໍແມ່ນຄວາມຮັກຊາດແບບມວນຊົນຄືຮັກຊາດ ທີ່ມາຈາກຂ້າງລ່າງ.

Linguistic Nationalism ຮັກຊາດແບບຍຶດກືເອົາພາສາ-ວັນນະຄະດີ ເປັນວັດທະນະທໍາຫລັກຄືເອົາແຕ່ພາສາມາຕັດສິນ ຕົວຢ່າງລັດທິໄທໃຫຍ່ ໃນຊຸມປີ 1930 ແມ່ນຂະຫຍາຍອານາເຂດ ໂດຍຍຶດພາສາໄຕເປັນຫລັກ ໃຜປາກພາສາຕະກຸນນີ້ ຕ້ອງເອົາເຂົ້າເປັນຊາດໄທນໍາກັນ ຈຶ່ງຍົກທັບບຸກຕະບັນທັ່ນແລກ ຕີໄປຮອດຊານສະເຕັດ ຮອດລາວ ແລະບຸກຮອດຂະແມອັນນີ້ແມ່ນຫລົງພາສາ.

Ethnic Nationalism ຮັກຊາດແບບຍຶດຊາດເຜົ່າພັນເປັນຫລັກ ກໍມີຫລາຍບ່ອນ ເຊັ່ນຢູ່ແຖວຢູໂຣບຕາເວັນອອກ ປະເທດຈຶ່ງຕັດແບ່ງເລັກນ້ອຍໄປຕາມກຸ່ມຊາດພັນຂອງໃຜມັນ.

Religion Nationalism ຮັກຊາດແບບຍຶດສາສນາເປັນຫລັກ ຄືເອົາສາສນາເປັນເດີມພັນ ຈຶ່ງເກີດສົງຄາມຢູ່ຕາເວັນອອກກາງມາດົນນານ ເພື່ອແບ່ງແຍກສາສນາ.

Long-distance Nationalism ຮັກຊາດແບບໃຫມ່ທີ່ຫາກໍ່ປາກົດການໃນຍຸກໂກາພິວັດທີ່ຄົນປະເທດຫນຶ່ງໄປຢູ່ປະເທດຫນຶ່ງ ເຊິ່ງເຫີນຫ່າງຈາກມາຕຸພູມຂອງຕົນ ແຕ່ກໍສາມາດນໍາໃຊ້ລະບົບອິນເຕີເນັດ ລະບົບໄອທີແລະອື່ນໆຕິດຕໍ່ພົວພັນຫາຊາດແມ່ໄດ້ສະດວກ ເພື່ອຊອກຮູ້ທຸກຄວາມເຄື່ອນໄຫວຂ່າວຄາວ ເຊັ່ນຄົນລາວຈາກຝຣັ່ງ ອາເມລິກາ ອອສເຕຣເລັຍກໍສາມາດກັບມາປະກອບສ່ວນຮ່ວມກອງປະຊຸມແນວລາວສ້າງຊາດໃນປີນີ້.

Realistic Nationalism ຄວາມຮັກຊາດຫລືຊາດນິຍົມທີ່ແທ້ຈິງແມ່ນຫຍັງ ອັນນີ້ແມ່ນບັນຫາໃຫຍ່ທີ່ຄວນຄໍານຶງເຖິງ ຂ້າພະເຈົ້າຄິດວ່າສໍາລັບຄົນລາວພວກເຮົາແລ້ວ ນໍ້າໃຈຮັກຊາດທີ່ຖືກຕ້ອງກໍມີແຕ່ ນໍ້າໃຈຮັກຊາດທີ່ຕິດພັນກັບສອງພາລະບົດບາດປົກປັກຮັກແລະ ສ້າງສາພັດທະນາປະເທດຊາດຂອງເຮົາ ຈຶ່ງຈະຖືວ່າຮັກຊາດແທ້, ຄືຕ້ອງອອກແຮງປົກປັກຮັກສາບໍ່ໃຫ້ສັດຕູມາຮຸກຮານປະເທດຊາດບ້ານເມືອງ ແລະຕ້ອງເຮັດພາລະຫນ້າທີ່ຂອງຕົນທີ່ໄດ້ຮັບມອບຫມາຍໃຫ້ດີທີ່ສຸດບໍ່ໃຫ້ບົກຜ່ອງຄືຕ້ອງເຮັດດ້ວຍຄວາມສື່ສັດສຸດຈະຣິດ ເຕັມຄວາມຮູ້ຄວາມສາມາດຂອງຕົນ ທັງມີນໍ້າໃຈ ມີຄຸນນະທໍາ ບໍ່ສໍ້ຣາດບັງຫລວງ ທ່ຽງທໍາ ບໍ່ອິດສາບັງບຽດຄຽດຂົມ ຂົ່ມເພັ່ງຍໍໂຕ ເຫັນແກ່ໄດ້ພຽງຢ່າງດຽວ ຕ້ອງເບິ່ງຄວາມພໍເຫມາະພໍດີບໍ່ແມ່ນຖືກຍົກຍ້າຍຫນ້າທີ່ ຫລືບໍ່ໄດ້ຫນ້າທີ່ກໍໂກດແຄ້ນ ຂຽນໃບສິນເທ່ ສ້າງຄວາມສັບສົນປັ່ນປ່ວນ ຖ້າເຮັດແນວນັ້ນຈະຖືວ່າຮັກຊາດໄດ້ແນວໃດ ຜິດທັງທິດທາງແນວທາງຂອງພັກ-ລັດເຮົາ.

ທີ່ຍົກມາເປັນຕົວຢ່າງນີ້ ກໍເພື່ອເປັນອຸທາຫອນໃຫ້ພວກເຮົາໄດ້ລົ້ນຄິດເຖິງ ຄວາມຮັກຊາດຂອງເຮົາ ເພື່ອໃຫ້ງ່າຍຕໍ່ການຕີຄວາມ ບໍ່ຜ້າວດ່ວນເຫມົາເອົາວ່າຕົນເອງຖືກ ໂດຍຂາດ

ການຄົ້ນຄິດ ດັ່ງນັ້ນເພື່ອຄວາມຮອບຄອບຕ້ອງໄດ້ພິຈາລະນາທຸກໆສະພາບແວດລ້ອມດ້ານເສດຖະກິດ ການເມືອງ ສັງຄົມ ປະຫວັດສາດໃຫ້ດີເສັຍກ່ອນ ຍິ່ງໃນຍຸກໂລກາພິວັດນີ້ມັນຍິ່ງເກີດການຜະສົມປົນເປກັນຫລາຍຂຶ້ນ ຍິ່ງຄວນຕ້ອງວິເຄາະຢ່າງລະມັດລະວັງເພາະການປ່ຽນແປງຂອງອົງເຂດຈະເກີດຂຶ້ນໄວ.

## II. ບາງບັນຫາປະຫວັດສາດລາວ

ບັນຫາໃນປະຫວັດສາດລາວ ແມ່ນມີຫລາຍບັນຫາທີ່ຈະຕ້ອງໄດ້ຮັບການຄົ້ນຄວ້າ ແລະກໍຕ້ອງເຂົ້າໃຈວ່າການຄົ້ນຄວ້ານັ້ນ ແມ່ນບໍ່ມີທາງສິ້ນສຸດເປັນຈັກເທື່ອ ສະນັ້ນນັກຄົ້ນຄວ້າສ່ວນຫລາຍ ຈະບໍ່ຕາຍໄຕກັບຜົນງານ ເພາະເມື່ອມີຂໍ້ມູນໃຫມ່ທີ່ສາມາດມາປະຕິເສດອັນເກົ່າໄດ້ ອັນເກົ່ານັ້ນກໍຫລ້າຫລັງໄປ ອັນນີ້ເປັນທຳມະດາ ໂດຍສະເພາະການຄົ້ນຄວ້າປະຫວັດສາດ ຍິ່ງຮຸນແຮງ ເພາະຂໍ້ມູນມີຫລາຍຂຶ້ນໃນຍຸກໂລກາພິວັດ ຫລືຍຸກທີ່ຂໍ້ມູນຂ່າວສານບໍ່ມີພົມແດນ ສະນັ້ນ ການຄົ້ນພົບໃຫມ່ໆຈະປາກົດອອກມາ ພວກເຮົາຕ້ອງເປີດໃຈກວ້າງຮັບຟັງຂໍ້ມູນ ເຫດຜົນ ຢ່າໄປຫລົງເຊື່ອແຕ່ອັນເກົ່າ ຕ້ອງຟັງຂໍ້ມູນໃຫມ່ແລ້ວຮີບຕອງ ຍິ່ງບັນຫາສົງຄາມໃນສະໄຫມເຈົ້າອະນຸວົງ ກໍຍິ່ງຄວນຄົ້ນຄິດກ່ອນເຊື່ອ ເພາະການບິດເບືອນປະຫວັດສາດມີມາກມາຍ ການຂີດຂຽນມີມາກ ທັດສະນະແຕກຕ່າງກັນ ຈຶ່ງບໍ່ຄວນຕິດໃນຕຳລາ.

ບັນຫາປະຫວັດສາດລາວທີ່ຈະສະເຫນີນີ້ ແມ່ນຈະຍົກເອົາ ບາງບັນຫາທີ່ຫນ້າສົນໃຈລະຫວ່າງປະຫວັດສາດລາວ-ໄທ ທີ່ເຫັນວ່າມີຂໍ້ຫນ້າສົງໃສ ຫລືຄວນລົງເລິກຄົ້ນຄວ້າຕື່ມເພາະຄວາມເຂົ້າໃຈຜ່ານມານັ້ນອາດຈະຄາດເຄື່ອນໄດ້:

1. ຫນອງແສ ເຊິ່ງນິທານອຸບບໍຣົມວ່າແມ່ນກົ່ງເດີມຂອງພວກນາກ 15 ຕະກຸນ ແລະນິທານອຸຣັງຄະທາດກໍວ່າ ມີນາກ 13 ຕະກຸນອາໄສຢູ່. ນາກພວກນີ້ເປັນເຈົ້າຂອງກົ່ງເດີມໃນລຸ່ມແມ່ນ້ຳຂອງ, ນິທານໄດ້ກ່າວວ່າ ໃນຫນອງກະແສແສນຍ່ານນີ້ ມີນາກສອງໂຕເປັນສຽວກັນ ນາກຢູ່ຫົວຫນອງແສ ຊື່ພິນໂຍທະນະນາກ (ນາກແຫ່ງໂຍນົກນາຄະພັນ) ນາກຢູ່ທ້າຍຫນອງຊື່ ທະນະມູລະນາກ ແລະນາກຕົວນີ້ຍັງມີຫລານ ຊື່ວ່າຊີວະນາກ, ນາກສອງໂຕຜິດກັນຍ້ອນການແບ່ງປັນຊີ້ນຊ້າງແລະຊີ້ນເຫມັ່ນ, ທະນະມູລະນາກໄດ້ຊີ້ນຊ້າງແບ່ງປັນໃຫ້ ພິນໂຍທະນະນາກຈົນເຕັມທາບເຕັມຄອນ ເຫລືອກິນເຫລືອຢູ່, ບາດວ່າພິນໂຍທະນະນາກໄດ້ຊີ້ເຫມັ່ນ ແບ່ງປັນໃຫ້ທະນະມູລະນາກພຽງເລັກນ້ອຍບໍ່ພໍ ປີ້ນບໍ່ພໍແຈວບໍ່ພໍກິນ, ຈຶ່ງເກີດບັນດານໂທສະເຮັດ ສົງຄາມໃຫຍ່ລະຫວ່າງນາກສອງຕົວທີ່ຢູ່ຫົວຫນອງ ແລະທ້າຍຫນອງ, ເຮັດໃຫ້ບັນດານາກທີ່ຢູ່ກາງຫນອງ ໄດ້ຮັບຄວາມເດືອດຮ້ອນ ເຊັ່ນ ສຸວັນນະນາກຢູ່ສຸວັນນະພູມ, ກຸດໂທປາປະນາກ ຢູ່ຫນອງບົວບານ, ປັບພາສະນາກ ຢູ່ພູເຂົາຫລວງ,

ສຸຂະທັດກຸີບາກ ຢູ່ໂພນສັນ, ຂະທັດກຸີບາກ ຢູ່ເວີນສຸກ, ພະຍາບັນທະກາງຣີສີສັດຕະນາກ ຢູ່ດອຍບັນທະກາງຣີ ເປັນໃຫຍ່ກວ່ານາກທັງມວນ. ດັ່ງນັ້ນ ກ້າອີງຕາມເອກະສານ ອຸຣັງຄະທາດແລະນິທານຂຸນບໍຣົມຊົນເຜົ່າດັ່ງເດີມຂອງລຸ່ມແມ່ນ້ຳຂອງແມ່ນພວກນາກ, ແຕ່ ມີເອກະສານຈຳນວນຫລາຍຂອງໄທວ່າຫນອງແສ, ຫນອງກະແສ ຫລື ຫນອງກະແສແສນ ຍ່ານນັ້ນ ແມ່ນຢູ່ຕາລີໃນຢູນນານຂອງຈີນ, ແຕ່ອຸຣັງຄະທາດວ່າແມ່ນນ້ຳຂອງເຮົານີ້ເອງ.

2. ອ້າຍລາວ ກໍແມ່ນອີກຄຳຫນຶ່ງທີ່ ແປກປະຫລາດທີ່ສຸດ ຄືເອກະສານດັ້ງເດີມລາວ ບໍ່ເຄີຍກ່າວເຖິງ ຄຳວ່າອ້າຍລາວເລີຍ, ມີແຕ່ຄຳວ່າ ລາວ ລາວເກົ່າ ລາວລ້ານຊ້າງ ເມືອງລາວ ແຕ່ຄຳວ່າອ້າຍລາວ ຊ້ຳບໍ່ພໍ້ຄຳນີ້ ອັນນີ້ຫມາຍເຖິງວ່າ ກ້າສຶກສາຢ່າງຈິງຈັງ ຈາກເອກະສານເດີມແທ້ໆແລ້ວໃນໃບລານ ບໍ່ມີຄຳວ່າອ້າຍລາວເລີຍ, ແຕ່ເອກະສານໄທ ແລະຫລາຍເອກະສານວ່າ ອ້າຍລາວເປັນຊົນຊາດຫນຶ່ງ ທີ່ເຄື່ອນຍ້າຍມາແຕ່ເຫນືອຊົນຊາດ ນີ້ເຄີຍສົ່ງບັນນາການໃຫ້ຈີນແລະຍົກຍ້າຍກາຍມາເປັນລາວ. ແຕ່ເອກະສານປະກົມພູມແທ້ໆ ອັນເປັນເອກະສານທີ່ຄວນເຊື່ອຖືໄດ້ນັ້ນບໍ່ເວົ້າເຖິງຈຶ່ງຄວນພາກັນເບິ່ງຄືນໃຫມ່ໃນຂໍ້ນີ້.

3. ລູກຊາຍຂູນບໍຣົມທັງ 7 ຄົນທີ່ກຸືກສົ່ງໄປ ສ້າງບ້ານແປງເມືອງໃນ 7 ເມືອງນັ້ນ, ຄືຂຸນລໍ ໄປຄອງເມືອງຊວາ, ຂຸນຍີ່ຜາລານ ໄປຄອງຫໍແຕ, ສາມຈຸສົງ ໄປຄອງພິມາຍ (ຈຸລະນີພົມມະທັດ) ບໍ່ແມ່ນຕົງແກງຢູ່ຫວຽດນາມ, ຂຸນໄຊພົງ ຫລືໄສຜົງ ໄປຄອງເມືອງຍວນ ຫລືໂຍນົກນາຄະພັນ, ຂຸນງົວອິນ ໄປຄອງອະໂຍທະຍາ, ລົກກົມ ໄປຄອງຄຳເກີດ ຫລືສີໂຄດ ຕະບອງ, ບໍ່ແມ່ນມອນຫລືຫົງສາດັ່ງຫລາຍທ່ານເຂົ້າໃຈ, ເຈັດເຈືອງໄປຄອງຊຽງຂວາງ.

4. ບ້ານພີ່ເມືອງນ້ອງ, ຂຸນບໍຣົມໄດ້ສັ່ງອ້າຍນ້ອງທັງ 7 ຄົນ, ວ່າ "ເມືອງອ້າຍ ໄວ້ແກ່ອ້າຍ ເມືອງນ້ອງໄວ້ແກ່ນ້ອງຢ່າຂີ່ ຊ້າງຕົກນາ ຢ່າພາແພນຕົກທົ່ງ" ຄືຢ່າຮຸກ ຮານກັນແລະເອີ້ນການພົວພັນທັງຫມົດເປັນບ້ານພີ່ເມືອງນ້ອງຕັ້ງແຕ່ນັ້ນມາ, ເຊິ່ງຫມາຍ ເຖິງຂຸນລໍເປັນອ້າຍໃຫຍ່, ແຕ່ປະຈຸບັນນີ້ການໃຊ້ຄຳນີ້ຮູ້ສຶກຈະຜິດໄປຈາກ ເຈດຕະນາເດີມ ຂອງຂຸນບໍຣົມ, ເຮັດໃຫ້ເກີດຄວາມສັບສົນ ໂດຍຄວາມເປັນອ້າຍເປັນນ້ອງໄດ້ກັບມາຂຶ້ນຢູ່ກັບ ເສດຖະກິດ ເຊັ່ນຝ່າຍໄທມັກເວົ້າວ່າລາວເປັນນ້ອງ ໄທເປັນອ້າຍໃຫຍ່ ຍ້ອນມີຄວາມຈະ ເລີນກວ່າ, ແຕ່ກ້າພວກເຮົາສຶກສາທີ່ມາດັ່ງເດີມຂອງບ້ານພີ່ເມືອງນ້ອງນັ້ນ ຈະເຫັນວ່າມາ ຈາກຕົ້ນກຳເນີດຂອງການເກີດ, ຜູ້ເກີດກ່ອນກໍເປັນອ້າຍເປັນພີ່, ການພົວພັນລະຫວ່າງ ສອງປະເທດ ລາວ-ໄທ ຫລື ລະຫວ່າງລ້ານຊ້າງ-ລ້ານນາ ນັ້ນ ມັນແມ່ນການ ພົວພັນ "ແບບບ້ານພີ່ເມືອງນ້ອງ" ຫລື ການພົວພັນ "ຮ່ວມສາຍເລືອດດຽວກັນ", ເຊິ່ງມີມາ ແຕ່ດັ້ງເດີມ, ຈຸດນີ້ຫນ້າຈະເປັນຈຸດສຳຄັນທີ່ຄວນເບິ່ງຄືນ.

5. ການຕີລາຄາຈາຣຶກ ຢູ່ທີ່ກ້ຳນາງອັ່ນ ແຂວງຫລວງພະບາງ, ເຊິ່ງຂຽນວ່າ "ພໍ່ພຣະຍາ ພຣະໂມຫະອະທະ ພຣະມັກຕະບະ ໃສ່ໄທ (ຫີນ)ໃສ່ໃນ(ນີ້)", ແຕ່ວ່າ ບາງນັກວິຊາການໄທ ຕີລາຄາວ່າ ຈາຣຶກນີ້ຮຽນແບບຈາກ ຈາຣຶກສຸໂຂໄທ ເພາະອັກສອນແບບດຽວກັນ, ແຕ່ນັກວິຊາການລາວກໍຍັງສົງໄສຢູ່ວ່າໃຜໃຊ້ກ່ອນໃຊ້ຫລັງ ເພາະຈາຣຶກ ສຸໂຂທັຍບອກວ່າ "ແຕ່ກ່ອນລາຍສືໄທບໍ່ມີ ພໍ່ຂຸນຣາມໃສ່ໄວ້ຈຶ່ງມີ" ກໍສະແດງວ່າຈາຣຶກນີ້ຫາກໍ່ແຕ່ງຂຶ້ນ, ສ່ວນຈາຣຶກກ້ຳນາງອັ່ນ ເປັນອັກສອນທີ່ວິວັດທະນາການແລ້ວຈຶ່ງຫນ້າຈະເປັນຕົ້ນແບບໃຫ້ຈາຣຶກສຸໂຂໄທ, ອັນນີ້ຍັງບໍ່ທັນເວົ້າເຖິງຈາຣຶກຣາມຄຳແຫງວ່າປອມຫລືເທັດ, ເພາະວ່າ ຕາມຫລັກການຈາຣຶກທົ່ວໄປໃນລາວ ຈະບອກສະເພາະເລື່ອງການບໍລິຈາກທີ່ດິນຂ້າໂອກາດເທົ່ານັ້ນ ຈະບໍ່ເວົ້າການເມືອງ ເສດຖະກິດ, ສັງຄົມ ຢ່າງມາກມາຍແບບຈາຣຶກສຸໂຂໄທ ເຊັ່ນ ໃຜໃຄ່ຄ້າຊ້າງ ຄ້າມ້າຄ້າ, ຊາວລາວກາວ ໄທອູໄທຂອງມາອອກເປັນຕົ້ນ, ແຕ່ຖ້າເບິ່ງຮູບແບບການລຽງສະລະພະຍັນຊະນະແບບຍຸໂລບ ຍິ່ງຫນ້າຄິດວ່າປອມແທ້. ສ່ວນການ ນັບຖືຜີກະພົງ ຢູ່ສຸໂຂໄທ ກໍແມ່ນອັນດຽວກັນ ອ້ອຍຕ້ອຍກັບການ ຖືຜີເຊື້ອເຮືອນ ເຊື້ອບ້ານ ເຊື້ອເມືອງ ຢູ່ຊຽງດົງຊຽງທອງ ດັ່ງນັ້ນເມື່ອພິຈາລະນາໂດຍຮອບແລ້ວ ອັກສອນກ້ຳນາງອັ່ນ ນ່າຈະເປັນຕົວແບບໃຫ້ອັກສອນຣາມຄຳແຫງ.

6. ເອກະສານຝ່າຍລ້ານນາຈະເວົ້າເຖິງຕອນທ້າຍສະໄຫມພະໄຊຍະຈັກກະພັດ ຫລືໃນປີ 1479 ວ່າແກວມາຕີກເມືອງຊວາ ຊວາຣົບແກວ ແກວຂ້າມທີ່ເມືອງຊວາ ມາເຖິງສີມາເມືອງນ່ານ ມີເຈົ້າບົວສາມເປັນແມ່ທັບ ຖືກທ້າວຂາກ່ານຂ້າຕາຍ ສົງຄາມນີ້ມາຮອດພຽງເມືອງນ່ານ, ແລະນ່ານຕໍ່ຕ້ານຈົນແກວຕ້ອງຖອຍກັບໄປແລະຍັງວ່າ ປີ 1480 ພະເຈົ້າຕິໂລກະຣາດ ຂະຫຍາຍອານາເຂດໄປເມືອງນ່ານແຜ່ປົກປ້ອງລ້ານຊ້າງຫລວງພະບາງ ຈາກໄດຫວຽດເປັນການຊ່ວຍພະຍາຊ້າຍຂວາກະສັດລາວຈາກດາຍຫວຽດແລະໃຫ້ຄອງຊຽງທອງ.

ເບິ່ງແລ້ວເຫັນວ່າເປັນຄວາມສຳພັນຊ່ວຍຣົບ ເມື່ອຖືກດາຍຫວຽດທຳລາຍ ເມືອງຫລວງພະບາງ, ກະສັດຫລວງພະບາງຕ້ອງ ໄປຕັ້ງຕົວຢູ່ຊຽງຄານ ແລະໂອຣົດ ຂອງພະອົງຄືພະຍາຊຽງລໍ ເປັນຜູ້ສູ້ຣົບຈົນເສັຍເສຍຊີວິດ (1480), ຈາກນັ້ນພະຍາເມືອງຊ້າຍໄດ້ຍົກທັບໂຈມຕີ ດາຍຫວຽດຈົນໄດ້ຮັບໄຊຊະນະ, ແຕ່ວ່າເອກະສານລາວບໍ່ເວົ້າເຖິງຜົນງານຂອງນ່ານ ຫລືລ້ານນາເລີຍ, ແຕ່ຈະຍົກໃຫ້ເປັນຜົນງານໃຫຍ່ຂອງເຈົ້າແທ່ນຄຳຫລືສຸວັນນະບັນລັງພຽງຜູ້ດຽວ ເພາະວ່າກຳລັງນ່ານອາດເປັນ ພຽງກຳລັງຫນູນເທົ່ານັ້ນ ກຳລັງສຳຄັນທີ່ຕັດສິນບັນຫາ ແມ່ນຂອງເມືອງຊ້າຍແຕ່ເອກະສານຂອງຝ່າຍໄທເວົ້າໂຍກວ່າເສັດສົງຄາມແລ້ວຕົນຍັງໄດ້ແຕ່ງຕັ້ງແທ່ນຄຳຄອງຊວາພ້ອມ ອັນນີແມ່ນອີກຈຸດຫນຶ່ງທີ່ເອກະສານຂັດກັນທີ່ຄວນພິຈາລະນາ.

7. ໃນສະໄໝໂພທິສາລະຣາດ (1520-1548) ໄດ້ມີເອກະສານໄທຂຽນວ່າຝ່າຍລ້ານຊ້າງໄດ້ແຕ່ງທູດໄປຂໍພະໄຕປິດົກແລະພະສັງຄະເຈົ້າມາຈາກຊຽງໃໝ່ໃນປີ 1522 ຂໍ້ນີ້ບໍ່ປາກົດ ເລີຍໃນພົງສາວະດານລາວ ມີປາກົດຢູ່ແຕ່ໃນ ຊິນົກາລະມາລີປະກອນຂອງ ລ້ານນາເທົ່ານັ້ນຢູ່ໜ້າ 162 (1975) ວ່າ "ພສ 2066 (1523) ໃນວັນເພັງເດືອນຍີ່ ຊົງບໍລິຈາກມະຫາທານຖວາຍ ສະມະນະບໍລິຂານ ປະກອບດ້ວຍ ຜ້າເນື້ອດີ ຄູ່ໜຶ່ງ ແກ່ພະເທບມົງຄົນເຖຣະ ພ້ອມທັງພະພິກຂຸບໍລິວານ ແລ້ວສົ່ງພະເທບ ມົງຄົນເຖຣະພ້ອມດ້ວຍ ຄຳພີໄຕປິດົກຈຳນວນ 60 ຄຳພີໄປໃຫ້ແກ່ພະເຈົ້ານະຄອນລ້ານຊ້າງ ເພື່ອໃຫ້ເກີດສັດທາປະສາທະພະເມືອງແກ້ວ" ຂໍ້ຄວາມເດີມມີທໍ່ນີ້.

ເມື່ອສັງເກດຈາກພົງສາວະດານລາວຫລາຍສະບັບ ຈະບໍ່ມີເວົ້າເຖິງບັນຫານີ້ເລີຍຄືບໍ່ໃຫ້ຄວາມສຳຄັນແກ່ເລື່ອງນີ້, ແຕ່ມີປາກົດພຽງໃນ <u>ຊິນະກາລະມາລີປະກອນ</u> ເທົ່ານັ້ນເບິ່ງລວມແລ້ວຜູ້ກ່າຍເລື່ອງນີ້ຄົງກຳບັນຫາບໍ່ໄດ້ດີ ຫລືມີການຕົກເຮັ່ຍ ຫລືເພີ້ມເຕີມຂໍ້ຄວາມ, ເພາະວ່າພະເທບແລະພະມົງຄຸນ ເປັນພະນັກປາດທີ່ມີຊື່ສຽງທີ່ສຸດຂອງລາວ, ມີຊື່ໃນເອກະສານລາວວ່າ ພະມະຫາເທບຫລວງ ແລະ ພະມັງຄຸນສິດທິ ເຊິ່ງເປັນພະສອງພີ່ນ້ອງທີ່ມີຕຳແໜ່ງສູງໃນສະໄໝເຈົ້າຊົມພູ, ວິຊຸນ ແລະໂພທິສາລະຣາດ, ໂດຍສະເພາະໃນສະໄໝວິຊຸນເປັນຜູ້ແຕ່ງນິທານຂຸນບໍຣົມ ຮ່ວມກັບພະເຈົ້າວິຊຸນ, ເຊິ່ງຍຸກນີ້ເປັນ ຍຸກທີ່ພຸດທະສາສະນາມີຄວາມຈະເລີນຮຸ່ງເຮືອງທາງດ້ານການສຶກສາ ໂດຍສະເພາະແມ່ນ ການແຕ່ງໂຄງ "ວິຊຊຸມາລີ" ດັ່ງນັ້ນຍ້ອນເປັນພະມີຊື່ສຽງ ມີອຳນາດທາງສົງ ແລະມີບົດບາດຕໍ່ລັດກະຈຶ່ງຖືກເຊີນ ເປັນສະມະນະທູດໄປລ້ານນາ, ເພາະເປັນຍາມທີ່ລ້ານນາຕ້ອງການ ຜູກມິດກັບລ້ານຊ້າງ ຈະເຫັນໄດ້ວ່າ ຝ່າຍລ້ານນາໄດ້ຖວາຍ ອັດຖະບໍລິຂານ ແກ່ພະສົງທັງສອງພ້ອມບໍລິວານ, ພິເສດຝ່າຍພະເມືອງເກດ ໄດ້ມີຂອງຂວັນ, ພິເສດ ຄືຄຳພີໄຕປິດົກຈຳນວນ 60 ຄຳພີມາຖວາຍແກ່ພະເຈົ້ານະຄອນລ້ານຊ້າງ (ວິຊຸນ) ເພື່ອໃຫ້ເກີດສັດທາປະສາທະພະເມືອງແກ້ວ ກໍຄືເພື່ອຜູກມິດເຊິ່ງກັນແລະກັນ ຕາມທຳນຽມກະສັດ ແບບຊື້ນໄປປາມາ, ຈາກນັ້ນຍັງມີການມອບພະແຊກຄຳໃຫ້ລ້ານຊ້າງ, ໃນສະໄໝໂພທິສາລະຣາດ ກໍມອບນາງຍອດຄຳທິບ ມາເປັນມະເຫສີ ໂພທິສາລະຣາດ. ຕົວຈິງອາດມີພຽງເທົ່ານີ້ ຈຶ່ງບໍ່ແມ່ນການສົ່ງທູດໄປຂໍ ຈາກສາສນາລ້ານນາ, ເພາະຕົວຈິງຢູ່ຊຽງໃໝ່ ກໍມີການແຕກແຍກເປັນຫລາຍນິກາຍ ເຊິ່ງລາວເຮົາ ແມ່ນຕ້ອງການຈາກຂະເໝນຫລາຍກວ່າ ເຊັ່ນ ໃນສະໄໝຟ້າງູ່ມເປັນຕົ້ນ ໄດ້ນຳພຸດທະສາສນາ ຈາກຂະເໝນມາລາວ, ສ່ວນການສົ່ງພະເທບມົງຄົນເຖຣະມາລາວນັ້ນ ຍັງສົງໄສຢູ່ ເພາະລາວເຮົາມີ ພະມະຫາເທບຫລວງແລະມີພະມະຫາມົງຄົນສິດທິ (ຜູ້ເປັນນັກປາດຂອງລາວທີ່ຂຽນນິທານຂຸນບໍຣົມໃນສະໄໝວິຊຸນ) ຈຶ່ງເຊື່ອວ່າພະສອງອົງ

ນີ້ອາດກໍ່ກະເຊີນໄປຮ່ວມ ພິທີໃດຫນຶ່ງຢູ່ຊຽງໃຫມ່ ຈາກນັ້ນ ພະແກດແກ້ວ ຈຶ່ງມີຂອງຂວັນຄື ຄຳພີໄຕປິດົກຈຳນວນ 60 ຄຳພີໄປກວາຍຕາມທຳນຽມ ບໍ່ຫມາຍຄວາມວ່າລາວໄປ ຮັບເອົາ ພຸດທະສາສະນາມາຈາກຊຽງໃຫມ່ຄືຫລາຍທ່ານຕີຄວາມເອົາເອງ ເພາະເອກະສານລາວ ບໍ່ໃຫ້ຄວາມສຳຄັນຕໍ່ເອກະສານນີ້ແລະເອກະສານລ້ານນາກໍມີພຽງສະບັບດຽວທີ່ເວົ້າເຖິງ.

ເຫດການທັງຫມົດ ຂ້າພະເຈົ້າຄິດວ່າເປັນການຜູກມິດລະຫວ່າງສອງອານາຈັກ, ແຕ່ ຍ້ອນຂໍ້ຄວາມພຽງເທົ່ານີ້ ນັກຄົ້ນຄວ້າຕ່າງໆກໍຕີຄວາມໄປໄດ້ຫລາຍແບວ ແລ້ວແຕ່ຈຸດຢືນ ແລະຄວາມຮັບຮູ້ຂອງແຕ່ລະຄົນ ໃນແບບທີ່ວ່າຕ່າງມຸມມອງ. ແຕ່ຂ້າພະເຈົ້າ ເບິ່ງລວມແລ້ວ ເຫັນວ່ານັກປາດລາວໃນຍາມນີ້ ບໍ່ວ່າຝ່າຍພຸດແລະພາມ ແມ່ນມີຄວາມແຂງແກ່ນ, ໂດຍສະ ເພາະກ່ຽວກັບພຸດທະສາສະນາແລ້ວ ເຫັນວ່າຈະແຈ້ງວ່າຝ່າຍລ້ານຊ້າງ ຕ້ອງການພະຈາກ ຂະເຫມນແລະລັງກາ, ເຊິ່ງອາດຈະຍ້ອນຄວາມບໍລິສຸດພຸດຜ່ອງດ້ານນິກາຍສິງຫົນ.

ສີລາຈາຣຶກວັດຈຸນລະມະນີ ປີ1464 ມີຂໍ້ຄວາມວ່າເຈົ້າເມືອງຊຽງໃຫມ່ລ້ານຊ້າງ ແລະ ຫົງສາ ວະດີເປັນເອກະຣາດທັງຫມົດ ແລະ ຍັງສົ່ງອັດຖະບໍລິວານມາກວາຍພ້ອມກັນດ້ວຍ ນີ້ສະແດງວ່າເປັນ ພຽງຄວາມສຳພັນທີ່ເທົ່າທຽມກັນ. ບໍ່ຫມາຍຄວາມວ່າຍ້ອນອິດທິພົນຕ່ຳ ຫລືສູງກວ່າກັນ.

## III. ວິຣະກຳເຈົ້າອະນຸວົງ:

ຈຸດສຳຄັນທີ່ສຸດທີ່ເກີດບັນຫາຂັດແຍ່ງກັນດ້ານຄວາມຄິດ ຂໍ້ມູນເອກະສານ ກໍແມ່ນໃນ ປະຫວັດສາດໃນສະໄຫມສົງຄາມເຈົ້າອະນຸວົງ ໃນຈຸດນີ້ ເຫັນວ່າຝ່າຍໄທແມ່ນພະຍາຍາມປົດ ເປືອນ ເພື່ອຊອຍຫອມໃສ່ປາກໂຕເອງ ແບບເອົາດີໃສ່ໂຕ ໂດຍການສ້າງຫລັກຖານເທັດ ແບບອິ່ມເພີ່ນຍໍໂຕ, ອັນນີ້ ບໍ່ແມ່ນນັກຄົ້ນຄວ້າໄທ່ທັງຫມົດ ແຕ່ເປັນຄົນພຽງຈົບມືດຽວເທົ່ານັ້ນ ທີ່ນີໄສບໍ່ດີ, ສ່ວນນັກວິຊາການໄທ ແລະຄົນໄທອີກມາກມາຍກົບຈຳນວນຮອດ 95% ແມ່ນມີຈິດໃຈເປັນນັກຄົ້ນຄວ້າແທ້ ມີຄວາມຮັກມິດຕະພາບແບບບ້ານພີ່ເມືອງນ້ອງແທ້ ອັນນັ້ນ ແມ່ນເປັນທີ່ຫນ້າໃຫ້ການຊົມເຊີຍຍ້ອງຍໍ.

ເພື່ອເຂົ້າໃຈຄວາມເປັນຈິງ ຂ້າພະເຈົ້າຂໍພາທ່ານທວນຄືນເບິ່ງບັນຫາຕ່າງໆ ດັ່ງນີ້:

1. ສາເຫດ

ການເລີ່ມຕົ້ນສົງຄາມ ແມ່ນຍ້ອນການແຜ່ອຳນາດຂອງສັກດີນາສະຫຍາມທີ່ມີການ ຂະຫຍາຍຕົວຢ່າງມີຂັ້ນຕອນ, ແທ້ຈິງສົງຄາມລາວ-ສະຫຍາມແມ່ນເຄີຍມີມາແລ້ວແຕ່ຄັ້ງໂພ ທິສາລະຣາດໃນປີ 1533 ທີ່ອະຍຸດທະຍາສົ່ງກຳລັງມາຕີວຽງຄຸກ ແລະປິດລ້ອມວຽງຈັນທີ່ທົ່ງ ສາລາຄຳແຕ່ກໍ່ກລາວຕີແຕກ. ຕໍ່ມາສະຫຍາມກໍມີນະໂຍບາຍແຜ່ອານາເຂດອີກໃນທ້າຍ ສ. 18. ເຊິ່ງພວກເຂົາໄດ້ດຳເນີນການດັ່ງນີ້ຄື: ປີ 1768 ສະຫຍາມເຂົ້າຍຶດຊຽງໃຫມ່ ຫລື

ລ້ານນາ, ປີ 1769 ເຈົ້າຕາກສິນຂອງສະຫຍາມເລີ່ມຂຶ້ນມາຕີໂຄຣາດ ອັນເປັນເຂດແດນຂອງອານາຈັກລາວລ້ານຊ້າງ ໂດຍອ້າງວ່າມາຕີພະມ້າ, ປີ 1773 ເຂົ້າຍຶດເອົາກຳປູເຈັຍໃນສະໄຫມຂອງນັກອົງນົນ, ປີ 1778 ຍຶດຈຳປາສັກຂອງລາວລ້ານຊ້າງ, ປີ 1779 ຍຶດວຽງຈັນ ແລະຫລວງພະບາງ, ລາວທັງ 3 ອານາຈັກຈຶ່ງຕົກເປັນປະເທດສະຣາດຄືຫົວເມືອງສ່ວຍຂອງສະຫຍາມ,

2. ສະພາບການສະໄຫມນັນທະເສນ-ອິນທະວົງ

ເມື່ອຕົກເປັນເມືອງຊ່ວຍ ບໍ່ພຽງແຕ່ຖືກກວາດຕ້ອນບຸກຄົນ ຊັບສິນ ວັດຖຸມີຄ່າແຕ່ກໍຖືກເກັບເກນແຮງງານ ສ່ວຍສາອາກອນ ບັນນາການ ກອງທັບ, ດັ່ງນັ້ນ ປະຊາຊົນລາວຈຶ່ງພາກັນຕໍ່ສູ້ຕະຫລອດມາ ນຳໂດຍກະສັດ ແລະ ຜູ້ນຳທ້ອງຖິ່ນ ເຊັ່ນເຈົ້ານັນທະເສນ, ເຈົ້າອິນທະວົງ, ພະສາກຽດໂງ້ງ, ພະບໍຣົມຣາຊາ ແຫ່ງນະຄອນພະນົມ, ເຈົ້າອະນຸວົງ ເປັນຕົ້ນ.

ສະໄຫມນັນທະເສນ (1779-1794)

ເຈົ້າໂອ-ເຈົ້າອິນ ເປັນບຸດຂອງເຈົ້າອຸປະຣາດທຳມະເທໂວ ໄດ້ນຳໃຊ້ມູນເຊື້ອໄຊຍະເຊດຖາມາປຸກລະດົມຕໍ່ສູ້ຕ້ານໄຊະກຸມມານແຫ່ງຈຳປາສັກທີ່ຍອມຢູ່ໃຕ້ອຳນາດສະຫຍາມ ໃນປີ 1782 ຈົນສະຫຍາມຕ້ອງຍົກທັບຫລວງຈາກໂຄຣາດມາປາບ ທັງເຈົ້າໂອ-ເຈົ້າອິນແມ່ນເສັຍສະລະໃນການຕ້ານສະຫຍາມຄັ້ງນີ້.

ປີ 1791 ອ້າຍຊຽງແກ້ວກໍໄດ້ນຳພາການຕໍ່ສູ້ ໂຈມຕີຈຳປາສັກ ແລະຖືກປາບແບບດຽວກັນກັບເຈົ້າໂອ-ເຈົ້າອິນ.

ສ່ວນຢູ່ວຽງຈັນເຈົ້ານັນທະເສນໄດ້ກັບຈາກກຸງເທບມາຄອງບັນລັງພາຍໃຕ້ອຳນາດສະຫຍາມແລະໄດ້ກຽມການກອບກູ້ເອກະຣາດ ໂດຍການຟື້ນຟູບູລະນະປະເທດໃຫ້ເຂົ້າສູ່ສະພາບປົກກະຕິ ແລະປັບປຸງການປົກຄອງຄືນໃຫມ່ ແລະຮ່ວມມືຢ່າງແຫນ້ນແຟ້ນກັບພະບໍຣົມມະຣາຊາແຫ່ງນະຄອນພະນົມ ຈາກນັ້ນຕີຊຽງຂວາງໃຫ້ມາເຂົ້າກັບວຽງຈັນໄດ້ໃນປີ 1786, ແລະໄປຕີຫລວງພະບາງໃນປີ 1787 ໄປຕີເມືອງແຖງປີ 1792 ຈາກນັ້ນຈຶ່ງກຽມກອບກູ້ເອກະຣາດ, ແຕ່ສະຫຍາມຮູ້ແຜນການນີ້ ຈຶ່ງຖືກສະຫຍາມຈັບລົງໄປບາງກອກພ້ອມບໍຣົມຣາຊາໃນປີ 1794 ໃນຄວາມຜິດວ່າເປັນ "ກະບົດ" ແລະຖືກລົງໂທດປະຫານຊີວິດ ແລະຕາຍປີ 1796 ດ້ວຍການທໍລະມານ.

ສະໄຫມອິນທະວົງ (1794-1804)

ເຈົ້າອິນທະວົງກໍດຳເນີນການເມືອງແບບນັນທະເສນ, ໂດຍເລີ່ມສ້າງຄວາມເປັນປຶກແຜ່ນໃຫ້ລ້ານຊ້າງເປັນເບື້ອງຕົ້ນ ໄດ້ຍົກທັບໄປຊ່ວຍບໍຣົມມະຣາຊາສຸດຕາແຫ່ງນະຄອນ

ພະນົມປາບວຽງກອນວົວ, ແລະສົ່ງກອງເຈົ້າອະນຸວົງໄປຊ່ວຍສະຫຍາມຕີພະມ້າທີ່ລຳພູນ ໃນປີ 1798, ການຮົບຄາວນີ້ ກອງທັບຫລວງສະຫຍາມຂອງກົມຫລວງເທບທະລິຮັກ ພະຍາຍົມມະຣາດ ກອງທັບວັງໜ້າແລະກອງອື່ນໆ ບໍ່ສາມາດຕີພະມ້າໄດ້, ເມື່ອກອງທັບລາວໄປເຖິງຈຶ່ງສາມາດຕີແຕກໄດ້ຍ້ອນຄວາມສາມາດໃນການຮົບຂອງເຈົ້າອະນຸວົງ.

### 3. ສະໄໝເຈົ້າອະນຸວົງ (1804-1828)

ເຈົ້າອະນຸວົງ ຫລືເຈົ້າອະນຸ ເກີດເມື່ອປີກຸນ ຈຸລະສັກກະລາດ 1129 (1769) ທີ່ພະຣາຊະວັງນະຄອນວຽງຈັນ, ເປັນລູກຊາຍຫລ້າຂອງເຈົ້າສິລິບຸນຍະສານ. ໄດ້ຖືກຈັບລົງໄປທົນບຸລີໃນປີ 1779 ພ້ອມກັບເຈົ້າອ້າຍເອື້ອຍ ແລະ ຜູ້ອື່ນໆ. ໃນຕອນນັ້ນ ເຈົ້າອະນຸມີອາຍຸພຽງ 11 ປີ. ໃນປີ 1794 ພວກສັກດິນາສະຫຍາມໄດ້ແຕ່ງຕັ້ງເຈົ້າອິນທະວົງຂຶ້ນມາເປັນເຈົ້າຊີວິດລ້ານຊ້າງ ແລະ ໄດ້ແຕ່ງຕັ້ງເຈົ້າອະນຸວົງເປັນມະຫາອຸປະຣາດ. ຕະຫລອດເວລາ 10 ປີທີ່ເຈົ້າອະນຸເປັນເຈົ້າມະຫາອຸປະຣາດຢູ່ນັ້ນ ເພິ່ນໄດ້ຕັດສິນໃຈຕໍ່ສູ້ທ້ອນໂຮມລາວ ເພື່ອປະກາດເອກະຣາດຕາມເສັ້ນທາງທີ່ເຈົ້ານັນທະເສນເຄີຍເຮັດມາ ແລະ ຕາມການແນະນຳຂອງເຈົ້າອິນທະວົງ, ທັງດຳເນີນນະໂຍບາຍເອົາໃຈສັກດິນາສະຫຍາມ ຢ່າງສຸດຄວາມສາມາດ, ເພິ່ນໄດ້ຍົກກອງທັບໄປຊ່ວຍສັກດິນາສະຫຍາມຕ້ານພະມ້າຫລາຍເທື່ອ, ເພິ່ນເປັນຜູ້ກ້າຫານ ແລະ ມີຄວາມສາມາດຕີເອົາຊະນະພະມ້າໄດ້, ດັ່ງນັ້ນ ເມື່ອເຈົ້າ ອິນທະວົງສິ້ນຊີວິດ ໃນປີ 1804 ແລ້ວ ເຈົ້າຊີວິດສະຫຍາມຈຶ່ງຈຳເປັນຕ້ອງຕັ້ງເຈົ້າອະນຸ ໃຫ້ຄອງນະຄອນສີສະຕະນາຄະນະຫຸດລ້ານຊ້າງຕໍ່ໄປ ໃນປີຂຶ້ນເປັນເຈົ້າຊີວິດລ້ານຊ້າງ ວຽງຈັນເວລານັ້ນ ເຈົ້າອະນຸໄດ້ 47 ປີ. ພາຍຫລັງທີ່ຂຶ້ນເປັນເຈົ້າຊີວິດລ້ານຊ້າງວຽງຈັນແລ້ວ, ເພິ່ນຈຶ່ງໄດ້ຍົກກອງທັບໄປຕີພະມ້າທີ່ຊຽງແສນ ຕາມທີ່ໄດ້ນັດຫມາຍໄວ້ກັບກອງທັບຂອງກົມຫລວງເທບທະລິລັກ, ກອງທັບນະຄອນລຳປາງ, ກອງທັບເມືອງນ່ານ ແລະ ກອງທັບຊຽງໃໝ່. ກອງທັບທັງ 5 ໄດ້ພາກັນຍົກໄປຕັ້ງຄ້າຍລ້ອມເມືອງຊຽງແສນໄວ້ໃນລະດູແລ້ງ ປີ 1804. ຝ່າຍພວກພະມ້າທີ່ຢູ່ໃນເມືອງຊຽງແສນ ບໍ່ໄດ້ຍົກອອກມາຮົບເປັນແຕ່ຮັກສາເມືອງໄວ້ ຢ່າງແຂງແຮງ, ກອງທັບທັງ 5 ຫົວເມືອງ ບໍ່ສາມາດເຂົ້າຕີເອົາເມືອງຊຽງແສນໄດ້. ເຖິງເດືອນ 6 ຝົນຕົກລົງມາຫລາຍໄພ່ພົນໃນກອງທັບເກີດໄຂ້ເຈັບລົ້ມຕາຍລົງຢ່າງຫລວງຫລາຍ, ທັງສະບຽງກໍໜ້ອຍລົງ ແລະ ໄດ້ຮູ້ຂ່າວວ່າກອງທັບພະມ້າເມືອງອັງວະຈະຍົກລົງມາຕີເປັນເສິກຂະໜາບ ດັ່ງນັ້ນແມ່ທັບເມືອງອື່ນໆ ຈຶ່ງພາກັນເລີກຄືນໝົດ, ສ່ວນເຈົ້າອະນຸບໍ່ຍອມກອຍຄືນໄດ້ພະຍາຍາມລ້ອມເມືອງໄວ້ຢ່າງໜາແໜ້ນ ເພື່ອຕີເອົາເມືອງຊຽງແສນໃຫ້ໄດ້ ເຮັດໃຫ້ພວກຊາວເມືອງໄດ້ຮັບຄວາມອຶດຢາກຫລາຍກໍພາກັນລັກອອກມາຍອມຕໍ່ກອງທັບເຈົ້າ ອະນຸຢ່າງຫລວງຫລາຍ. ໂປມະຍຸງ້ວນແມ່ທັບພະມ້າຈະກີດຂວາງໄວ້ກໍບໍ່ໄດ້ ດັ່ງນັ້ນເມື່ອຊາວເມືອງ

ແຕກຫນີຫລາຍ, ທະຫານຂອງ ໂປມະຍຸ້ງອມ ກໍ່ແຕກຫນີນຳ, ເຮັດໃຫ້ເກີດຄວາມສັບສົນໃນກອງທັບພະມ້າ, ເຈົ້າອະນຸເຫັນໄດ້ໂອກາດ ກໍຍົກກອງທັບເຂົ້າຕີກອງທັບພະມ້າແຕກ. ໂປມະຍຸ້ງອມແມ່ທັບພະມ້າກໍ່ຖືກປືນ ຕາຍຄາສະຫນາມ. ພະຍາຂວາທີ່ແມ່ທັບພະມ້າຕັ້ງໃຫ້ເປັນເຈົ້າເມືອງຊຽງແສນນັ້ນ ພາຄອບຄົວລັກຫນີຂ້າມນ້ຳຂອງແດນພະມ້າ. ເຈົ້າອະນຸຈຶ່ງໃຫ້ກວາດເອົາຄອບຄົວຊາວເມືອງໄດ້ 24.000 ກວ່າຄົວ ແລ້ວສັ່ງທຳລາຍກຳແພງເມືອງ ແລະ ເອົາໄຟເຜົາເມືອງເສຍ ແລ້ວແບ່ງປັນຄອບຄົວເປັນ 5, ສ່ວນຫນຶ່ງໃຫ້ເຈົ້ານະຄອນຊຽງໃຫມ່, ສ່ວນຫນຶ່ງໃຫ້ເຈົ້າ ນະຄອນລຳປາງ, ສ່ວນຫນຶ່ງໃຫ້ເຈົ້າເມືອງນ່ານ, ສ່ວນຫນຶ່ງສົ່ງລົງໄປບາງກອກ ແລະ ສ່ວນຫນຶ່ງເອົາມາໄວ້ວຽງຈັນ ນີ້ແມ່ນຄັ້ງທີສອງທີ່ເຈົ້າອະນຸຮົບຊະນະ.

ເຈົ້າຊີວິດສະຫຍາມ ເຫັນຄວາມພິລະອາດຫານຂອງກອງທັບລາວ ແລະກ່າວວ່າ "...ແຕ່ທັບກຸງນັ້ນ ກັບລົງມາເປົ່າ ບໍ່ໄດ້ຣາຊະການສິ່ງໃດ ກໍ່ຫົງອັດເຄືອງເປັນມາກ ດຳລັດວ່າບໍ່ຮູ້ເທົ່າລາວ ໃຫ້ລົງພະຣາຊະອາດຍາຈຳຄຸກກົມຫລວງເທບຫະລິລັກ ແລະ ພະຍາຍົມມະລາດ.. ຍ້ອນຄວາມພິລະອາດຫານຂອງເຈົ້າອະນຸ ເຈົ້າຊີວິດລ້ານຊ້າງ ວຽງຈັນຄົນໃຫມ່ທີ່ສາມາດນຳພາກອງທັບລາວຕີພະມ້າແຕກໃນຄັ້ງນັ້ນ ເຮັດໃຫ້ຊື່ສຽງຂອງເຈົ້າອະນຸ ລືຊາຜາກົດວ່າເປັນນັກຮົບຜູ້ມີຝີມືຍອດຢ້ຽມ ໃນບັນດາແມ່ທັບຫົວເມືອງ ປະເທດສະລາດທັງຫລາຍຂອງສະຫຍາມ ຈົນແມ່ທັບຝ່າຍສະຫຍາມເອງກໍ່ໄດ້ເຫັນຝີມື, ໂດຍສະເພາະປະຊາຊົນລາວທຸກກ້ອນຫນ້າ ຍິ່ງເພີ່ມຄວາມເຊື່ອຫມັ້ນວ່າ ເຈົ້າອະນຸຈະສາມາດນຳພາປະຊາຊົນຕໍ່ສູ້ທ້ອນໂຮມລາວ ແລະປະກາດເອກະລາດຈາກສະຫຍາມໄດ້ສຳເລັດ.

ເຈົ້າອະນຸ ຍົກກອງທັບກັບຈາກຊຽງແສນ ມາຮອດວຽງຈັນໄດ້ບໍ່ພໍຄາວ ກໍ່ໄດ້ຮັບຄຳສັ່ງໃນເດືອນ 9 (ເດືອນລາວ) ປີ 1804 ນັ້ນ ໃຫ້ກະກຽມກອງທັບວຽງຈັນ "... ຂຶ້ນໄປຕີເມືອງຊຽງຕຸງອີກ ເມືອງລາວຟາກຂອງຕາເວັນອອກແດນພະມ້າ ໃຫ້ເກິງພ້ອມກັນໃນລະດູແລ້ງ" ດັ່ງນັ້ນ ເຈົ້າອະນຸຈຶ່ງໄດ້ກຽມກອງທັບຫລວງວຽງຈັນ ຂຶ້ນໄປຕີພະມ້າທີ່ຍຶດຄອງຫົວເມືອງລາວພາກເຫນືອ ເຊັ່ນ: ເມືອງຊຽງຕຸງ, ຊຽງຮຸ້ງ, ເມືອງສິງ... ໄດ້ຍົກກອງທັບຂຶ້ນໄປໃນຕົ້ນປີ 1805 ພ້ອມກັບກອງທັບເມືອງລຳປາງ, ເມືອງຊຽງໃຫມ່, ເມືອງແພ່, ເມືອງເກີນ, ເມືອງຫລວງພະບາງ ແລະ ເມືອງຝ່າຍເຫນືອອື່ນໆ. ສ່ວນກອງທັບຫລວງສະຫຍາມແມ່ນບໍ່ໄດ້ຍົກຂຶ້ນໄປເລີຍ ຍ້ອນພວກເຂົາມີແຜນການຢາກໃຫ້ກອງທັບລາວໄປຕາຍແທນພວກເຂົາ. ກອງທັບເຈົ້າອະນຸ ແລະ ບັນດາກອງທັບອື່ນໆ ໄດ້ເຂົ້າມາຮັກສາຢູ່ເມືອງຍອງ, ເມືອງຊຽງຕຸງ, ເມືອງແຮມ, ເມືອງຫລວງ, ເມືອງພູຄາ, ເມືອງພົງ, ເມືອງນູນ, ເມືອງຮຳ, ເມືອງຂອນ, ເມືອງລ່າ, ເມືອງຊຽງຮຸ່ງ, ເມືອງຊຽງແຂງ... ແລະ

ໄດ້ຕີເມືອງເຫລົ່ານີ້ທັງຫມົດໃນເດືອນຫົກ 1805, ໄດ້ຕີເມືອງໃຫຍ່ ເມືອງນ້ອຍລວມທັງຫມົດ 50 ກວ່າເມືອງ ແລະ ຍຶດໄດ້ຮຽບຮ້ອຍ.

ເພື່ອກະກຽມໃຫ້ແກ່ການທ້ອນໂຮມລາວ ແລະ ປະກາດເອກະຣາດແຫ່ງຊາດນັ້ນ, ວຽກງານບູລະນະສ້າງສາປະເທດຊາດຢ່າງຮອບດ້ານ ຈຶ່ງເປັນວຽກງານຕົ້ນຕໍທີ່ສໍາຄັນທີ່ສຸດໃນສະໄຫມເຈົ້າອະນຸ, ດັ່ງນັ້ນ ຫລັງຈາກເຈົ້າອະນຸຍົກກອງທັບໄປຕີພະມ້າ ອອກຈາກສິບສອງພັນນາລື້ແລ້ວ ຜາກົດວ່າການກະເກນເອົາກອງທັບລາວລ້ານຊ້າງໄປຊ່ອຍ ສັກດິນາສະຫຍາມໄດ້ເບົາບາງລົງ ເຮັດໃຫ້ເຈົ້າອະນຸມີເວລາຫັນມາສຸມໃສ່ນໍາພາປະຊາຊົນລາວປັບປຸງວຽກງານທີ່ສໍາຄັນຂອງຊາດໃຫ້ເຂັ້ມແຂງຂຶ້ນໃນຫລາຍດ້ານໄປພ້ອມໆກັນ ເຊັ່ນ: ການບູລະນະສ້າງສາປະເທດຊາດ, ການທະຫານ, ການປົກຄອງ, ການເມືອງ ແລະ ດ້ານເສດຖະກິດ-ສັງຄົມ-ວັດທະນະທໍາ. ເພື່ອເຮັດໃຫ້ວຽກງານທີ່ສໍາຄັນທັງຫມົດຂອງຊາດຂະຫຍາຍຕົວເຂັ້ມແຂງຢ່າງຮອບດ້ານ ໂດຍແນໃສ່ເພື່ອເປັນເງື່ອນໄຂໃຫ້ແກ່ການປະກາດເອກະຣາດແຫ່ງຊາດໃນຕໍ່ຫນ້າ.

ເມື່ອເບິ່ງຄືນແລ້ວເຫັນວ່າແຕ່ລະວຽກເພິ່ນໄດ້ມີການກະກຽມແມ່ນສໍາເລັດ ເຊັ່ນ ຜູກສໍາພັນກັບ ຫລວງພະບາງ ເມືອງພວນ ສິ່ງລູກຊາຍໄປຄອງຈໍາປາສັກ ຈຶ່ງຖືວ່າມີການກະກຽມການຕໍ່ສູ້ເພື່ອເອກະຣາດໄດ້ດີ ຈາກນັ້ນຈຶ່ງດໍາເນີນການຕໍ່ສູ້.

ເຫດການເລີ່ມຕົ້ນແມ່ນໃນປີ 1825 ເມື່ອເຈົ້າອະນຸລົງໄປຖວາຍພະເພີງສົບສົບ ຣ. 2 ແລະກົກ ຣ.3 ສັ່ງໃຫ້ໄປຕັດຕົ້ນຕານ ຈາກສຸພັນບຸຣີມາສະມຸດປຣາການ ເຈົ້າອະນຸຈຶ່ງສັ່ງໃຫ້ເຈົ້າຣາຊວົງເງົ້າ ແລະເຈົ້າຕິດສະໄປ ທໍາຕາມສັ່ງສໍາເລັດວຽກງານແລ້ວ ຈະກັບມາລາວເຈົ້າອະນຸກໍໄດ້ຂໍເອົາຄົວລາວ ທີ່ຂໍກັບລາວນັ້ນໃຫ້ກັບມາລາວນໍາພະອົງ ແຕ່ເຈົ້າຊີວິດສະຫຍາມ ຣ. 3 ຕອບປະຕິເສດວ່າຊາວ ວຽງມາຕັ້ງຢູ່ສະຍາມເປັນຫລັກແຫລ່ງດີແລ້ວ ບໍ່ຄວນໃຫ້ກັບຄືນມາລາວຈະພາກັນແຂງເມືອງໃນຕໍ່ຫນ້າ, ເປັນອັນວ່າການຮ້ອງຂໍຂອງປະຊາຊົນລາວແມ່ນ ບໍ່ສໍາເລັດຜົນ.

4. ການດໍາເນີນສົງຄາມຂັ້ນຕົ້ນ

ເຈົ້າອະນຸວົງ ເມື່ອກັບມາຮອດວຽງຈັນແລ້ວກໍປາກົດວ່າ ຖືກຮ້ອງຂໍຈາກປວງຊົນລາວສອງຝັ່ງຂອງ ໂດຍສະເພາະບັນດາເຈົ້າເມືອງນ້ອຍໃຫຍ່ໃຫ້ສະເຫນີໃຫ້ເຈົ້າອະນຸນໍາພາ ລຸກຂຶ້ນກອບກູ້ເອກະຣາດຢ່າງແຫນ້ນຫນາ, ໃນຂະນະດຽວກັນນີ້ ກອງສັກເລກໂຄຣາດ ແມ່ນເພີ່ມການປະຕິບັດງານຫນັກຂຶ້ນ ເຮັດໃຫ້ລາວເທິງແລະລາວລຸ່ມທັງ 2 ຝັ່ງຂອງໄດ້ຮັບການເດືອດຮ້ອນຈາກໂຄຣາດ, ນອກນີ້ພວກໂຄຣາດຍັງໃຊ້ກໍາລັງໄປຕີເອົາຂ້າ ແລະລາວມາເປັນທາດຊັກໄຊ້, ທັງຍັງເພີ່ມການເກັບສ່ວຍ, ລະດົມເກນແຮງງານໄປບາງກອກ

ພວກລາວເທີງແລະພວກລາວລຸ່ມ ຍິ່ງໄດ້ຮັບຄວາມເດືອດຮ້ອນເພີ່ມຂຶ້ນຈຶ່ງເຂົ້າຫາເຈົ້າອະນຸວົງ ເພື່ອຕ້ານຍັນອິດທິພົນຂອງພະຍາໂຄຣາດແລະສະຫຍາມ. ເຈົ້າອະນຸວົງພ້ອມເຈົ້າຂຸນມູນນາຍທັງປວງຈຶ່ງຕັດສິນໃຈກອບກູ້ເອກະຣາດ. ໂດຍໃຫ້ເຈົ້າຕິດສະຍົກທັບຈາກວຽງຈັນໃນທ້າຍປີ 1825 ໄປຕີສະຫຍາມແຖວກາລະສິນ, ຮ້ອຍເອັດ, ຂອນແກ່ນ, ຊົນນະບົດ, ສຸວັນນະພູມ, ສ່ວນເຈົ້າຣາຊະບຸດໂຍ້ ຍົກທັບຈາກຈຳປາສັກມາແຖວອຸບົນ, ຍະໂສທອນ, ສີສະເກດ, ເດດອຸດົມ, ຂຸຂັນ. ສ່ວນທັບເຈົ້າຣາຊະວົງ ໃຫ້ລົງໄປຮອດສະຣະບຸຣີ, ສ່ວນທັບຫລວງໄດ້ຍົກກົງໄປ ຍຶດໂຄຣາດໄດ້ໂດຍງ່າຍດາຍໃນເດືອນ 3 ແຮມ 6 ຄ່ຳ ເວລາບ່າຍ 3 ໂມງ, ຈາກນັ້ນກໍໄດ້ກວາດຕ້ອນຄອບຄົວກັບມາວຽງຈັນ ເຊິ່ງ ຕອນນັ້ນ ພະຍານະຄອນຣາຊະສີມາທີ່ຖືກລວງ ໃຫ້ໄປຕີເມືອງຂຸຂັນ ແລະໄດ້ຖືກກອງທັບ ພະຍາໄກສີງຄາມ ແລະ ທ້າວຫລ້າຕະຫລອດຈົນກອງທັບຂອງເມືອງສັງຂະ ແລະ ເມືອງອື່ນໆ ຕີແຕກລົງໄປທາງຂະເໝນພຸ້ນ, ຈຶ່ງຮູ້ວ່າຕົນຖືກແຜນຂອງເຈົ້າອະນຸ ທີ່ພ້ອມຍົກ ທັບມາຢຶດເອົາເມືອງໂຄຣາດ, ດັ່ງນັ້ນພະຍານະຄອນຣາຊະສີມາ ຈຶ່ງໄດ້ແຕ່ງຈຸມ້າໄວ ໃຫ້ຄົນລົງໄປລາຍງານຕໍ່ບາງກອກວ່າ: ເຈົ້າອະນຸເປັນກະບົດໄດ້ຍົກກອງທັບໃຫຍ່ ລົງມາຢຶດ ເອົາຫົວເມືອງລາວໄດ້ຫລາຍເມືອງແລ້ວ ແລະພວມເຂົ້າເອົາເມືອງໂຄຣາດ, ຈຶ່ງຂໍໃຫ້ບາງກອກ ຮີບຟ້າວຍົກກອງທັບຂຶ້ນມາ ຕີກອງທັບເຈົ້າອະນຸ, ສ່ວນກອງທັບຂອງນະຄອນຣາຊະສີມາຈະຍົກກັບຈາກເມືອງຂຸຂັນ ໄປຕີກອງທັບເຈົ້າອະນຸ ເພື່ອລໍຖ້າກອງທັບຫລວງຈາກບາງກອກ.

ຫລັງຈາກສົ່ງຈຸມ້າໄວລົງໄປລາຍງານຕໍ່ບາງກອກແລ້ວ ເຈົ້າພະຍານະຄອນຣາຊະສີມາຈຶ່ງເຕົ້າໂຮມກອງທັບຄືນໃໝ່ ແລ້ວຍົກກັບມາໂຄຣາດ, ສ່ວນກອງທັບພະຍາໄກສີງຄາມກໍໄດ້ຕິດຕາມລັດຕີກອງທັບຂອງພະຍານະຄອນຣາຊະສີມາໃຫ້ແຕກກະຈາຍໄປ. ແຕ່ພະຍາຣາຊະສີມາກໍ່ສາມາດນຳກອງທັບກັບມາໂຄຣາດໄດ້ດ້ວຍການ ຊ່ວຍເຫລືອຂອງເຈົ້າກະບິນບຸລີ, ເມື່ອມາຮອດເຂດຂອງນະຄອນຣາຊະສີມາແລ້ວ ເຫັນພວກຄົວພວມຖືກອົບພະຍົບໄປວຽງຈັນ, ເຈົ້ານະຄອນຣາຊະສີມາ ຈຶ່ງວາງແຜນຕໍ່ສູ້ກັບກອງທັບວຽງຈັນເພື່ອຍາດເອົາພວກຄົວກັບຄືນມາ ໂດຍວາງແຜນໃຫ້ພະຍາປະລັດເມືອງນະຄອນຣາຊະສີມາເຂົ້າອອນນ້ອມຕໍ່ເຈົ້າອະນຸ, ເຈົ້າອະນຸຈຶ່ງແຕ່ງໃຫ້ພະຍາປະລັດ ແລະ ພະຍາພົມຍົກກະບັດເມືອງໂຄຣາດ ເປັນຜູ້ຄອບຄຸມຄອບຄົວຊາວເມືອງໂຄລາດຂຶ້ນມາວຽງຈັນ ໂດຍມີທະຫານວຽງຈັນຄອບຄຸມຂຶ້ນມານຳຈຳນວນໜຶ່ງ, ພະຍາປະລັດ ແລະ ພະຍາພົມຍົກກະບັດພະຍານະຄອນຣາຊະສີມາວາງແຜນຕີກອງທະຫານວຽງຈັນທີ່ຄຸມຄົວຢູ່ນັ້ນ ໂດຍພະຍາປະລັດຂີ່ມ້າຄືນມາຫາເຈົ້າອະນຸ ທີ່ຄ້າຍໃຫຍ່ ເພື່ອຂໍມີດພ້າ ແລະ ປືນພໍຈະໄດ້ຊອກຫາເນື້ອກິນຕາມທາງ, ເຈົ້າອະນຸໄດ້ອະນຸຍາດໃຫ້ຈຳນວນນ້ອຍໜຶ່ງ. ເມື່ອພວກຄົວເມືອງໂຄຣາດ

ເດີນທາງມາເຖິງທົ່ງສຳລິດ ກໍ່ຂໍພັກເຊົາຢູ່ທີ່ນັ້ນຊົ່ວຄາວ ໂດຍອ້າງວ່າມີຄວາມອິດເມື່ອຍຫລາຍ, ເພື່ອໃຫ້ກອງທັບຂອງພະຍານະຄອນຣາຊະສີມາທີ່ຊ້ອນຢູ່ປ່າເຂົ້າ ຕີຍາດເອົາຄົວໄດ້ໂດຍງ່າຍ, ພໍເດີກສະງັດກອງທັບຂອງພະຍານະຄອນຣາຊະສີມາ ທີ່ດັດສະກັດຢູ່ກໍ່ເຂົ້າຕີທະຫານຄຸມຄົວຂອງເຈົ້າອະນຸແຕກ. ເມື່ອຍຶດເອົາຄົວຄືນໄດ້ແລ້ວພະຍານະຄອນຣາຊະສີມາ, ພະຍາພົມຍົກກະບັດ, ພະຍານະລົງສົງຄາມ ກໍ່ພາກັນຈັດແຈງຕັ້ງຄ້າຍຂຶ້ນເພື່ອຕໍ່ສູ້ກັບກອງທັບຂອງເຈົ້າອະນຸ. ທີ່ຈະມາຕີເອົາຄົວຄືນ, ສ່ວນພວກນາຍຄຸມທີ່ຫນີມາໄດ້ກໍ່ພາກັນກັບມາລາຍງານຕໍ່ເຈົ້າອະນຸ, ເຈົ້າອະນຸ ຈຶ່ງແຕ່ງຕັ້ງໃຫ້ຕຳຫລວດຫນ້າ 50 ຄົນຂີ່ມ້າຂຶ້ນໄປສືບເບິ່ງເຫດການ, ແລະ ໄດ້ຖືກທະຫານຂອງນະຄອນລາຊະສີມາ ໂດຍຫລວງພິທັກໂຍທາດັກສະກັດຍິງ ພວກຕຳຫລວດລາວຈຶ່ງກັບຄືນມາລາຍງານໃຫ້ເຈົ້າອະນຸຮູ້ວ່າກອງທັບພະຍານະຄອນຣາຊະສີມາ ໄດ້ເຂົ້າດັກສະກັດຕີຄົວຄືນໄດ້ແລ້ວ ຕັ້ງທັບຕໍ່ສູ້ຢູ່ທົ່ງສຳລິດ ເຊິ່ງເປັນດ້ານຫລັງຂອງເຈົ້າອະນຸ, ເຈົ້າອະນຸຈຶ່ງແຕ່ງໃຫ້ເຈົ້າສຸດທິສານ ເຈົ້າກຳພ້າ ແລະ ເຈົ້າປານຄຸມທະຫານ 3.600 ຄົນ ມາຕີກອງທັບຂອງພະຍານະຄອນຣາຊະສີມາ, ໂດຍເຈົ້າປານຄຸມທະຫານມ້າ 400 ຄົນ ຍົກລ່ວງຫນ້າໄປກ່ອນແລ້ວ ເຈົ້າສຸດທິສານ ເຈົ້າກຳພ້າ ຄຸມທະຫານ 3.200 ຄົນ ຮີບຍົກມາຕີຫນູນຫລັງຊ່ວຍ.

ຝ່າຍພະຍານະຄອນລາຊະສີມາ, ພະຍາປະລັດ, ພຍາຍົມຍົກກະບັດ ແລະ ພະນະລົງສົງຄາມ ໄດ້ຈັດກອງທັບອອກຕໍ່ສູ້, ທັງມີກຳລັງພົນ ແລະ ອາວຸດ ເຫນືອກວ່າກອງທັບລາວ, ທະຫານລາວຖືກຍິງຕາຍ 300-400 ຄົນ, ເມື່ອເຈົ້າສຸດທິສານເຫັນວ່າກອງທັບພະຍານະຄອນຣາຊະສີມາເຫນືອກວ່າ ໂດຍສະເພາະມີອະວຸດຄື ແລະ ທະຫານລາວກໍ່ຕາຍຫລາຍ ຈຶ່ງຖອຍທັບກັບມາຫາເຈົ້າອະນຸ ລາຍງານເຫດການໃຫ້ຮູ້ທຸກຢ່າງ, ໃນເວລາດຽວກັນນັ້ນ ກອງທັບຂອງເຈົ້າຣາຊະວົງ ກໍອົບພະຍົບຄົວເມືອງສະລະບຸລີ ມາເຖິງນະຄອນຣາຊະສີມາ ໄດ້ລາຍງານໃຫ້ເຈົ້າອະນຸຮູ້ວ່າ: ອົບພະຍົບເອົາຄອບຄົວ ສະຫຍາມໄດ້ 110 ຄົວ, ຈີນໄດ້ 220 ຄົວ, ລາວໄດ້ 10.000 ຄົນ, ເຈົ້າຣາຊະວົງໄດ້ລາຍງານວ່າ: ໄດ້ຍົກອອກຈາກເມືອງສະລະບຸລີ ແຕ່ວັນອັງຄານ ເດືອນ 3 ແຮມ 9 ຄ່ຳ (1826) ແລະ ໄດ້ແຈ້ງໃຫ້ເຈົ້າອະນຸຮູ້ວ່າ: ເວລານີ້ກອງທັບບາງກອກ ພວມຍົກທັບຂຶ້ນມາທຸກທາງ ແລະ ໄດ້ໃຊ້ຄົນຂີ່ມ້າໄປຈັບພໍ່ຄ້າຊາວເຮືອເຖິງບ້ານອະລັນຍົກໄດ້ 4 ລຳ ໄຕ່ຖາມໄດ້ ຄວາມວ່າເຈົ້ານາຍຂຸນນາງເປັນແມ່ທັບມາຕັ້ງຢູ່ກຸງເກົ່າແດ່, ຍົກໄປທາງບ້ານນະຄອນ ນາຍຍົກແດ່ທາງປາຈີນບຸລີ ແລະກະບິນບຸລີແດ່ ຈາກນັ້ນກອງທັບລາວຈຶ່ງວາງແຜນໃຫມ່ກຽມ ຮັບເສິກກັບສະຫຍາມທີ່ຫນອງບົວລຳພູ ໂດຍຖອຍທັບໃຫຍ່ມາຕັ້ງຮັບຢູ່ພູເຂົ້າສານ.

ສະພາບຂອງສົງຄາມໃນບັ້ນນີ້ເປັນຄືແນວນີ້, ໂດຍບໍ່ມີບົດບາດຂອງບາງໂມ້ເລີຍ ໃນສົງຄາມທີ່ຄ່າຍມູນເຄັງ (ທົ່ງສຳຣິດ) ເຊິ່ງເປັນພຽງການຮົບເບື້ອງຕົ້ນໂດຍຕຳຫລວດ ນຳພາຄົວ ແລະຕໍ່ມາກໍແມ່ນກອງທະຫານລາດຕະເວນເບິ່ງເຫດການຂອງເຈົ້າສຸດທິສານເຊິ່ງ ບໍ່ມີຈຸດປະສົງຈະໄປຕີ ແຕ່ໄປສືບຂ່າວເທົ່ານັ້ນ.

ການສູ້ຮົບໃຫຍ່ລະຫວ່າງສະຍາມກັບລາວມີຢູ່ຫລາຍແຫ່ງ ເພາະວ່າຝ່າຍລາວກະກຽມດັກສະກັດໃນແຕ່ລະຈຸດສຳຄັນທີ່ເປັນເສັ້ນທາງມາວຽງຈັນ.

ຈຸດສຳຄັນທີ່ຫນຶ່ງແມ່ນຢູ່ພູເຂົ້າສານ, ສະຫຍາມໄດ້ໃຊ້ເວລາ 6-7 ມື້, ໂດຍໃນວັນເສົາເດືອນ 6 ຂຶ້ນ 10 ຄ່ຳ (1827) ກອງທັບຫລວງຂອງກົມພະລາຊະວັງບໍວອນ ໄດ້ຍົກຈາກໂຄຣາດມາຮອດບ້ານນ້ຳເຊີນ ແລະຕັ້ງທັບຢູ່ນີ້ ເພື່ອຊ່ວຍກັນໂຈມຕີຄ່າຍຫນອງບົວລຳພູ.

ສ່ວນກອງທັບລາວທີ່ຄ້າຍຫນອງບົວລຳພູນັ້ນ ແມ່ນພະຍານະລິນ (ເຈົ້າເມືອງສີ່ມຸນດຽວນີ້ແມ່ນເມືອງຈະຕຸລັດ) ເປັນແມ່ທັບມີຈຳນວນພົນພຽງແຕ່ 3.000 ຄົນທໍ່ນັ້ນ ທັງມີອາວຸດແບບພື້ນເມືອງທີ່ບໍ່ທັນສະໄຫມຄືກັບສະຫຍາມ ທີ່ໄດ້ຮັບມາຈາກນາຍທຶນ ຕາເວັນຕົກ. ແຕ່ກອງທັບພະຍານະລິນ ກໍ່ໄດ້ຕໍ່ສູ້ຢ່າງແຂງແຮງ ບໍ່ຍອມປະຄ້າຍຢ່າງເດັດ ຂາດ, ຝ່າຍລາວແມ່ນປະຕິບັດຄຳສັ່ງສູ້ສຸດຊີວິດເພື່ອປ້ອງກັນຄ້າຍ ແຕ່ການຕໍ່ສູ້ຕາມຕຳລາ ພົງສາວດານຂອງເສິກໃຫຍ່ແມ່ນບໍ່ມີຢູ່ຄ້າຍນີ້ ທັງນີ້ອາດຍ້ອນອີກຝ່າຍສະຫຍາມໃຊ້ປືນ ໃຫຍ່ທັນສະໄຫມ ເຂົ້າໃນການລົບທັງມີຕ່າງຊາດເຂົ້າຮ່ວມຫລາຍກອງ,

ກອງທັບສະຫຍາມທັງ 6 ກອງ ໄດ້ລະດົມກັນເຂົ້າຕີຄ້າຍລາວຢ່າງຫນັກພາຍຫລັງປິດລ້ອມໄວ້ໄດ້ 3 ມື້, ໂດຍສະເພາະແມ່ນກອງທັບພິເສດຂອງພະຍາມະໂຍທາ (ທໍເລຍ) ໄດ້ເຂົ້າຕະລຸມບອນ ຕີກອງທັບລາວ ຢ່າງປ່ວງບ້າ, ແຕ່ກອງທັບລາວ ພະຍານະລິນ ໄດ້ຕໍ່ສູ້ຢ່າງອົງອາດກ້າຫານ ສາມາດຂ້ານາຍທັບຂອງສະຫຍາມຕາຍຫລາຍຄົນ ເຊັ່ນ: ພະຍາກຽດ, ຫລວງພັກດີນຸລັກ, ຫລວງພິ ພິດສົມບັດ, ຫລວງລາພິທັກ, ສະມີງບາບອົງວະ, ສະມີງຣາຊະເທວະ, ສະມີງນະລາຈອນ ສຸລະ... ສ່ວນໄພ່ພົນນັ້ນ ແມ່ນຖືກຂ້າຕາຍຢ່າງຫລວງຫລາຍ ຈົນນັບບໍ່ຖ້ວນ, ແຕ່ຍ້ອນ ສະຫຍາມເຫນືອກວ່າທັງກຳລັງພົນ ແລະ ອາວຸດ ກອງທັບຂອງພະຍາລິນ ຈຶ່ງສາມາດ ຕໍ່ສູ້ໄດ້ພຽງແຕ່ 3 ມື້ 3 ຄືນ ກໍ່ຖືກເຜົາຄ້າຍ ແຕ່ພະຍານະລິນບໍ່ຍອມກອຍຍັງຕໍ່ສູ້ຕໍ່ໄປ, ກອງທັບສະຫຍາມເຂົ້າຄ້າຍໄດ້ແລ້ວ ກໍ່ຈັບເອົາພະຍານະລິນມາໃສ່ຄຸກ ແລ້ວສົ່ງໄປໃຫ້ ກົມພະຣາຊະວັງບໍວອນ ແມ່ທັບຫລວງຂອງສະຫຍາມ ຖາມວ່າ ຈະຍອມອ່ອນນ້ອມຫລືບໍ່ກ້າຍອມຈະລ້ຽງໄວ້, ພະຍານະລິນຕອບວ່າຕົນແມ່ນລາວ ຊາຍຊາດທະຫານ ຈະບໍ່ມີວັນຍອມອ່ອນນ້ອມຕໍ່ສັດຕູຢ່າງເດັດຂາດຂໍຕາຍດີກວ່າ, ແມ່ທັບສະຫຍາມຈຶ່ງເອົາຊ້າງ ເຂົ້າແທງພະຍານະລິນຈົນຕາຍ ເມື່ອກອງທັບສະຫຍາມຕີຄ້າຍ

ຫນອງບົວລຳພູໄດ້ແລ້ວ ກໍ່ຍົກມາເພື່ອຕີກອງທັບລາວ ຢູ່ທົ່ງສົ້ມປ່ອຍຫ່າງຈາກຊ່ອງເຂົ້າສານ ປະມານ 10 ຫລັກ. ການຕໍ່ສູ້ຂອງພະຍານະລິນຄັ້ງນີ້ ເປັນການອົງອາດກ້າຫານທີ່ສຸດ ທີ່ຍອມເສຍສະຫລະທຸກສິ່ງທຸກຢ່າງ ເພື່ອເປັນແຫວ່ນແຍງອັນໃສແຈ້ງແກ່ລູກລາວຫລານ ລາວໃນພາຍລຸນ.

ຢູ່ຫລົ່ມສັກ, ກອງທັບສະຫຍາມ 3 ທັບຄື ທັງຂອງພະຍາໄພພູທອນ 5.000 ຄົນ, ທັບຂອງ ພະຍາເພັດພິໄຊ ແລະ ພະຍາໂຄສາ 5.000 ຄົນ ລວມທັງຫມົດເປັນ 10.000 ຄົນ ທີ່ຍົກຂຶ້ນ ໄປຕີກັບເຈົ້າຣາຊະວົງ ຢູ່ເມືອງຫລົ່ມສັກນັ້ນ ກໍ່ໄດ້ປະທະກັບກອງທັບເຈົ້າຣາຊະວົງ, ກອງທັບເຈົ້າຣາຊະວົງໄດ້ຕໍ່ສູ້ກັບກອງທັບສະຫຍາມທັງ 3 ກອງ ຈົນສຸດຄວາມສາມາດ ແຕ່ຍ້ອນກຳລັງພົນ ແລະ ອາວຸດດ້ອຍກວ່າສະຫຍາມຫລາຍເຈົ້າຣາຊະວົງ ຈຶ່ງຈຳເປັນ ຖອຍທັບຫນີມາທາງຊ່ອງພູເຂົ້າສານ ເພື່ອສົມທົບກັບກອງທັບຂອງເຈົ້າອະນຸຢູ່ວຽງ. ພະສຸຣິ ຍະວົງສາ ເຈົ້າເມືອງຫລົ່ມສັກ ກໍ່ພາໄພ່ພົນຫນີຕາມມາບໍາຢ່າງຫລວງຫລາຍ.

ເມື່ອກອງທັບສະຫຍາມຕີຄ້າຍຫນອງບົວລຳພູແຕກແລ້ວ ກອງທັບຫນ້າ 5 ທັບນັ້ນ ກໍ່ຍົກມາກຣມຕີຄ້າຍລາວຢູ່ທົ່ງສົ້ມປ່ອຍໂລດ ຈາກນັ້ນກົມຫມື່ນນະເລດໂຍທິ, ຈຶ່ງຄຸມພົນ 4.000 ຄົນເປັນກອງຫນ້າ, ເຈົ້າຂຸນເນນ ຄຸມພົນພະມ້າທະວາຍເປັນກອງຫລອນຢ່າງເດີມ ໂດຍມີທະ ຫານເມືອງນະຄອນຣາຊະສີມາ ເຂົ້າສົມທົບນຳເຈົ້າຂຸນເນນອີກ ລວມເປັນພັນປາຍຄົນ, ໃຫ້ຄອຍຕີ ກອງລຳລຽງຂອງລາວທີ່ຈະລຳລຽງສະບຽງອາຫານໄປສົ່ງກັນ ເມື່ອກອງທັບຂອງ ກົມຫມື່ນ ທັງສອງຍົກມາແລ້ວ ຈຶ່ງສັ່ງໃຫ້ກອງທັບຫນ້າທັງ 5 ກອງທັບ ຍົກມາກ່ອນນັ້ນ ເຂົ້າຕັ້ງຄ້າຍ ໃກ້ກອງທັບລາວໄວ້ຫລາຍດ້ານ.

ຝ່າຍພະຍາຊຽງຂວາ ແລະ ເຈົ້າຫນໍ່ຄຳ ແມ່ທັບລາວທີ່ຄ້າຍທົ່ງສົ້ມປ່ອຍ ໄດ້ຈັດທັບ ອອກຈາກທົ່ງສົ້ມປ່ອຍ ໄປຕີກອງທັບສະຫຍາມທີ່ເຂົ້າມາຕັ້ງຄ້າຍຢູ່ໃກ້ນັ້ນ, ໄດ້ສູ້ຮົບກັນສຸດ ຄວາມສາມາດ ກໍ່ຍັງຕີບໍ່ແຕກເຈົ້າຫນໍ່ຄຳຈຶ່ງປຶກສາກັບພະຍາຊຽງຂວາ ຈະຕ້ອງຈັດທັບໃຫຍ່ ຕາມຕຳລາພິສົງຄາມບູຮານ ອອກຕີກັບສະຫຍາມໃຫ້ແຕກໂດຍໄວ, ຄິດດັ່ງນັ້ນ ຈຶ່ງຈັດທັບອອກເປັນ 5 ກອງຄື: ໃຫ້ກອງຄຳ ເປັນແມ່ທັບຄຸມຄົນ 4.000 ຄົນ ລວມເປັນ 8.000 ຄົນ ແລ້ວຍົກອອກ ໄປຕີຄ້າຍສະຫຍາມ, ໃຫ້ພະຍາແສນເປັນແມ່ກອງຄຸມພົນ 4.000 ຄົນ, ໃຫ້ພະຍາບ່ານ ມີເຫລັກ ເປັນແມ່ກອງຄຸມພົນ 4.000 ຄົນ ລວມເປັນ 8.000 ຄົນ ໃຫ້ຍົກໄປເປັນກອງກ້າ ສູ້ຕາຍດັກສະກັດຢູ່ໃນປ່າ 2 ຝາກທາງ ຄອຍຕີກອງສະຫຍາມ ບໍ່ໃຫ້ມາຊ່ວຍກັນໄດ້, ໃຫ້ພະຍາເສືອຫານເປັນແມ່ກອງຄຸມ ພົນ 2.000 ຄົນ ຍົກໄປຮັກສາ ຫນອງນ້ຳຕາມທາງໄວ້ ບໍ່ໃຫ້ກອງທັບສະຫຍາມໃຊ້ນ້ຳໃນທຸກບ່ອນ. ໃຫ້ທ້າວມະຫາວົງ ກັບທ້າວພົນພັກເປັນແມ່ກອງຄຸມພົນ 2.000 ຄົນ ໃຫ້ຍົກໄປຕັດຕົ້ນທາງທີ່ກອງທັບສະຫຍາມ

ຈະຍົກມາ ເພື່ອໃຫ້ສະຫຍາມເດີນທາງທັບຊ້າລົງ. ທັງໃຫ້ຕັດເຄືອໄມ້ຢາເບື່ອຕ່າງໆໄປກຸ້ມໃສ່ຫ້ວຍໜອງຕ່າງໆ, ແຕ່ການໂຈມຕີແມ່ນບໍ່ເປັນໄປຕາມບູຮານ ຝ່າຍໃຊ້ປືນທັບສະໄໝສຸດທ້າຍທົ່ງສົ້ມປ່ອຍກໍແຕກ, ສຸດທ້າຍວຽງຈັນກໍຖືກປ່ອຍປະໃຫ້ຮ້າງໂດຍເຈົ້າອະນຸກອຍອອກເພື່ອຮັກສາຕົວເມືອງ ແລະ ອີກຫລາຍບັ້ນຮົບຝ່າຍລາວປຣາໄຊທັງໝົດຍ້ອນປືນໃຫຍ່ຂອງສະຫຍາມ.

ລາວເຮົາປຣາໄຊທັງໝົດ ແມ່ນຍ້ອນຫລາຍສາຍເຫດ ຄື ການຊຸ້ງຊາກຳ ລັງຂອງລາວຜິດພາດ, ສະຫຍາມມີອາວຸດທັນສະໄໝ ມີຮອດປືນສັ້ນ, ປືນໃຫຍ່ ແລະມີຮອດກອງທະຫານຕ່າງຊາດເຂົ້າຊ່ວຍ 8 ກອງ ເຊັ່ນ ກອງມອນ ກອງພະມ້າ ກອງຢຸໂຣບ ກອງຍີປຸ່ນພິເສດແມ່ນກອງຕີພິເສດ ຂອງພະຍາກະລາ ໂໜມຣາຊະເສນາ ພະຍາແສນຍາກອນແລະພະຍາວິເສດສົງຄາມ ແມ່ນກອງຕີພິເສດ ທີ່ມີນັກແມ່ນປືນ ເອຣົບປະຈຳການຢູ່ໂດຍເປັນນັກຍິງປືນໃຫຍ່, ນອກນີ້ຫລວງລິດສຳແດງ ຄຸມພົນທະຫານເອີຣົບ ເປັນກອງປືນໃຫຍ່ 300 ຄົນ ທັງເປັນກອງສູ້ຕາຍ ໄປນຳກອງທັບຫລວງ ຂອງພະຣາຊະວັງບໍວອນ, ສ່ວນທັບລາວກຽມປ້ອງກັນຄ້າຍ ໂດຍສ້າງຄ້າຍຄູຫລົບແບບຕຳລາພິໄຊສົງຄາມແບບບູຮານມີຂວາກໜາມ ທະຫານປະຈຳປ້ອມ ມີພະຍາສຸໂພ ພະຍາ ຊານົບ ພະຍາຊຽງສາພະຍາກອງຄຳ ພະຍາສຸລິນ ພະຍາຄຳ ພະຍາມືໄຟ ພະຍາມືເຫລັກ ພະຍາຊຽງໃຕ້ພະຍາຊຽງເໜືອ, ຄວາມຈິງແມ່ທັບໃຫຍ່ລາວໄປວຽງຈັນ ກັບເຈົ້າອະນຸ.

ແຕ່ສຸດທ້າຍສະຫຍາມກໍຍອມຮັບວ່າ "ສົງຄາມຄັ້ງນີ້ຝ່າຍລາວມີຄວາມແຂງແຮງຫລາຍ, ກ້າຈະທຽບໃສ່ພະມ້າທີ່ເຄີຍສູ້ຮົບກັນມາກໍບໍ່ທໍ່ລາວໃນຄັ້ງນີ້ ແລະຈະຫາເສິກອື່ນໆໃນພົງສາວະດານ ຫລືຈົດໝາຍເຫດເກົ່າແກ່ມາປຽບກໍສູ້ເສິກລາວຄັ້ງນີ້ບໍ່ໄດ້ ຍ້ອນເຈົ້າອະນຸມີພ້ອມບໍລິບູນດ້ວຍ ກຳລັງທັງ 4 ຢ່າງ ຄື: ຜູ້ຄົນ, 2. ສະບຽງອາຫານ, 3. ພາຫະນະຊ້າງມ້າງົວຄວາຍ 4. ຊັບສົມບັດ ກ້າເຮັດເສິກກັບເມືອງໃດເມືອງນັ້ນ ກໍຕ້ອງປຣາໄຊໃຫ້ເຈົ້າອະນຸ" (ອານາມສະຫຍາມຍຸດ ໜ້າ 213-214)

ພະຍານະລິນ ເຈົ້າເມືອງສີ່ມຸມ ແມ່ທັບລາວຜູ້ກ້າແກ່ນ ທີ່ຍອມຕາຍໃນບັ້ນລົບພູເຂົ້າສານ, ສະຫຍາມຈັບໄດ້ແລະເກັ້ຍກ່ອມໃຫ້ຈຳນົນ ແຕ່ເພິ່ນບໍ່ຍອມ ສະຫຍາມຈຶ່ງໃຊ້ຊ້າງແທງຕາຍ ນັ້ນຄືນ້ຳໃຈຄົນໂຄຣາດໃນອະດີດ ທີ່ເປັນເຈົ້າເມືອງສີ່ມຸມ ດຽວນີ້ເອີ້ນໃໝ່ວ່າເມືອງຈະຕຸລັດ.

4. ການດຳເນີນສົງຄາມບັ້ນປາຍ

ພາຍຫລັງຍຶດວຽງຈັນແລ້ວ ເຈົ້າອະນຸວົງພ້ອມຄອບຄົວຈຳນວນໜຶ່ງໄດ້ໄປເມືອງມະຫາໄຊກອງແກ້ວ ແລະ ໄປອານາມເພື່ອຂໍກຳລັງຫວຽດນາມກັບມາຕ້ານສະຫຍາມຄືນໃໝ່

ໃນເດືອນ 8 ແຮມ 7 ຄ່ຳ 1827 ເວລາບ່າຍ 4 ໂມງ ເຈົ້າອະນຸກໍນຳກຳລັງບຸກຕີທະຫານສະຫຍາມຢູ່ວັດກາງ, ຍຶດວັດກາງຄືນໄດ້ຈາກສະຫຍາມແມ່ທັບສະຫຍາມທັງ 3 ຄົນຢູ່ວັດກາງ ກໍ່ຖືກຂ້າຕາຍຄາສະໜາມຮົບ ຄື: ພະຍາພິໄຊສົງຄາມ, ພະຍາທຸກຂະຣາດ, ຫລວງສຸເລນທະລະວິຊິດ, ສ່ວນທະຫານຈຳນວນໜຶ່ງທີ່ອອກນອກຄ້າຍນັ້ນ ບໍ່ກ້າເຂົ້າຊ່ວຍກັນ, ໄດ້ພາກັນແລ່ນລົງຂອງເພື່ອຂ້າມຝາກ ແຕ່ພັດບໍ່ມີເຮືອຈຶ່ງລອຍຂ້າມ ແຕ່ກໍ່ຖືກທະຫານລາວພາຍເຮືອໄລ່ຟັນຕາຍລົງນ້ຳ, ລວມທະຫານສະຫຍາມຕາຍ 400 ປາຍຄົນ, ທີ່ຂ້າມໄປໄດ້ມີແຕ່ 45 ຄົນ ໄປແຈ້ງຕໍ່ພະຍາຣາຊະສຸພາວະດີ ແມ່ທັບໃຫຍ່ທີ່ພວມມາຮອດບ້ານພັນພ້າວ, ພະຍາຣາຊະສຸພາວະດີໄດ້ເຫັນທະຫານລາວໄລ່ຟັນ ແທງທະຫານສະຫຍາມກາງຫາດກາງນ້ຳດ້ວຍຕາຕົນເອງຄືແນວນັ້ນຈຶ່ງຢ້ານຕາຍ, ໂດຍສະເພາະກອງທະຫານເມືອງໂຄຣາດ ແລະ ຫົວເມືອງລາວອື່ນໆ ທີ່ຖືກເກນມານັ້ນ ພໍເຫັນແນວນັ້ນຈຶ່ງພາກັນແຕກໜີໝົດ, ເຈົ້າພະຍາຣາຊະສຸພາວະດີບໍ່ມີທາງສູ້ທະຫານລາວໄດ້ ຈຶ່ງຖອຍໄປເມືອງຍະໂສທອນ ໂດຍໃຫ້ພະຍາຊຽງສາພາໄປ ເພາະ ເມືອງຍະໂສທອນມີເຂົ້າປາອາຫານອຸດົມສົມບູນ ແລະ ໃກ້ກວ່າຈະໄປໂຄຣາດ, ກອງທັບສະຫຍາມໄດ້ຮີບຟ້າວປົບຕາຍລັດປ່າໄປຍະໂສທອນໃນແລງມື້ວັນນັ້ນ, ພ້ອມດຽວກັນນີ້ ແມ່ທັບສະຫຍາມຍັງໂກດແຄ້ນໃຫ້ທະຫານລາວຫົວເມືອງຂຶ້ນທີ່ແຕກໜີນັ້ນ ຈຶ່ງສັ່ງໃຫ້ຂຸນຮອງຈ່າເມືອງ ນຳກຳລັງໄປເມືອງນະຄອນຣາຊະສີມາ ເພື່ອຕິດຕາມຈັບທະຫານ ທີ່ແຕກໜີໃຫ້ຄົບຕາມບັນຊີ ແລະ ສັ່ງໃສ່ໂສ້ໄວ້ທຸກຄົນ ແລ້ວປັບໃໝຢ່າງໜັກ, ສ່ວນແມ່ທັບອານາມເຫັນເຫດການແນວນັ້ນ ກໍ່ພາກັນກັບຄືນເມືອງເງ່ອານ ເພື່ອລາຍງານໃຫ້ແມ່ທັບໃຫຍ່ຂອງຕົນຮູ້.

ໃນຕອນແລງມື້ນັ້ນ, ເຈົ້າຣາຊະວົງ ໄດ້ຕັດຫົວແມ່ທັບສະຫຍາມທັງ 3 ຄົນທີ່ຕາຍຄາສະໜາມຮົບນັ້ນ ໄປລຽນໄວ້ຫາດຊາຍແຄມຂອງໜ້າວັດກາງ ແລ້ວຕິດຕາມຈັບທະຫານສະຫຍາມທີ່ຍັງລີ້ຢູ່ຕາມທີ່ຕ່າງໆນັ້ນມາຈົນໝົດ ລວມທະຫານສະຫຍາມຕາຍທັງໝົດ 600 ປາຍຄົນ, ເຈົ້າລາຊະວົງເກັບໄດ້ປືນນ້ອຍນົກສັບຄາບສີລາ 500 ກະບອກ, ໄດ້ປືນແບບຫາມແລ່ນຂານົກຍາງ 20 ກະບອກ, ແລ້ວເຈົ້າຣາຊະວົງ ສັ່ງໃຫ້ ພະຍາສຸໂພ, ພະຍາຊຽງຂວາ, ພະຍາຊຽງຊ້າຍ ໄປປ່າວຮ້ອງເອົາປະຊາຊົນທີ່ຍັງລີ້ ຢູ່ຕາມປ່າດົງໃຫ້ມາຮ່ວມກັນຕີສະຫຍາມອີກເທື່ອໃໝ່, ປາກົດວ່າມີຜູ້ສະໝັກອອກມາ ຮັບໃຊ້ຊາດອີກເກືອງ 10.000 ຄົນ, ຄັດເລືອກເອົາແຕ່ຜູ້ສະກັນໄດ້ 4-5 ພັນຄົນ ໃຫ້ເຂົ້າເປັນກອງທັບ ແລ້ວເຈົ້າຣາຊະວົງສັ່ງໃຫ້ເພັຍມະນີ ແລະ ທ້າວມະຫາໄຊຄຸມພົນ 300 ຂ້າມໄປທີ່ບ້ານພັນພ້າວ ໃຫ້ຮື້ເຈດີປາບວຽງຈັນກຽງ ແຕ່ຍອດຮອດຖານ ແລ້ວນຳພະພຸດທະຮູບທີ່ພວກສະຫຍາມລັກພາເອົາຈາກວຽງຈັນ ຄື: ພະເສີມ, ພະແສງ, ພະສຸກ, ພະໃສ ທັງ 4 ອົງ ກັບມາໄວ້ເມືອງວຽງຈັນຄືເກົ່າ

ແລ້ວເຈົ້າຣາຊະວົງ ກໍ່ນຳພາທະຫານ ຊອກຫາອາວຸດ ຕາມທີ່ຕ່າງໆ ທີ່ສົງໃສວ່າພວກສະຫຍາມຈະນຳມາຊຸກເຊື່ອງ ແຕ່ກໍ່ຫາບໍ່ພົ້ຍ້ອນວ່າພວກເຂົາກຸ້ມລົງນ້ຳຂອງ ໃນບ່ອນທີ່ສອກຫລີກຈຶ່ງຫາບໍ່ເຫັນ.

ເຈົ້າອະນຸ ໄດ້ສັ່ງໃຫ້ເຈົ້າສຸດທິສານ, ຄຸມພົນທະຫານລາວເກົ່າ 2.000 ຄົນ ແລະທະຫານລາວໃຫມ່ 2.000 ຄົນ ຍົກໄປຮຽກຮ້ອງປະຊາຊົນລາວ ຕາມຫົວເມືອງລາວຣິມຂອງໃຫ້ມາຮ່ວມກັບເຂົ້າເປັນກອງທັບ ເພື່ອຈະຕາມໄປຕີພວກສະຫຍາມ.

ເຈົ້າອະນຸໄດ້ປັບປຸງກອງທັບລາວຄືນໃຫມ່ໄດ້ຈຳນວນຫນຶ່ງແລ້ວ ຈຶ່ງຈັດທັບລົງໄປຂັບໄລ່ ສະຫຍາມອອກຈາກດິນລາວອີກ 3 ທາງ ຄື: ໃຫ້ເຈົ້າສຸດທິສານ ຄຸມພົນ 3.000 ຄົນລ່ອງລົງໄປຕາມ ແມ່ນ້ຳຂອງແລ້ວຮຽກຮ້ອງເອົາປະຊາຊົນເຂົ້າກອງທັບຕື່ມ ແລ້ວໃຫ້ຕີກອງທັບສະຫຍາມຂອງພະວິຊິດສົງຄາມຢູ່ນະຄອນພະນົມ ແລະ ໃຫ້ຍົກທັບ ໄປຕີສະຫຍາມຢູ່ໂຄຣາດ ແລະ ໃຫ້ຕັ້ງດ່ານຢູ່ຫັ້ນ, ໃຫ້ເຈົ້າຣາຊະວົງເປັນແມ່ທັບໃຫຍ່ ມີແສນທ້າວພະຍາລາວນາຍທັບນາຍກອງເປັນປີກຂວາ ແລະປີກຊ້າຍຈຳນວນ 6.000 ຄົນ ຍົກຂ້າມຂອງໄປຕີກອງທັບພະຍາຣາຊະສຸພາວະດີໃຫ້ອອກຈາກດິນລາວ ແລ້ວໃຫ້ຕັ້ງທັບຮັກສາດ່ານ ເພື່ອຕ້ານສະຫຍາມ ທີ່ຈະມາຈາກກະບິນບຸລີ, ໃຫ້ເຈົ້າຫນໍ່ຄຳ ຄຸມກອງທັບ ຫົວເມືອງເຊິ່ງປຸກລະດົມມາໄດ້ 3.000 ຄົນ ໃຫ້ຍົກໄປຂັບໄລ່ພວກສະຫຍາມອອກຈາກ ເມືອງຫລົ່ມສັກ ເມືອງເລີຍ, ເມືອງເພັດຊະບູນ, ເມືອງໄຊບາດານ ແລ້ວໃຫ້ຕັ້ງທັບຮັກສາດ່ານແຖວນັ້ນໄວ້. ເມື່ອສົ່ງກອງທັບອອກໄປຫມົດແລ້ວ ເຈົ້າອະນຸໄດ້ຢູ່ຈັດການປ້ອງກັນເມືອງວຽງຈັນ ໄວ້ຢ່າງແຂງແຮງ, ໂດຍໄດ້ຕັ້ງຄ້າຍຢູ່ນອກເມືອງ 4 ມຸມ, ໄດ້ເຮັດກຳແພງເມືອງຂຶ້ນໃຫມ່, ໃຫ້ມີປະຕູຫໍຮົບຮອບເມືອງໂດຍນຳໄມ້ໄຜ່ມາປັກເປັນເສົາກຳແພງຈົນຮອບເມືອງເຮັດແບບຊົ່ວ ຄາວກ່ອນ. ເຈົ້າອະນຸໄດ້ແຕ່ງໃຫ້ພະຍາລື ກັບເພັຍມະຫາໄຊ ໄປຂໍກອງທັບເມືອງລື້, ເມືອງເຂີນເຊິ່ງແມ່ນລາວ 12 ພັນນາ ຂຶ້ນກັບຈີນຫົກໂຫຼໃຫ້ຍົກມາຊ່ວຍ ແລະ ເຈົ້າອະນຸໄດ້ແຕ່ງທູດລາວພາເຈົ້າຫລານຍິງສາວ ໄປຖວາຍເຈົ້າອັງວະ ເພື່ອຂໍກອງທັບພະມ້ານມາຊ່ວຍອີກ.

ກອງທັບເຈົ້າຣາຊະວົງ ຕີກອງທັບພະຍາລາຊະສຸພາວະດີຢູ່ທົ່ງບົກຫວານ:

ເຈົ້າຣາຊະວົງ ຍົກກອງທັບໃຫຍ່ໄປຕາມແມ່ນ້ຳຂອງ ແລະ ຂຶ້ນໄປໃສ່ຍະໂສທອນ. ບໍ່ພົ້ກອງທັບພະຍາລາຊະສຸພາວະດີ ແຕ່ສືບຮູ້ວ່າກອງທັບພະຍາລາຊະສຸພາວະດີ ໄປຕັ້ງທັບຢູ່ເມືອງສຸວັນນະພູມຈຶ່ງຍົກຕິດຕາມໄປຕີ, ໄປເຖິງບ້ານຕະກຸດໃກ້ເມືອງສຸວັນນະພູມ ສືບຮູ້ວ່າກອງ ທັບສະຫຍາມຕັ້ງຫມັ້ນຢູ່ເມືອງສຸວັນນະພູມດົນແລ້ວ, ເຈົ້າຣາຊະວົງຈຶ່ງຕັ້ງຄ້າຍໃຫຍ່ 3 ຄ້າຍຢູ່ບ້ານທົ່ງບົກຫວານ, ແລ້ວໃຫ້ຫົວຫນ້າຄ້າຍທັງ 3 ຄື: ພະຍາຄຳເກີດ, ກອງແກ້ວ ແລະກອງທອງຄຸມທະຫານອອກໄປເກັບຄົນ ແລະ ສະບຽງອາຫານມາໄວ້ໃນທົ່ງບົກຫວານ,

ເຈົ້າລາຊະວົງໃຫ້ເພັຍສາຄອນກັບທ້າວແສນໃຈຫານ ຄຸມກອງທັບໄປລີພີປ້ອງກັນກອງທະຫານຈາກຄ້າຍອະເຫມນ, ເຈົ້າຣາຊະວົງແຕ່ງໃຫ້ ທ້າວເພັດເດຊະເປັນທູດຖືຫນັງສືພ້ອມເຄື່ອງບັນນາການ ມີຄຳແລະເພັດຕ່າງໆ ໄປກວາຍນັກອົງຈັນເຈົ້າຊີວິດອະເຫມນ ເພື່ອຂໍກອງທັບອະເຫມນມາຊ່ວຍຕີສະຫຍາມອອກຈາກລາວ (ໃນເວລານັ້ນອະເຫມນກໍ່ບໍ່ຖືກກັບສະຫຍາມຍ້ອນສະຫຍາມຮຸກຮານ ແລະ ຍຶດຄອງອະເຫມນ).

ຝ່າຍພະຍາລາຊະສຸພາວະດີ ຢູ່ໃນຄ້າຍເມືອງສຸວັນນະພູມນັ້ນ ໄດ້ແຕ່ງຄົນອອກສືບຂ່າວເສິກ 3 ກອງ 3 ທາງ ໄດ້ຄວາມຈາກກອງຂອງຫມໍ່ໂພນໄພວ່າ: ກອງທັບລາວມີກຳລັງຫລາຍເຂົ້າຕີນະຄອນພະນົມ ສຽງປືນດັງສະຫນັ່ນ ແລະ ຍຶດຄອງນະຄອນພະນົມໄດ້ແລ້ວ, ກອງຂອງນາຍປ່ານຟ້າກັບໄປແຈ້ງວ່າ: ເຫັນຄ້າຍລາວຕັ້ງຢູ່ທົ່ງບົກຫວານມີ 3 ຄ້າຍ ມີຈຳນວນພົນປະມານ 7.000 ຄົນ. ກອງຂອງຫນານເມືອງມາກັບໄປແຈ້ງວ່າ: ເຈົ້າສຸດທິສານ, ເຈົ້າຣາຊະວົງ. ເຈົ້າໂອ ທັງ 3 ຄົນນີ້ ໄປປຸກລະດົມຄົນເຂົ້າກອງທັບລາວໄດ້ເກືອບ 10.000 ຄົນແລ້ວ ດຽວນີ້ມີກອງທັບລາວຢູ່ເມືອງສີສະເກດ, ເມືອງເດດອຸດອນ ເປັນ 2 ກອງທັບໃຫຍ່ ພວມກຽມລຳລຽງສະບຽງອາຫານໄປໄວ້ຢູ່ເມືອງພູຂຽວ ກຽມໄປ ຕີໂຄລາດ, ຄາວນີ້ປະຊາຊົນລາວໃຫ້ການສະຫນັບສະຫນູນເຈົ້ານາຍລາວຫລາຍ
ເພື່ອກອບກູ້ບ້ານເມືອງຄືນໃຫມ່.

ເຈົ້າພະຍາລາຊະສຸພາວະດີ ຮູ້ແນວນັ້ນແລ້ວ ຈຶ່ງຍົກທັບໄປຕີທົ່ງບົກຫວານ (ເຂົ້າໃຈວ່າຢູ່ໃນແຂວງຫນອງຄາຍ) ໃນວັນເສົາເດືອນ 10 ຂຶ້ນສອງຄ່ຳແລ້ວຕັ້ງຄ້າຍ ໃກ້ຄ້າຍລາວເກືອ 7 ຄ້າຍ ແລ້ວໃຊ້ກົນອຸບາຍຫລອກລວງກອງທັບລາວ ຕ່າງໆນາໆ ໃນວັນສຸກເດືອນ 11 ຂຶ້ນ 10 ຄ່ຳ ພວກເຂົາໃຊ້ກົນອຸບາຍໂດຍໃຫ້ພະຍາພິໄຊລະນະລິດ, ພະຍາວິຊິດນະລົງ ຄຸມທະຫານກອງລະ 500 ຄົນໄປດັກສະກັດຕີກອງທັບ ເຈົ້າຣາຊະວົງຕາມຂ້າງທາງ ໃຫ້ກອງທັບເຈົ້າອົ້ນເປັນກອງທັບມ້າໄວ ມີມ້າ 100 ໂຕ ເປັນກອງ ຫນູນໃຫ້ພະຍາມະຫາສົງຄາມ ແລະ ພະຍາພິໄຊເປັນກອງປີກຊ້າຍປີກຂວາ 600 ຄົນ, ແລະ ມີກອງຂະຫນາບຂ້າງອີກ 2 ກອງ 600 ຄົນມີກອງຫລອນອີກ 500 ຄົນ ແລ້ວໃຫ້ພະຍາສົງຄາມ ນຳກອງທະຫານມ້າໄປຕີກອງທັບເຈົ້າຣາຊະວົງ ເພື່ອໃຫ້ກອງທັບເຈົ້າຣາຊະວົງໄລ່ຕິດຕາມມາແລ້ວຕົກເຂົ້າໃນວົງ ລ້ອມດັກສະກັດສະຫຍາມ ແລະ ພະຍາຣາຊະສຸພາວະດີ ຍັງໄດ້ແຕ່ງຕັ້ງກອງຫນຶ່ງຂອງພະຍາຣາຊະສົງຄາມໄປຕັ້ງຢູ່ປ່າ ໃກ້ຄ້າຍລາວເພື່ອກຽມຕີ ແລະເຜົາຄ້າຍລາວໃນ ເວລາກອງທັບເຈົ້າຣາຊະວົງຕົກກຶກວົງດັກສະກັດ, ໃຫ້ພະຍາລາດຣອງເມືອງເປັນ ແມ່ທັບຢູ່ຮັກສາຄ້າຍໃຫຍ່. ໃຫ້ພະຍາວິເສດສົງຄາມເປັນທັບເລາະລຽບປ່າ, ໃຫ້ພະສິນທັບເປັນກອງສິ່ງຂ່າວ, ໃຫ້ກອງທັບເມືອງສຸວັນນະພູມເປັນທັບຄອຍຕີຕັດຫລັງ ແລະ ສະຫຍາມຍັງມີກອງຮັກສາດ່ານ ນ້ຳຂອງ

ແລະ ຂະເໜນມອີກນຳ, ເມື່ອຈັດທັບຮຽບຮ້ອຍແລ້ວ, ເຈົ້າພະຍາຣາຊະສຸພາວະດີ ກໍ່ຍົກອອກຈາກຄ້າຍໄປກວາດກາກາງສະໜາມຣົບ ແລະ ກອງທະຫານມ້າສະຫຍາມ ກໍ່ໄດ້ໄປຕີຄ້າຍທະຫານລາວຢູ່ທົ່ງບົກຫວານ ທະຫານລາວນຳໂດຍເຈົ້າຣາຊະວົງ ໄດ້ອອກມາ ຕໍ່ສູ້ກັບກອງທັບສະຫຍາມ ແລະໄລ່ກອງທັບສະຫຍາມຈົນມາຖືກວົງລ້ອມ ຈຶ່ງເກີດການຕໍ່ສູ້ກັນຈົນສຸດຄວາມສາມາດ ເຮັດໃຫ້ຂີ້ຝຸ່ນຄວັນກຸ້ມໄປທົ່ວທົ່ງທົ່ວປ່າ, ຝ່າຍລາວຮູ້ວ່າຕົກຖືກວົງ ລ້ອມກໍພະຍາຍາມຕີແຫກອອກຝ່າຍລາວເຖິງຈະມີກຳລັງພົນນ້ອຍກວ່າ ແລະອາວຸດດ້ອຍ ກວ່າກໍຕາມແຕ່ກໍມີໃຈສູ້ສຸດຂີດ ເຮັດໃຫ້ທັງສອງຝ່າຍລົ້ມຕາຍ ຢ່າງຫລວງຫລາຍ.

ໃນເວລາທີ່ພວມສູ້ກັນຢ່າງດຸເດືອດຢູ່ນັ້ນ ເຈົ້າຣາຊະວົງໄດ້ຫລຽວເຫັນແມ່ທັບໃຫຍ່ສະຫຍາມຂີ່ມ້າຢູ່ກາງພົນທະຫານ, ເຈົ້າຣາຊະວົງຈຶ່ງຊັກມ້າກົງໄປຫາທັນທີ, ຕໍ່ສູ້ກັນຕົວຕໍ່ຕົວລະຫວ່າງແມ່ທັບຕໍ່ແມ່ທັບ, ເຈົ້າພະຍາລາຊະສຸພາວະດີເຫັນເຈົ້າລາຊະວົງເຂົ້າມາໃກ້ ຈຶ່ງຊັກມ້າກຽມກອຍໜີຍ້ອນຢ້ານແມ່ທັບລາວ, ແຕ່ໜີບໍ່ທັນຖືກເຈົ້າລາຊະວົງ ຂີ່ມ້າກືຫອກແທງຖືກເອິກເຊາະລົງໄປເຖິງທ້ອງນ້ອຍ ຈົນຕົກມ້ານອນລົ້ມດີ້ນກາງດິນ, ຮອຍບາດແຜຍາວ 8 ນິ້ວ ເລິກເຄິ່ງກະບຽດ, ເລືອດໄຫລຊະ, ເຈົ້າຣາຊະວົງໂດດລົງໄປຊໍ້າ, ຫລວງພິພິດນ້ອງຊາຍເຈົ້າພະຍາຣາຊະສຸພາວະດີ ກອດດາບອອກມາຊ່ວຍປ້ອງກັນອ້າຍໄວ້, ເຈົ້າຣາຊະວົງຍົກດາບຟັນຫລວງພິພິດຂາດເຄິ່ງ, ພໍດີພວກທະຫານສະຫຍາມ ຍິງປືນສຸມໃສ່ເຈົ້າຣາຊະວົງລູກໜຶ່ງຖືກກະດູກສັນຫລັງ ອີກລູກໜຶ່ງຖືກກະໂພກເຮັດໃຫ້ເຈົ້າຣາຊະວົງລົ້ມລົງ, ພວກທະຫານເຂົ້າໃຈວ່າຕາຍກໍ່ເຂົ້າຫາມເອົາເຈົ້າລາຊະວົງ ແຕ່ພໍເຈົ້າຣາຊະວົງໄດ້ສະຕິກໍລຸກຂຶ້ນຂີ່ມ້ານຳພາກອງທັບລາວ ຕີຜ່າວົງລ້ອມອັນແໜ້ນໜາຂອງສະຫຍາມອອກໄປໄດ້, ສ່ວນຄ້າຍໃຫຍ່ກໍ່ຖືກສະຫຍາມຍຶດໄດ້ໝົດ ເຈົ້າຣາຊະວົງຈຶ່ງກອຍໜີກັບມາວຽງຈັນຍ້ອນມີກຳລັງນ້ອຍ.

ສົງຄາມເທື່ອນີ້ຝ່າຍສະຫຍາມເຖິງມີກຳລັງເໜືອກວ່າ ແຕ່ກໍ່ເສັຍນາຍທັບ ຫລາຍຄົນຄື: ຫລວງຈະຕຸລົງໂຍທີ, ຫລວງພິນິດໂຍທາ, ພະພົມບຸລີ, ຫລວງພິພິດ ແລະ ນາຍທັບອື່ນໆອີກ ແລະ ທະຫານທັງສອງຝ່າຍກໍ່ຕາຍຈຳນວນຫລາຍທັງ 2 ຝ່າຍ.

ພະຍາຣາຊະສຸພາວະດີ ແມ່ທັບສະຫຍາມ ຫລັງຈາກປິ່ນປົວບາດແຜແລ້ວ ຈຶ່ງຂຶ້ນຄານຫາມຍົກທັບຕິດຕາມເຈົ້າຣາຊະວົງມາຮອດບ້ານພັນພ້າວ ແລ້ວກຽມຈັດທັບຕີເອົານະຄອນວຽງຈັນ.

5. ການເຜົານະຄອນວຽງຈັນ.

ເຈົ້າຣາຊະວົງເມື່ອນຳກອງທະຫານມາຮອດວຽງຈັນແລ້ວ ໄດ້ເຂົ້າລາຍງານ ຕໍ່ເຈົ້າອະນຸວົງໃຫ້ຮູ້ ເຖິງການເຮັດສົງຄາມແບບປະເຊີນໜ້າຕົວຕໍ່ຕົວກັບແມ່ທັບສະຫຍາມ, ແລະ

ໄດ້ລາຍງານໃຫ້ຮູ້ວ່າ ກອງທັບສະຫຍາມມີກຳລັງຫລວງຫລາຍທີ່ສຸດ ທັງຈັບໄດ້ພະຍາຊຽງສາ ແລະ ພະຍາສີງຄາມວຽງໄຊແລະທະຫານຂອງຝ່າຍເຮົາກໍ່ລົ້ມຕາຍຫລາຍ, ຖືກຈັບກໍ່ຫລາຍແຕກຫນີກໍ່ຫລາຍ ຍ້ອນອາວຸດຂອງຝ່າຍສະຫຍາມເຫນືອກວ່າ, ແລະ ພວກສະຫຍາມກໍ່ພວມຍົກກອງທັບທັງຫມົດເພື່ອຕາມມາຕີວຽງຈັນ.

ເຈົ້າອະນຸ ເຈົ້າຣາຊະວົງ ເມື່ອປຶກສາກັນແລ້ວ ກໍ່ສັ່ງໃຫ້ທະຫານເກັບເຄື່ອງຂອງທີ່ມີຄ່າທຸກຢ່າງໄປຊຸກເຊື່ອງ ແລະ ເກັບອາວຸດກົ້ມລົງນ້ຳຂອງເທົ່າທີ່ຈະເຮັດທັນ ແລ້ວຈຶ່ງອົບພະຍົບຫນີຈາກວຽງຈັນ ໃນເດືອນ 11 ອອກໃຫມ່ 11 ຄ່ຳ ເວລາຂ້ອນແຈ້ງ, ຕິດຕາມໄປນຳເຈົ້າອະນຸ ມີເຈົ້າລາຊະວົງ, ເຈົ້າເຫມັນ, ເຈົ້າຂັດຕິຍະ, ເຈົ້ານາງຄຳປ້ອງມະເຫສີ, ເຈົ້ານາງຊຽງຄຳ, ເຈົ້ານາງບົວສາຍາເຈົ້າຣາຊະວົງ, ເຈົ້ານາງທອງດີ, ເຈົ້ານາງຄຳໃສ, ເຈົ້ານາງບຸສະບາ, ເຈົ້ານາງຄຳແພງ, ເຈົ້າຫນູ ກັບບ່າວໄພອີກ 3 ຄົນ, ສ່ວນເຈົ້າຣາຊະວົງນັ້ນ ພໍໄປຮອດທ່າຂ້າມຊ້າງຈຶ່ງແຍກທາງກັບເຈົ້າອະນຸ ລົງເຮືອກັບຊາຍາໄປຂຶ້ນໃສ່ເມືອງມະຫາໄຊກອງແກ້ວເພື່ອໄປຫາກູານທີ່ຫມັ້ນຢູ່ບ້ານປາມັນ. ໃນຮຸ່ງເຊົ້າຂອງມື້ນັ້ນ ເຈົ້າສຸດທິສານ ກໍ່ພາຄອບຄົວ ແລະ ຍາດວົງຈຳນວນຫນຶ່ງອົບພະຍົບ ອອກຈາກວຽງຈັນໄປອີກ.

ພະຍາຣາຊະສຸພາວະດີ ໄດ້ຍົກກອງມາຕັ້ງຄ້າຍຢູ່ທີ່ຄ້າຍເກົ່າບ້ານພັນພ້າວ ແລ້ວສົ່ງພະຍານະຄອນສະຫວັນ ຍົກພົນ 1.500 ຄົນ ຂ້າມມາຍຶດເອົາວຽງຈັນ, ໃຫ້ພະຍາຣາຊະສົງຄາມ, ພະຍາພິໄຊລະນະລິດ, ພະຍາພິຊິດນະລົງ ຄຸມພົນ 3.000 ຄົນ ເປັນກອງຫນູນຍົກພົນຂ້າມຢູ່ທ່າຊ້າງຂ້າມທ້າຍເມືອງວຽງຈັນ, ໃຫ້ພະຍາສົງຄາມຍົກພົນໄປ ຮັກສາດ່ານຕາເວັນຕົກ, ໃຫ້ພະຍາສົງຄາມຍົກພົນໄປຮັກສາທ່າຂ້າມເມືອງຫນອງຄາຍ. ທະຫານເຂົ້າຍຶດເອົາເມືອງວຽງຈັນໄດ້ໂດຍງ່າຍດາຍ. ແລ້ວພວກເຂົາກໍ່ທຳລາຍປຸ້ນຈີ້, ເກັບກວາດເອົາຊັບສົມບັດຕ່າງໆໃນຕົວເມືອງ ແລະ ກວາດຕ້ອນເອົາປະຊາຊົນ ທີ່ຍັງເຫລືອຢູ່ນັ້ນໄປລວມກັນໄວ້ແລ້ວຫລວງເສນີ ຄຸມທະຫານ 500 ຄົນ ຢູ່ຮັກສາພວກຄົວວຽງຈັນ, ພະຍານະຄອນສະຫວັນ ກໍ່ຍົກທັບອອກຈາກວຽງຈັນ ຕິດຕາມຈັບເຈົ້າອະນຸ ໄປເຖິງບ້ານໄຜ່ໃກ້ເມືອງເພັນກໍ່ບໍ່ພົບເຈົ້າອະນຸ, ພົບແຕ່ຄອບຄົວເຈົ້ານາຍລາວຈຳນວນຫນຶ່ງ, ພະຍານະຄອນສະຫວັນຈຶ່ງຈັດກອງທະຫານເຂົ້າລ້ອມໄວ້ແລ້ວ ຍົກປືນຫາມແລ່ນຍິງໄປໃສ່, ລູກປືນຕົກໃສ່ຫມູ່ເຈົ້າຍິງລາວຖືກເດັກນ້ອຍອາຍຸ 11 ປີຕາຍຄົນຫນຶ່ງ, ຝ່າຍລາວກຽມພາກັນຕໍ່ສູ້ກັບກອງທັບສະຫຍາມ ພ້ອມຊ້າງມ້າໄດ້ເຂົ້າລ້ອມໄວ້ໂດຍຮອບ, ໃນທີ່ສຸດຂະບວນອົບພະຍົບກໍ່ຖືກຈັບໄດ້ທີ່ປາກຫ້ວຍໄຜ່ໃກ້ເມືອງເພັນ ໃນເດືອນ 11 ຂຶ້ນ 15 ຄ່ຳ, ໃນນັ້ນ ມີເຈົ້າຊາຍ 5 ເຈົ້າຍິງ 1 ຄື: ເຈົ້າສຸດທິສານ, ເຈົ້າເຕ້, ເຈົ້າປັນ, ເຈົ້າດວງຈັນ, ເຈົ້ານາງຄຳວັນ ທັງ 6 ຄົນແມ່ນລູກຂອງເຈົ້າອະນຸ ແລະ ຫລານເຈົ້າອະນຸ 1 ຄົນ ຄືເຈົ້າຫລອດ (ລູກເຈົ້າສຸດທິສານ)

ພະຊາຍານ້ອຍເຈົ້າອະນຸ 3 ຄົນ ຄື: ນາງມາໄລ, ນາງວອນ, ນາງວັນດີ ຍາດວົງຂອງເຈົ້າອະນຸອີກ 3 ຄົນ ຄື: ທ້າວພົມມາ, ທ້າວເປມປີດາ ແລະ ພະຍາຊຽງດີ ແລະ ຍັງມີສາວໃຊ້ ແລະ ໄພພົນອື່ນອີກ 43 ຄົນ; ພວກສະຫຍາມໄດ້ຈັບ ບຸກຄົນທັງຫມົດໃສ່ຄາ ແລ້ວນຳໄປສົ່ງໃຫ້ພະຍາຣາຊະສຸພາວະດີ ຢູ່ຄ້າຍພັນພ້າວ.

ພະຍາສຸພາວະດີ ສັ່ງໃຫ້ພະຍາຣາມກຳແຫງ ນຳກຳລັງໄປສົມທົບພະຍານະຄອນສະຫວັນ ໃຫ້ຊ່ວຍຕິດຕາມຈັບເຈົ້າອະນຸທີ່ໄປທາງເມືອງເພນ, ໃຫ້ພະຍາອະໄພສົງຄາມ ຄຸມພົນ 500 ພົນ ໄປສົມທົບກັບຫລວງພັກດີສົງຄາມ ຕິດຕາມຈັບເຈົ້າຣາຊະວົງ ທີ່ໄປທາງເມືອງມະຫາໄຊກອງແກ້ວ.

ພະຍາຣາຊະສຸພາວະດີໄດ້ຂ້າມມາທີ່ວັດຈັນ ແລ້ວສັ່ງການໃຫ້ທະຫານ **ທຳລາຍເຜົາຜານຕົວເມືອງວຽງຈັນຈົນຫມົດສິ້ນ** ແລະ ຕິດຕາມກວາດຕ້ອນຄອບຄົວໄປໄວ້ຢູ່ຄ້າຍບ້ານພັນພ້າວ ເພື່ອກວດໄປບາງກອກໃຫ້ຫມົດສິ້ນໃນເດືອນ 12 ນີ້, ເພື່ອໃຫ້ເມືອງວຽງຈັນຍັງຢູ່ແຕ່ດິນເປົ່າເປັນປ່າດົງຕາມຄຳສັ່ງຂອງເຈົ້າຊີວິດສະຫຍາມ.

ຝ່າຍເຈົ້າອານາມ ເມື່ອຮູ້ວ່າເຈົ້າອະນຸ ເຂົ້າຍຶດເອົາວຽງຈັນຄືນ ໂດຍບໍ່ປະຕິບັດຕາມຄຳແນະນຳຂອງເຈົ້າອານາມ ແລະກໍ່ກອງທັບສະຫຍາມຕາມຈັບຢູ່, ເຈົ້າອານາມຈຶ່ງສົ່ງຣາຊະທູດມານະຄອນພະນົມ ເພື່ອຂໍເຈລະຈາກັບແມ່ທັບສະຫຍາມ ໂດຍມີ ກາຍໂດຍທຸງເປັນຫົວຫນ້າ, ດິນຍູດວຽນຫູ ເປັນຜູ້ແປພາສາ ແລະທະຫານ 50 ຄົນ, ມາຮອດນະຄອນພະນົມແລ້ວ ກໍ່ເຂົ້າພົບກັບນາຍທັບສະຫຍາມ 3 ຄົນ ຄື: ພະວິຊິດສົງຄາມ, ຫລວງນະລາ, ຫລວງຈົ່ງໃຈຍຸດ ເພື່ອຂໍເຈລະຈາກັບແມ່ທັບໃຫຍ່ຢູ່ບ້ານພັນພ້າວ.

ພະວິຊິດສົງຄາມຮູ້ຈຸດປະສົງຂອງຝ່າຍອານາມແລ້ວ ໄດ້ຂຽນຫນັງສືສະບັບຫນຶ່ງແລ້ວແຕ່ງໃຫ້ຂຸນຫານຣິດທິຣະນະວົງ ນຳໄປສົ່ງໃຫ້ພະຍາຣາຊະສຸພາວະດີ, ພະຍາສຸພາວະດີມີຫນັງສືຕອບວ່າ: ຄັ້ງກ່ອນທະຫານສະຫຍາມຕາຍເກືອບ 700 ຄົນ ຢູ່ວຽງຈັນຍ້ອນຫລົງເຊື່ອພວກທະຫານອານາມທີ່ມາສົ່ງເຈົ້າອະນຸ, ຄັ້ງນີ້ພວກມັນຈະຫລອກຂ້າພວກເຮົາອີກ ຈົ່ງກຳຈັດພວກອານາມນັ້ນເສຍ...

ເມື່ອໄດ້ຮັບຄຳສັ່ງແລ້ວນາຍທັບສະຫຍາມ 3 ຄົນ ຈຶ່ງວາງແຜນສັ່ງທະຫານອານາມທັງຫມົດ ໂດຍຫລອກລວງວ່າຈະຈັດງານລ້ຽງ ເປັນການຮັບຮອງສາຍສຳພັນໄມຕີຕໍ່ກັນ, ຝ່າຍອານາມຄິດວ່າ ຈະເປັນການລ້ຽງຮັບຮອງຢ່າງແທ້ ຈຶ່ງແຕ່ງທະຫານ 2 ຄົນຢູ່ເຝົ້າເຮືອນນອກນັ້ນພາກັນເຂົ້າໄປໃນຄ້າຍສະຫຍາມທັງຫມົດ ແລະນັ່ງລົງໃນເຮືອນຮັບຮອງພ້ອມກັນແລ້ວ ນາຍທັບສະຫຍາມກໍ່ຮ້ອງສັ່ງໃຫ້ພັກພວກທີ່ກຽມໄວ້, ພ້ອມກັນສັງຫານທະຫານອານາມຕາຍເກືອບຫມົດ.

ໃນເວລາທີ່ຂ່າວເຈົ້າອະນຸພວມອົບພະຍົບຂຶ້ນໄປທາງເມືອງພວນ ແລະ ພວກສະຫຍາມພວມແຕ່ງທັງກອງທັບສະຫຍາມ ທັງກອງທັບຫົວເມືອງໄລ່ຕິດຕາມຂຶ້ນໄປ ທາງເມືອງພວນ, ເຈົ້ານ້ອຍເມືອງພວນເຊິ່ງເປັນຫົວເມືອງຂຶ້ນຂອງອານາມຢູ່ໃນເວລານັ້ນ ແລະ ມີກອງທະຫານອານາມປະຈຳຢູ່ ຈຶ່ງແຕ່ງກອງທັບອອກຕາເວນໄປເກືອບທຸກດ້ານ ເພື່ອຮັກສາເຂດແດນເມືອງພວນຢ່າງເຄັ່ງຄັດຕາມຄຳສັ່ງຂອງເຈົ້າຊີວິດອານາມຈາກເມືອງເວ້, ກ້າເຈົ້ານ້ອຍຫາກປ່ອຍໃຫ້ກອງທະຫານສະຫຍາມລ່ວງລ້ຳ ເຂດແດນເມືອງພວນ, ເຈົ້າອານາມກໍ່ຈະເອົາຄວາມຜິດຈາກເຈົ້ານ້ອຍ, ເຈົ້ານ້ອຍຢ້ານທະຫານສະຫຍາມຈະລ່ວງລ້ຳເຂົ້າເຂດແດນເມືອງພວນ ຈຶ່ງມີຫນັງສືແຈ້ງມາຫາແມ່ທັບສະຫຍາມຢູ່ວຽງຈັນ ໃນເດືອນ 12 ຂຶ້ນ 12 ຄ່ຳວ່າ: ເຈົ້ານ້ອຍເມືອງພວນເປັນເມືອງຂຶ້ນຂອງອານາມ ແຕ່ວ່າເຂດແດນເມືອງພວນຕິດຕໍ່ກັບວຽງຈັນ, ເມື່ອເຈົ້າອະນຸລຸກຂຶ້ນຕໍ່ສູ້ ກັບສະຫຍາມ ແລ້ວຫນີມາໃກ້ເມືອງພວນນັ້ນ ຂໍຢ່າໃຫ້ກອງທັບສະຫຍາມຍົກຕິດຕາມ ເຈົ້າອະນຸໄປເຂດແດນເມືອງພວນເລີຍ ຢ້ານປະຊາຊົນພົນລະເມືອງແຕກຕື່ນ, ເມືອງພວນຈະຈັບເຈົ້າອະນຸ ແລະ ຄອບຄົວສົ່ງໃຫ້ກອງທັບສະຫຍາມຈະບໍ່ປ່ອຍປະໃຫ້ຫນີໄປໄດ້ເປັນອັນຂາດ.

ພະຍາຣາຊະສຸພາວະດີ ມີຫນັງສືຕອບວ່າ: ກອງທັບສະຫຍາມບໍ່ລ່ວງລ້ຳເຂດແດນເມືອງພວນ, ແຕ່ກ້າເຈົ້ານ້ອຍເມືອງພວນຫາກມີກົນອຸບາຍຊ່ວຍເຈົ້າອະນຸ ໃຫ້ຫນີພົ້ນຈາກເມືອງພວນນັ້ນ, ກອງທັບສະຫຍາມຈຳເປັນຈະຕ້ອງຕິດຕາມຈັບຕົວເຈົ້າອະນຸໃຫ້ໄດ້ ແລ້ວຈຶ່ງຈະກັບອອກ, ແລ້ວເອົາຫນັງສືນີ້ສົ່ງໃຫ້ເພັຍເມືອງກາງ ກັບເພັຍຫົວໄຊກືກັບໄປໃຫ້ເຈົ້ານ້ອຍເມືອງພວນ.

ໃນເດືອນ 12 ແຮມ 4 ຄ່ຳ ຫລວງໄຊຍົດ ຂ້າຫລວງສະຫຍາມ ກືຫນັງສືໄປແຈ້ງໃຫ້ເມືອງນ່ານ ເມືອງລັບແລ ຍົກທັບມາສົມທົບກັບຫລວງພະບາງ ເພື່ອຊ່ວຍກັນຕາມຈັບເຈົ້າອະນຸ ແລະ ກວາດຕ້ອນເອົາປະຊາຊົນລາວລົງໄປບາງກອກ, ກອງທັບເມືອງນ່ານນຳໂດຍຫນານອັດຕິຍະ, ກອງທັບເມືອງລັບແລ ນຳໂດຍພະຍາລັບແລ, ກອງທັບເມືອງຫລວງພະບາງ ນຳໂດຍທ້າວມະຫາພົນ, ກອງທັບທັງ 3 ຄຸມພົນກອງລະ 300-400 ຄົນມາຕາມຈັບເຈົ້າອະນຸຢູ່ເຂດເມືອງພວນ.

ພະຍາຣາຊະສຸພາວະດີ ກໍແຕ່ງໃຫ້ພະຍາສຸນທອນສົງຄາມ ຄຸມທະຫານທຍາມ 500 ຄົນຂຶ້ນໄປຕາມຈັບເຈົ້າອະນຸໃຫ້ຈົບໄດ້, ແຕ່ເວລາທີ່ພວມຍົກພົນຂຶ້ນໄປນີ້, ກອງທັບ ຂອງເຈົ້າຫນານອັດຕິຍະ, ພະຍາລັບແລ ແລະ ທ້າວມະຫາພົມ ກໍ່ຈັບເຈົ້າອະນຸ ແລະ ຄອບຄົວຢູ່ນ້ຳໄຮຕີນພູລັງໄຂ ເຊິ່ງເຈົ້າອະນຸພັກຢູ່ຫັ້ນ ເພື່ອລໍກ້າຄອບຄົວທີ່ຕິດຕາມມານຳຫລັງ, ເຈົ້າອະນຸພ້ອມດ້ວຍຄອບຄົວຈຶ່ງກືກພວກເອົາຈັບໃສ່ຄານຳລົງມາວຽງຈັນ. ມາຮອດທາດເດືອຍຈຶ່ງພໍ້ກັບ

ກອງທັບພະຍາສຸບທອນສິງຄາມ ຈຶ່ງພາກັນກັບມາວຽງຈັນ. ຜູ້ທີ່ຖືກຈັບຄັ້ງນີ້ ຄື: ເຈົ້າອະນຸ ແລະ ຊາຍາຂອງເພິ່ນ 6 ຄົນ ຄື : ເຈົ້ານາງ ຄຳປ້ອງ, ເຈົ້ານາງທອງດີ, ເຈົ້ານາງຄຳໄສ, ເຈົ້ານາງບຸສະບາ, ເຈົ້ານາງຄຳເກີດ, ເຈົ້ານາງບຸບຜາ; ລູກເຈົ້າອະນຸ 3 ຄົນ ຄື: ເຈົ້ານາງຄຳແພງ, ເຈົ້ານາງຫນູນ, ເຈົ້າຊາຍ ຫນູນແດງ, ແລະ ຫລານສາວເຈົ້າອະນຸ ອີກ 1 ຄົນ ຊື່ຄຳຜາ, ລວມ 11 ຄົນ ແລະ ບ່າວໄພ່ຊາຍຍິງອີກ 40 ປາຍຄົນ, ມາຮອດວຽງຈັນ ເມື່ອເດືອນອ້າຍຂຶ້ນ 15 ຄ່ຳ.

ພະຍາຣາຊະສຸພາວະດີ ໄດ້ສອບຖາມຫາເຈົ້າຣາຊະວົງ ຈາກເຈົ້າອະນຸ ເຈົ້ານາງ ຄຳແພງ... ເມື່ອຮູ້ວ່າເຈົ້າຣາຊະວົງລົງເຮືອຢູ່ທ່າຊ້າງຂ້າມໄປເມືອງມະຫາໄຊຈຶ່ງໄດ້ຈັດ ກອງທັບອອກຫລາຍທາງ ເພື່ອຕາມຈັບເຈົ້າຣາຊະວົງ ຄື: ໃຫ້ພະຍານະຣົງສົງຄາມ, ພະຍາພິໄຊລະນະລິດ ຄຸມພົນໄປທາງບົກ, ໃຫ້ພະຍາວິຊິດນະລົງຄຸມພົນໄປທາງເຮືອ, ໃຫ້ພະຍາສົງຄາມ, ພະຍາອິນທະລະຣາດ ຍົກພົນໄປລັດທາງເມືອງຂະເຫມນ, ໃຫ້ພະທະ ລືໄທ ຄຸມກອງທັບເຮືອແຍກໄປທາງເມືອງພົງ, ເພື່ອຕາມຈັບເຈົ້າຣາຊະວົງໃຫ້ໄດ້.

ເມື່ອເດືອນອ້າຍແຮມ 13 ຄ່ຳ, ພະຍາລາຊະສຸພາວະດີ ສັ່ງໃຫ້ພະຍາອະນຸລັກ ໂຍທາ, ພະໂຍທາສົງຄາມ, ຫລວງເທເພນ, ຫລວງພິໄຊເສນາ, ພະນະຄອນເຈົ້າເມືອງ ຂອນແກ່ນ, ລາຊະວົງເມືອງຊົນນະບົດພະມະຫາດໄທ ເມືອງນະຄອນລາຊະສີມາ ລວມເປັນ ນາຍທັບ 8 ຄົນ ຄຸມພົນກອງລະ 100 ຄົນ ລວມເປັນ 800 ຄົນ ໃຫ້ຄຸມ ເຈົ້າອະນຸ ແລະ ຄອບຄົວ ລົງໄປສົ່ງເຖິງເມືອງສະລະບຸລີ, ຝ່າຍພະຍາພິໄຊວາລີ ຂຶ້ນມາຕັ້ງຮັບ ຢູ່ສະລະບຸລີ ເຮັດກົງຂັງແລ້ວໃສ່ ເຈົ້າອະນຸໄວ້ໃນເຮືອ ແລ້ວໃຫ້ພະອະນຸລັກໂຍທາ ກັບ ພະໂຍທາສົງຄາມ ລ່ອງລົງໄປເຖິງບາງກອກ ໃນເດືອນ ຍີ່ຂຶ້ນ 11 ຄ່ຳ (1829).

ເຈົ້າຊີວິດສະຫຍາມໄດ້ສັ່ງໃຫ້ນຳເຈົ້າອະນຸ ແລະ ບຸດຫລານ ທີ່ຖືກຈັບລົງໄປ ທັງຫມົດ ມາລວມ ເຂົ້າກັນຢູ່ທີ່ທີມແປດຕຳຫລວດ ແລ້ວຄັດເລືອກເອົາລູກຫລ່ານ ແລະ ຊາຍາຈຳ ນວນຫນຶ່ງ ໄປເປັນພວກຫຍິບແສ່ວ, ເຫລືອນັ້ນ ສັ່ງໃຫ້ເຮັດເຄື່ອງປະຈານ ຢູ່ຕໍ່ຫນ້າທີ່ສຸດ ໄທສະວະລິຍາປາສາດ, ພວກເຂົາເຮັດກົງເຫລັກໃຫຍ່ໃສ່ເຈົ້າອະນຸ, ມີກົງເຫລັກນ້ອຍສຳລັບ ໃສ່ລູກຫລານຍາດວົງເຈົ້າອະນຸອີກ 13 ກົງ ຕັ້ງຮຽງຕໍ່ໆກັນເປັນແຖວ, ມີເຄື່ອງມືທໍລະມານ ຕ່າງໆ ຄື: ຄົກສາກສຳລັບຕຳ, ເບັດສຳລັບເກາະແຂວນ, ຫມໍ້ຂາງສຳລັບຕົ້ມ, ຂວານສຳລັບຜາເອິກ, ເລື່ອຍສຳລັບເລື່ອຍແຂນຂາ, ມີຂາຢັ່ງສຳລັບສຽບທັງເປັນ, ມີເຊື້ອນ້ຳ ມັນໃຊ້ກອຍນ້ຳມັນຍາງ ສຳລັບກອກໃສ່ແລ້ວເອົາໄຟເຜົາ... ມີເຄື່ອງໃສ່ໂທດໄວ້ຄົບທຸກຢ່າງ ຕັ້ງຮຽງເປັນແຖວຢູ່ກາງສະຫນາມໄຊ. ໃນທຸກມື້ຕອນເຊົ້າໆ ພວກສະຫຍາມໄຂເອົາພວກ ເພິ່ນອອກປະຈານ ຕໍ່ຫນ້າທີ່ສຸດໄທສະວະລີຍະປາສາດ ຄື: ເຈົ້າອະນຸ ແລະ ລູກ 7 ຄົນ ຄື

ເຈົ້າສຸດທິສານ, ເຈົ້າຣາຊະບຸດ, ເຈົ້າເຕ, ເຈົ້າປານ, ເຈົ້າປັນ, ເຈົ້າດວງຈັນ, ເຈົ້າສຸວັນນະຈັກ, ຫລານ 5 ຄົນ ຄື ເຈົ້າສຸລິຍະ, ເຈົ້າໂງ່ນຄໍາໃຫຍ່, ເຈົ້າປ່ານ, ເຈົ້າຄໍາບຸ, ເຈົ້າທອງດີ, ເມຍເຈົ້າອະນຸ ຄື : ເຈົ້ານາງຄໍາປ້ອງ ລວມ 15 ຄົນ ເອົາອອກມາຂັງໄວ້ໃນກົງເຫລັກ ພ້ອມທັງໃສ່ເຄື່ອງຈອງຈໍາຄົບທຸກຄົນ, ໃຫ້ເຈົ້ານາງຄໍາປ້ອງກືວິກາບຫມາກເຂົ້າໄປນັ່ງ ວີຢູ່ໃນກົງ, ໃຫ້ພວກຊາຍານ້ອຍທີ່ຍັງສາວແຕ່ງຕົວນຸ່ງສິ້ນຫົ່ມເສື້ອແດງ ກືກະເບື້ອງໃສ່ເຂົ້າປາອາຫານໄປລ້ຽງກັນຢູ່ໃນທີ່ປະຈານ ພວກລາດສະດອນຍິງຊາຍໃນເມືອງນອກເມືອງພາກັນມາເບິ່ງຈົນແຫນ້ນທຸກເວລາບໍ່ໄດ້ຂາດລາງພວກກໍມານັ່ງປ້ອຍດ່າສາບແຊ່ງ, ເຖິງຍາມແລງກໍເອົາພວກເພິ່ນມາຂັບຂາ ຢັ່ງເປັນແຖວກັນໄປໃຫ້ຮ້ອງປະຈານໂທດຂອງຕົນຕ່າງໆ ເຖິງຄ່ໍາຈຶ່ງໄປຂັງໄວ້ໃນທິມແປດຕໍາຫລວດຄືເກົ່າ. ເຮັດຢູ່ແນວນີ້ໄດ້ 7-8 ມື້ ເຈົ້າອະນຸ ທົນຕໍ່ການທໍລະມານອັນ ປ່າເຖື່ອນນີ້ບໍ່ໄດ້, ເພິ່ນຈຶ່ງໄດ້ເປັນໄຂ້ລົ້ມເຈັບລົງ ແລະ ເລືອດໄຫລຕະຫລອດ ໄດ້ 3 ວັນ ກໍຮາກເລືອດຕາຍ.

## IV. <u>ເອກະສານຫລັກຖານ</u>

ເອກະສານ ຫລັກຖານ ເຊິ່ງເປັນບ່ອນອີງໃຫ້ແກ່ການຄົ້ນຄວ້າທີ່ຄວນໃຊ້ ເພື່ອໃຫ້ເຂົ້າໃຈບັນຫາເຈົ້າອະນຸນັ້ນ ເຫັນວ່າມີຄວາມສັບສົນຫລາຍ ຈຶ່ງຈໍາເປັນທີ່ຜູ້ອ່ານຄວນຮູ້ວິທີເບິ່ງເອກະສານ ວ່າເອກະສານຊັ້ນໃດ ຄວນເຊື່ອໄດ້ຊ່ໍາໃດ ຫລ້າຫລັງຫລືກ້າວຫນ້າ ອັນນີ້ແມ່ນສິ່ງສໍາຄັນທີ່ຕ້ອງຄໍານຶງເປັນພິເສດ ເພາະມີເອກະສານທີ່ເວົ້າເຖິງບັນຫາສົງຄາມສະໄຫມ ເຈົ້າອະນຸວົງຢູ່ຫລາຍ. ໃນບ່ອນນີ້ຢາກແນະນໍາບາງເອກະສານທີ່ຄວນອ່ານດັ່ງນີ້.

<u>ຈົດຫມາຍເຫດເລື່ອງປາບຂະບົດວຽງຈັນ,</u> ບາງກອກ: ໂຮງພິມໂສພົນພິພັດທະນາກອນ, 2469, 84 ຫນ້າ ແລະ <u>ປະຊຸມຈົດຫມາຍເຫດເລື່ອງປາບກະບົດວຽງຈັນ,</u> ບາງກອກ: ໂຮງພິມໂສພົນພິພັດທະນາກອນ, 2473, 151 ຫນ້າ. ເອກະສານທັງສອງນີ້ກືວ່າຂຽນຂຶ້ນໂດຍຜູ້ມີສ່ວນກ່ຽວຂ້ອງໃນສົງຄາມ ໄດ້ດັດແກ້ພິມຕາມຫລັງ ແຕ່ຫນ້າເຊື່ອກືໄດ້.

ເອກະສານທີ່ກືວ່າເປັນບ່ອນອີງທີ່ຫນ້າສົນໃຈອີກແມ່ນ ອານາມສະຫຍາມຍຸດຂອງ ກສຣ. ກຸຫລາບ, ບາງກອກ, ແພ່ພິທະຍາ, 1971, ມີ 2 ເຫລັ້ມ, 470 ຫນ້າ. ກໍເປັນອີກເອກະສານຫນຶ່ງທີ່ມີລາຍລະອຽດຫລາຍແລະກົງໄປກົງມາ ເຊິ່ງເປັນງານຂຽນທີ່ສ່ວນກາງໄທຄຽດຊັງ ໂດຍ ຣ. 4 ຕັ້ງຄະນະຂຶ້ນກວດສອບ ກສຣ. ກຸຫລາບ ໃນວັນທີ 28 ກຸມພາ 1900, ເຊື່ອວ່າ ກສຣ. ກຸຫລາບ ໄດ້ຕົ້ນສະບັບມາຈາກ ຣາດດູວິນ ເພາະເອກະສານນີ້ໄດ້ຍົກພະນະຣົງສົງຄາມວ່າມີບົດບາດໃນການຕໍ່ສູ້ກັບທະຫານຄຸມຄົວ (ເອກະສານນີ້ບໍ່ເວົ້າເຖິງບົກບາດນາງໂມ ແລະ ນາງ ທອງເຫລືອ ຫລື ບຸນເຫລືອເລີຍ).

ພະຣາຊະພົງສາວະດານ ຣ. 3 ຂອງເຈົ້າພະຍາທິພະກອນວົງ ທີ່ຂຽນຂຶ້ນໃນສະໄຫມ ຣ. 4 ປີ 1869, ພົງສາວະດານສະບັບນີ້ເປັນຕົ້ນຕໍທີ່ເວົ້າເຖິງວິຣະກໍານາງໂມ ພຽງປະໂຫຍກດຽວວ່າ "ທ່ານຜູ້ຍິງໂມພັນຍາພະຍາປລັດຄຸມຜູ້ຍິງເປັນທັບຫນຸນ" ແຕ່ຫລັກຖານທີ່ໃຊ້ອ້າງໃນການຂຽນຄັ້ງນີ້ແມ່ນອີງໃສ່ 7 ເອກະສານ ຄື: 1, ຈົດຫມາຍເຫດ 2. ຕໍາຣາເກົ່າໆ 3. ເອກະສານປູມໂຫນ 4. ເອກະສານກົມມະຫາດໄທ, 5. ເອກະສານກົມກະລາໂຫມ, 6. ເອກະສານກົມພະອາລັກ 7. ເອກະສານກົມທ່າ, ຫນ້າສັງໄສທີ່ເປັນການອ້າງແບບລວມບໍ່ລະບຸເອກະສານຕົວຈິງ ຈຶ່ງອາດກີໄດ້ວ່າຈຸດນີ້ເປັນຈຸດເລີ່ມປັ້ນເລື່ອງນາງໂມຂຶ້ນໃຫ້ເຫັນພາບເລືອນໆລາງໆວ່າເປັນ ຜູ້ຄຸມຜູ້ຍິງເປັນທັບຫນູນ ແຕ່ເອກະສານນີ້ກໍບໍ່ໄດ້ສະແດງໃຫ້ເຫັນບົດບາດນາງໂມໃນ ການຕໍ່ສູ້ຫຍັງເລີຍ ແມ່ນຢູ່ໃນຜູ້ນໍາຍິງຫນູນທັບເທົ່ານັ້ນ ແຕ່ບໍ່ມີກ່າວລະອຽດວ່າ ແລະກໍບໍ່ໄດ້ເວົ້າເຖິງວ່າມີຄວາມດີຄວາມຊອບ ຫລື ວ່າໄດ້ຮັບນາມມະຍົດເປັນທ້າວສຸຣະນາຣີ ແລະກໍບໍ່ໄດ້ເນັ້ນເລີຍວ່າທັບ ໂຄຣາດມີບົດບາດສໍາຄັນໃນສົງຄາມນີ້ ແຕ່ກໍເນັ້ນບົດບາດຂອງພະຍາປະລັດ ພະຍາພົມຍົກກະບັດ.

ອີກເອກະສານຫນຶ່ງແມ່ນ ລາຍພະຫັດຂອງກົມພະຍານະຣິດສະຣານຸວັດຕິວົງ ຂຽນເຖິງພະຍາດໍາລົງຣາຊານຸພາບ ລົງວັນທີ່ 1/1/1934 ເມື່ອຊົງຊາບວ່າກົມສິລະປະກອນຈະສ້າງອະນຸສາວະຣີໃນປີ 1934 ວ່າ "ເລື່ອງທ່ານຜູ້ຍິງໂມນີ້ກໍດູປະຫລາດ ດູໃນພົງສາວະດານ ຣ. 3 ຊື່ງກວາຍມາ ບໍ່ເຫັນວ່າແຜງອິດທິລິດຫຍັງ ເປັນແຕ່ວາຄຸມພວກຜູ້ຍິງເປັນກອງຫລັງເທົ່ານັ້ນ ເປັນຫຍັງຈຶ່ງ ຍົກຍ້ອງກັນຫນັກຫນາກໍບໍ່ຮູ້" ຂໍ້ຄວາມນີ້ສະແດງວ່ານາງໂມບໍ່ບົດບາດອັນໃດທີ່ຄວນຍົກຍ້ອງເລີຍ. ສ່ວນເພັ້ຍຣາມພິໄຊ ກໍເປັນຊື່ສົມມຸດຂຶ້ນວ່າເປັນນາຍທະຫານລາວ ທີ່ຖືກເບື່ອເມົາດ້ວຍສຸຣາ-ນາລີ ເພາະບໍ່ມີໃນຕໍາແຫນ່ງທໍານຽບລາວ ເພາະລາວມັກກ່າວຊື່ຕໍາແຫນ່ງໃຫຍ່ໆ ເຈົ້າຕິດສະ ເຈົ້າສຸດທິສານ ແລະທ້າວເພັ້ຍ ຫມາຍເຖິງຂຸນນາງອື່ນໆ ບໍ່ເຫັນມີເພັ້ຍຣາມພິໄຊ (ເບິ່ງບົດນິພົນປະລິນຍາເອກ ຂອງສຸເນດໂພທິສານທີ່ລົງທໍານຽບນາມຕໍາແຫນ່ງຫນ້າ 490-505).

ນິຣາດຫນອງຄາຍ ຂອງນາຍທັບທິມສຸຂະຍາງ ແຕ່ງໃນສະໄຫມ ຣ. 5 ກໍບໍ່ມີວິຣະກໍາຂອງນາງໂມເລີຍ ທັງໆທີ່ນາຍທັບທິມເປັນຄົນຮູ້ຫນັງສື ຮູ້ວັນນະຄະດີ ຮູ້ພົງສາວະດານ ແລະຮູ້ການເມືອງ ການທະຫານໃນຣາຊະສໍານັກສະຫຍາມຍາມນັ້ນດີ, ນິຣາດຫນອງຄາຍນີ້ເປັນວັນນະຄະດີທີ່ຖືກສັ່ງເຜົາ ຂອງສິດທິສີສະຫຍາມ ເປັນວັນນະກໍາໄປປາບຫໍ້ ເມື່ອມາຮອດໂຄຣາດ ນາຍທັບທິມເວົ້າເລື່ອງໂຄຣາດຍືດຍາວ ແຕ່ບໍ່ມີເລື່ອງນາງໂມເລີຍ ເຊັ່ນ ກໍາແພງໂຄຣາດ ເມືອງໂຄຣາດ ປະຕູເມືອງ ສານຫລັກເມືອງ ທົ່ງສໍາຣິດແຕ່ບໍ່ມີວິຣະກໍານາງໂມເລີຍ. ຖ້າທຽບໃສ່ນິຣາສກຸຣາງ ຂອງນາຍມີ ໃນ ຣ. 3 ເມື່ອໄປ

ເກົ່າກຣາງກໍເວົ້າເຖິງ ວີຣະກຳທ້າວເທບສຕຣີ ທ້າວສີສຸນທອນໂລດ ຈຶ່ງເຊື່ອໄດ້ວ່າມີວີຣະກຳນັ້ນຈິງ, ແຕ່ນາຍທັບ ທີມບໍ່ເວົ້າເຖິງຍ້ອນບໍ່ມີວີຣະກຳນີ້.

ທະວັດ ປຸນໂນທົກ, ລາຍງານການວິໄຈພື້ນວຽງ: ການສຶກສາປະຫວັດສາດແລະວັນນະກຳອີສານ, ບາງກອກ: 2523 (1980), 147 ໜ້າ. ແລະ ທະວັດ ປຸນໂນທົກ, ເອກະສານບັນຍາຍເລື່ອງ "ພື້ນວຽງ", ສະມາຄົມປະຫວັດສາດ ໃນພະລາຊະອຸປະຖຳສົມເດັດພະເທບລັດຕະນະລາຊະສຸດາ, 74 ໜ້າ. ກໍເຫັນວ່າເປັນເອກະສານວິໄຈແລ້ວນ່າເຊື່ອຖືໃນຜູ້ວິໄຈ ຈຶ່ງຄວນອ່ານ.

ເອກະສານພື້ນວຽງນີ້ ມີຜົນໃຫ້ເລື່ອງບາງໂມສະດຸດຕົວລົງ ເພາະເປັນເອກະສານລາວທີ່ຖືກເຜີຍອອກ ເຮັດໃຫ້ຄຸນຍິງໂມເລີ່ມຖືກທ້າທາຍ ຫລືຖືກຕັ້ງຄຳຖາມຫລາຍຂຶ້ນ, ເພາະຜູ້ແຕ່ງເຫັນເຫດການ ຫລືຢູ່ໃນເຫດການ, ມີຜູ້ວິໄຈຫລາຍທ່ານ ນອກຈາກທະວັດປຸນໂນທົກ ເຊັ່ນ ທອງພູນ ສີຈັກ, ປະທີບ ຊຸມພົນ, ຈາຣຸບຸດ ເຮືອງສຸວັນ; ເອກະສານພື້ນວຽງກ່າວວ່າ ເມື່ອເຈົ້າອະນຸຍົກທັບມາຮອດຣາຊະສີມາ ແລ້ວກົມການເມືອງພາກັນອອນນ້ອມຕໍ່ເຈົ້າອະນຸ ແລ້ວເຈົ້າອະນຸໃຫ້ກວາດຄົວໄປວຽງຈັນ. ເມື່ອເຈົ້າເມືອງນະຄອນຣາຊະສີມາຊາບເຫດການຈຶ່ງປອມຕົວເປັນໄພ່ປະປົນໄປນຳພວກຄົວຕອນຮອດຄ່າຍມູນເຄັງ (ທົ່ງສຳລິດ) ແລ້ວອອກອຸບາຍໃຫ້ຄົນໄປທູນເຈົ້າອະນຸ ຂໍພັກຄົວ ສ້ອມແປງກວຽນ ພ້ອມດຽວກັນກໍລັກອ້າທະຫານລາວ ຈຶ່ງສູ້ກັນ ແຕ່ບໍ່ມີວີຣະກຳນາງໂມເລີຍ ຈຶ່ງເຊື່ອວ່າເຈົ້າເມືອງຣາຊະສີມາເປັນຜູ້ວາງແຜນເອງຕາມພື້ນວຽງກ່າວ ສາດສາດຈານ ທະວັດ ປຸນໂນທົກ ຜູ້ວິໄຈກໍເວົ້າແຈ້ງວ່າບໍ່ພົບຊື່ນາງໂມເລີຍ.

ການເຜີຍແຜ່ ພື້ນວຽງກໍເກີດຂຶ້ນໃນປີ 1935 ພາຍຫລັງກໍ່ສ້າງອະນຸສາວລີ 1 ປີ ຜູ້ຂຽນບອກວ່າຂຽນເພື່ອລະລຶກເຖິງທ້າວເພັດຊະຣາດຜູ້ເປັນບິດາ ຜູ້ຂຽນຍັງກ່າວວ່າ "ຂໍຝາກແກ່ເທີທ່ານທ້າວປັນຍາກວ້າງໃຫ້ຮື່ນຕອງ ຮຽມນີ້ເປັນແຕ່ຈຸດທຽນໃຕ້ນຳທາງໃຫ້ໃສສ່ອງ ... ກັບທັງເຕືອນຝູງເພື່ອນລາວໃຫ້ລຸກຕື່ນ ຄືນແລະມື້ກະຕື້ລ້ຳຮ່ຳຮຽນເອົາທ້ອນ" ອັນນີ້ແມ່ນຜູ້ຂຽນກ່າວເນັ້ນຍ້ອນຮູ້ເຫັນເຫດການອະນຸສາວະຣີສຸຣະນາຣີທີ່ສ້າງໃນປີ 1934.

ຕໍ່ມາຝ່າຍລາວກໍມີຂະບວນການຕ້ານຄືນ ຈຶ່ງປາກົດມີ ນສພ ລາວໃຫຍ່, ນສພ ຊາວຂອງ, ນສພ ລາວຈະເລີນ ຂຽນຂຶ້ນປຸກລະດົມຈິດໃຈຊາດ.

ນັກປະຫວັດສາດລາວທີ່ເປັນຄົນອີສານໄດ້ຂຽນເລື່ອງ ຄວາມເປັນມາໄທ-ລາວ ຂອງອຸໄທເທພສິດທາ, ອູຄຳພົມມະວົງສາ ແລະງານຂຽນອື່ນໆ ກໍຈະບໍ່ເຫັນພາບນາງໂມເລີຍ.

ພົງສາວະດານເມືອງລ້ານຊ້າງວຽງຈັນ ຂອງພະຍາປະມວນວິຊາພູນຂຽນປີ 2482 ກໍເນັ້ນວ່າວຽງຈັນເປັນເອກະຣາດມາກ່ອນ ເມື່ອຕົກເປັນປະເທດສະຣາດ ຈຶ່ງກູ້ຊາດຄືນ

ເພື່ອເອົາພະແກ້ວກັບຄືນມາວຽງຈັນ (ພະຍາປະມວນນີ້ ສືບເຊື້ອສາຍມາຈາກເຈົ້າສຸດທິສານ) ກໍຄິດວ່າພະຍາປະມວນຕ້ອງການຕອບໂຕ້ອະນຸສາວະຣີອີ້ຕົວະນີ້ຄືກັນ ເພາະພິມຫລັງຕັ້ງອະນຸສາວະຣີພຽງ 5 ປີ.

<u>ສາຍພິນ ແກ້ວງາມປະເສີດ</u> ໄດ້ເຮັດວິທະຍານິພົນ ເລື່ອງ ການເມືອງໃນອະນຸສາວະຣີທ້າວສຸຣະນາຣີ ເຊິ່ງບົດນິພົນນີ້ໄດ້ ກາຍເປັນວິທະຍານິພົນດີເດັ່ນສາຂາປະຫວັດສາດ ປະຈຳປີການສຶກສາ 2536 ແມ່ນມີຄວາມຊັດເຈນວ່າ ທ້າວສຸຣະນາຣີບໍ່ມີບົດບາດຕົວຈິງໃນເຫດການ ແລະຜູ້ກຽວໄດ້ກວດພົບວ່າ "ວີຣະກຳຂອງຄຸນຫຍິງໂມ ບໍ່ປຣາກົດມີໃນເອກະສານສະໄຫມຣ. 3 ແຕ່ເພິ່ງມີສະໄຫມຕົ້ນ ຣ. 5 ເມື່ອພະຍາທິພາກອນວົງ (ຂຳບຸນນາກ) ແຕ່ງພົງສາວະດານກຸງຣັດຕະນະໂກສິນ ເມື່ອປີ 1869 ແລ້ວໃສ່ເລື່ອງນີ້ເຂົ້າໄປດ້ວຍຂໍ້ຄວາມສັ້ນໆ, ເປັນເຫດໃຫ້ສົມເດັດເຈົ້າຟ້າກົມພະຍານະຣິດສະຣານຸວັດຕິວົງ ຊົງມີລາຍພະຫັດລົງວັນທີ 1 ມັງກອນ 1934 ຂາບທູນສົມເດັດ ກົມພະຍາດຳຣົງຣາຊານຸພາບວ່າ "ເລື່ອງທ່ານຜູ້ຍິງໂມນີ້ດູກໍປະຫລາດ ດູໃນພົງສາວະດານ ຣ. 3 ຊື່ງກວາຍມາ ບໍ່ເຫັນສະແດງວ່າແຜງອິດທິຣິດຫຍັງ ເປັນແຕ່ວ່າ ຄຸມພວກຜູ້ຫຍິງເປັນ ກອງຫລັງເທົ່ານັ້ນ ເປັນຫຍັງຈຶ່ງຍົກຍ່ອງກັນຫນັກຫນາກໍບໍ່ຊາບ" ລາຍລະອຽດຂອງເອກະສານແມ່ນຫນ້າອ່ານ.

Kith and Kin politics: The relationship between Laos and Thialand by Mayoury and Pheuiphanh Ngaosyvathn, Manila, Philippines, 1994, 137 pages. ເປັນຜົນງານອັນລ້ຳເລີດທີ່ສຸດ ຂອງນັກວິຊາການລາວທີ່ທຸ້ມເທເຮື່ອແຮງກາຍໃຈຊັບສິນ ລົງມືຄົ້ນຄວ້າຢ່າງຕັ້ງຫນ້າ ເຊິ່ງຜູ້ກຽວຈະສະເຫນີທ່ານເອງ.

ທັງຫມົດນີ້ຄືເອກະສານທີ່ທ່ານຄວນສົນໃຈ ທີ່ຂ້າພະເຈົ້າຄິດວ່ານ່າເຊື່ອຖືໄດ້,

<u>ການບິດເບືອນຕໍ່ເຕີມ,</u>

ນອກຈາກເອກະສານທີ່ເປັນຫລັກຖານພໍເຊື່ອຖືໄດ້ນັ້ນແລ້ວ, ຍັງມີເອກະສານຈຳນວນຫລາຍທີ່ພະຍາຍາມບິດເບືອນ ຕໍ່ເຕີມເສີມແຕ່ງ ເພີ້ມສີສັນ ເພື່ອຫວັງຜົນດ້ານການເມືອງໂດຍກຸ່ມນິຍົມລັດທິໄທໃຫຍ່ ເຊັ່ນ ການຫ້າມເປົ່າແຄນ ຫລື ເອີ້ນວ່າຫ້າມຫລິ້ນລາວແຄນ ຫລືຫລິ້ນແອ່ວລາວແຄນ ເມື່ອວັນສຸກ ເດືອນ 12 ແຮມ 14 ຄ່ຳ ປີສະລຸ ສັບຕະສົບ 1227 (1865) ວ່າ "ລາວເປັນຂ້າສະຫຍາມ ສະຫຍາມເປັນຂ້າລາວ, ຈະເອົາຢ່າງລາວມາເປັນພື້ນເມືອງສະຫຍາມບໍ່ສົມຄວນ, ຕັ້ງແຕ່ພາກັນຫລິ້ນລາວແຄນຢ່າງດຽວກໍ່ກວ່າສິບປີມາແງ້ວ ຈົນການຕົກເປັນພື້ນເມືອງ ແລະສັງເກດເຫັນການຫລິ້ນລາວແຄນຊຸກຊຸມບ່ອນໃດ ຝົນກໍ່ຕົກນ້ອຍລ່ວງໂລຍໄປ, ໃນປີນີ້ ເຂົ້ານາລອດຕາຍກໍ່ຍ້ອນນ້ຳປ່າມາຊວຍ, ເມືອງທີ່ລາວຫລິ້ນແຄນຫລາຍ ເມື່ອລະດູຝົນກໍ່ນ້ອຍ ເຮັດນາກໍ່ເສັຍຫາຍບໍ່ງາມ ໃຫ້ງົດການຫລິ້ນລາວແຄນເສັຍ..." ແລະຍັງຈະປັບໄຫມໃສ່ໂທດ ກ້າບໍ່ຟັງອັນນີ້ເປັນຄຳສັ່ງໃນສະໄຫມ ຣ. 5 ທີ່ຈະທັບອີສານເປັນໄທ.

ເພື່ອເອົາພະແກ້ວກັບຄືນມາວຽງຈັນ (ພະຍາປະມວນນີ້ ສືບເຊື້ອສາຍມາຈາກເຈົ້າສຸດທິສານ) ກໍຄິດວ່າພະຍາປະມວນຕ້ອງການຕອບໂຕ້ອະນຸສາວະຣີອີ້ຕົວະນີ້ຄືກັນ ເພາະພິມຫລັງຕັ້ງອະນຸສາວະຣີພຽງ 5 ປີ.

<u>ສາຍພິນ ແກ້ວງາມປະເສີດ</u> ໄດ້ເຮັດວິທະຍານິພົນ ເລື່ອງ ການເມືອງໃນອະນຸສາວະຣີທ້າວສຸຣະນາຣີ ເຊິ່ງບົດນິພົນນີ້ໄດ້ ກາຍເປັນວິທະຍານິພົນດີເດັ່ນສາຂາປະຫວັດສາດ ປະຈຳປີການສຶກສາ 2536 ແມ່ນມີຄວາມຊັດເຈນວ່າ ທ້າວສຸຣະນາຣີບໍ່ມີບົດບາດຕົວຈິງໃນເຫດການ ແລະຜູ້ກຽວໄດ້ກວດພົບວ່າ "ວີຣະກຳຂອງຄຸນຫຍິງໂມ ບໍ່ປຣາກົດມີໃນເອກະສານສະໄຫມຣ. 3 ແຕ່ເພິ່ງມີສະໄຫມຕົ້ນ ຣ. 5 ເມື່ອພະຍາທິພາກອນວົງ (ຂຳ ບຸນນາກ) ແຕ່ງພົງສາວະດານກຸງຣັດຕະນະໂກສິນ ເມື່ອປີ 1869 ແລ້ວໃສ່ເລື່ອງນີ້ເຂົ້າໄປດ້ວຍຂໍ້ຄວາມສັ້ນໆ, ເປັນເຫດໃຫ້ສົມເດັດເຈົ້າຟ້າກົມພະຍານະຣິດສະຣານຸວັດຕິວົງ ຊົງມີລາຍພະຫັດລົງວັນທີ 1 ມັງກອນ 1934 ຂາບທູນສົມເດັດ ກົມພະຍາດຳຣົງຣາຊານຸພາບວ່າ "ເລື່ອງທ່ານຜູ້ຍິງໂມນີ້ດູກໍປະຫລາດ ດູໃນພົງສາວະດານ ຣ. 3 ຊື່ງກູວາຍມາ ບໍ່ເຫັນສະແດງວ່າແຜງອິດທິຣິດຫຍັງ ເປັນແຕ່ວ່າ ຄຸມພວກຜູ້ຫຍິງເປັນ ກອງຫລັງເທົ່ານັ້ນ ເປັນຫຍັງຈຶ່ງຍົກຍ່ອງກັນຫນັກຫນາກໍບໍ່ຊາບ" ລາຍລະອຽດຂອງເອກະສານແມ່ນຫນ້າອ່ານ.

Kith and Kin politics: The relationship between Laos and Thialand by Mayoury and Pheuiphanh Ngaosyvathn, Manila, Philippines, 1994, 137 pages. ເປັນຜົນງານອັນລ້ຳເລີດທີ່ສຸດ ຂອງນັກວິຊາການລາວທີ່ທຸ່ມເທເຫື່ອແຮງກາຍໃຈຊັບສິນ ລົງມືຄົ້ນຄວ້າຢ່າງຕັ້ງຫນ້າ ເຊິ່ງຜູ້ກຽວຈະສະເຫນີທ່ານເອງ.

ທັງຫມົດນີ້ຄືເອກະສານທີ່ທ່ານຄວນສົນໃຈ ທີ່ຂ້າພະເຈົ້າຄິດວ່ານ່າເຊື່ອຖືໄດ້,

<u>ການບິດເບືອນຕໍ່ເຕີມ,</u>

ນອກຈາກເອກະສານທີ່ເປັນຫລັກຖານພໍເຊື່ອຖືໄດ້ນັ້ນແລ້ວ, ຍັງມີເອກະສານຈຳນວນຫລາຍທີ່ພະຍາຍາມບິດເບືອນ ຕໍ່ເຕີມເສີມແຕ່ງ ເພີ້ມສີສັນ ເພື່ອຫວັງຜົນດ້ານການເມືອງໂດຍກຸ່ມນິຍົມລັດທິໄທໃຫຍ່ ເຊັ່ນ ການຫ້າມເປົ່າແຄນ ຫລື ເອີ້ນວ່າຫ້າມຫລິ້ນລາວແຄນ ຫລື ຫລິ້ນແອ່ວລາວແຄນ ເມື່ອວັນສຸກ ເດືອນ 12 ແຮມ 14 ຄ່ຳ ປີສະລຸ ສັບຕະສົບ 1227 (1865) ວ່າ "ລາວເປັນຂ້າສະຫຍາມ ສະຫຍາມເປັນຂ້າລາວ, ຈະເອົາຢ່າງລາວມາເປັນພື້ນເມືອງສະຫຍາມບໍ່ສົມຄວນ, ຕັ້ງແຕ່ພາກັນຫລິ້ນລາວແຄນຢ່າງດຽວກໍ່ກວ່າສິບປີມາແລ້ວ ຈົນການຕົກເປັນພື້ນເມືອງ ແລະສັງເກດເຫັນການຫລິ້ນລາວແຄນຊຸກຊຸມບ່ອນໃດ ຝົນກໍ່ຕົກນ້ອຍລ່ວງໂລຍໄປ, ໃນປີນີ້ ເຂົ້ານາລອດຕາຍກໍ່ຍ້ອນນ້ຳປ່າມາຊວຍ, ເມືອງທີ່ລາວຫລິ້ນແຄນຫລາຍ ເມື່ອລະດູຝົນກໍ່ນ້ອຍ ເຮັດນາກໍ່ເສັຍຫາຍບໍ່ງາມ ໃຫ້ງົດການຫລິ້ນລາວແຄນເສັຍ..." ແລະຍັງຈະປັບໄຫມໃສ່ໂທດ ກ້າບໍ່ຟັງອັນນີ້ເປັນຄຳສັ່ງໃນສະໄຫມ ຣ. 5 ທີ່ຈະຫັນອີສານເປັນໄທ.

ປີ 1892 ສະຍາມໄດ້ພະຍາຍາມສະລາຍຕົວຄວາມເປັນລາວ ໂດຍການປ່ຽນມົນທົນລາວສຽງເປັນມົນທົນພາຍັບ ມົນທົນລາວພວນເປັນມົນທົນອຸດອນ ມົນທົນລາວກາວເປັນມົນທົນອີສານ ແລະເລີ່ມສົ່ງແບບຮຽນໄທໄປໃຫ້ຮຽນໃນປີນີ້ ເພື່ອເຮັດໃຫ້ການສຶກສາເປັນແບບໄທຢ່າງສົມບູນ ແລະໃຫ້ຈົດສຳມະໂນຄົວວ່າ ເປັນໄທ ຜົນຂອງມັນຊາວອີສານພະສົງ ອົງຄະເຈົ້າບໍ່ພໍໃຈຈຶ່ງເກີດຂະບວນຜູ້ມີບຸນພາກອີສານ ຫລືກະບົດອີສານ ໃນຊຸມປີ 1900 ເຊັ່ນ ໃນນະຄອນຣາຊະສີມາ 3 ເທື່ອ, ສີສະເກດ 4 ເທື່ອ ຮ້ອຍເອັດ 3 ເທື່ອ ມະຫາສາຣະຄາມ 3 ເທື່ອ ສຸຣິນ 2 ເທື່ອ ໄຊຍະພູມ ຂອນແກ່ນ ອຸດອນ ໜອງຄາຍ ສະກົນນະຄອນ ກາລະສິນ ຄັ້ງລະ 1 ເທື່ອ ຜູ້ສຳເລັດຣາຊະການມົນທົນອີສານ ກົມຫລວງສັບພະສິດທິປະສົງ ຍົກທັບປາບກໍພ່າຍ ຈຶ່ງຕ້ອງຂໍກຳລັງຫລວງມາຊ່ວຍ ອັນນີ້ແມ່ນການຕໍ່ຕ້ານອຳນາດລັດທີ່ເປັນຮູບປະທຳຂອງຊາວອີສານໃນຍາມນັ້ນ ເຊິ່ງແກ່ຍາວມາຮອດຊຸມປີ 1930.

<u>ການສ້າງອະນຸສາວະຣີນາງໂມ</u> ໃນປີ 1934 ແລະ ຕໍ່ມາໄທກໍປະກາດປ່ຽນສຍາມເປັນໄທໃນປີ 1939 ໂດຍຈອມພົນປໍພິບູສົງຄາມ ທີ່ແນໃສ່ເພື່ອສ້າງ "ມະຫາອານາຈັກໄທ" ຕາມຄວາມ ຝັນຂອງພວກເຂົາ, ນອກນັ້ນ ກໍຂຽນປື້ມນາງບຸນເຫລືອ ໂດຍຫລັກຖານທາງເອກະສານບໍ່ມີ ລ້ວນແຕ່ອ້າງຫລັກຖານທາງມຸກຂະປາກະ ຄືອ້າງວ່າມີການເຫລົ່າຂານກັນມາ ເຊັ່ນ ງານຂຽນຂອງພັນຕີຫລວງສີໂຍທາໃຊ້ຄຳວ່າ.. ຜົມເຊື່ອວ່າມີນາງສາວບຸນເຫລືອຈຸດດົນ ລະເບີດຈິງ ເພາະມີເລື່ອງເລົ່າຂານກັນ ແລະເອົາສອນທະຫານກ່ອນຈາກນັ້ນກໍພິມ ປີ 1934 ເປັນຕຳລາສອນແລ້ວເອົາມາລົງພິມໃນງານເປີດ ອະນຸສາວະຣີທ້າວສຸຣະນາຣີ 16 ມັງກອນ 1934, ແຕ່ນັກປະຫວັດສາດຈຶ່ງບໍ່ຫລັກຖານອື່ນ ກໍເຫັນແຕ່ງານຂຽນຂອງພັນຕີຫລວງສີໂຍທາ ທີ່ສ້າງຕົວລະຄອນນີ້ຂຶ້ນມາ ໃຫ້ເຫັນວ່າເມືອງນີ້ມີຍິງກ້າຍັງມີນາງສາວລຳໄຍອີກຄົນ, ມີການ ໃຊ້ຊື່ວິທະຍາໄລທ້າວສຸຣະນາຣີຂຶ້ນອີກ ເພື່ອໃຫ້ສົມຈິງເຊິ່ງລ້ວນແຕ່ສ້າງຫລັກຖານເທັດ ເພື່ອຕົວຄົນໂຄຣາດກັນເອງ.

ຈາກນັ້ນ, ຈອມພົນປ. ໄດ້ເນັ້ນຊາດນິຍົມ ເພື່ອຮຽກຮ້ອງດິນແດນຄືນຈາກຝຣັ່ງ ໂດຍໃນວັນທີ 11 ກັນຍາ 1940 ໄດ້ຍື່ນຂໍ້ສະເໜີຂໍດິນລາວຈາກຝຣັ່ງ, 8 ຕຸລາ 1940 ນັກສຶກສາຈຸລາ-ທຳມະສາດເດີນຂະບວນຂໍດິນແດນ ໂດຍການໃຊ້ອະນຸສາວະຣີເປັນສື່ ໃນສະໄໝລັດທິເຊື່ອຜູ້ນຳຊາດພົ້ນໄພ, ໃຊ້ທ້າວສຸຣະນາຣີນີ້ ປຸກລະດົມອີສານໃຫ້ຮັກຊາດໄທ ຕ້ອງການໃຫ້ຄົນອີສານ ເປັນອັນດຽວກັບສ່ວນກາງໄທ ເພາະວ່າເຖິງຈະປ່ຽນແປງການປົກຄອງແລ້ວກໍຕາມ ແຕ່ຄົນອີສານກໍຍັງບໍ່ຮູ້ສຶກວ່າຕົນເປັນໄທ ລັດຈຶ່ງຕ້ອງອອກແຮງໃຫ້ເຂົາ ເປັນໄທຫລາຍຂຶ້ນ ຍັງມີເພງ ບົດລະຄອນ ນິຍາຍທີ່ແຕ່ງໂດຍວິຈິດວາທະການ, ທັງຍັງຫ້າມຄຽວໝາກ, ຫ້າມນຸ່ງສິ້ນ ໃຫ້ນຸ່ງໂຈງກະເບນ, ແລະຍັງມີຄຳສັ່ງໃຫ້ເຜົາໃບລານທີ່ເປັນອັກສອນທຳ

ອັກສອນລາວ (ເຊັ່ນຢູ່ວັດສວນດອກ ຊຽງໃຫມ່) ກໍໃນສະໄຫມນີ້, ຄຳສັ່ງຕ່າງໆແມ່ນໃຫ້ປະຕິບັດໃຫ້ສຳເລັດພາຍໃນປີ 1943 (ອອກຄຳສັ່ງ 24 ມັງກອນ 2486) ແຕ່ຄຳສັ່ງເຫລົ່ານີ້ກໍ່ຖືກຍຸບເລີກສະໄຫມນາຍຄວງອະໄພວົງ ລວມທັງຍົກເລີກການບັງຄັບ ໃຫ້ສວມຫມວກເລີກຫ້າມຄ້ຽວຫມາກ ໃຫ້ເສຣີພາບໃນການແຕ່ງກາຍ ຍຸບເລີກປັບປຸງ ອັກສອນໄທ (ຂຽນຕາມສຽງ).

ຈອມພົນປ. ສະໄຫມທີ 2 ກໍມາເນັ້ນອີກໃນບົດເພັງ ຕົ້ນຕະກຸນໄທ, "ແດນອີສານຂອງໄທ ຊາວອີສານເປັນໄທ ໄທຕ້ອງຈຳ" ເພັງແຫລມທອງ, ບົດລະຄອນເຈົ້າຍິງແສນຫວີ ແລະອື່ນໆ, ນະໂຍບາຍສ້າງຊາດຂອງ ປ. ພິບູນສົງຄາມອີກຢ່າງຄື ປ່ຽນສະຍາມມາເປັນໄທ ໃນວັນທີ 24 ມິຖຸນາ 1939 (2482) ທັງກຳນົດໃຫ້ວັນນີ້ເປັນວັນຊາດອີກນຳ. ບົດລະຄອນ ຣາຊະມະນູ ທີ່ວິຈິວາທະການແຕ່ງກໍເນັ້ນວ່າ ອີສານເປັນໄທ ເນັ້ນໄທຈະຈະເລີນດ້ວຍການລວມເຜົ່າໄທເຂົ້າດ້ວຍກັນ ເພື່ອຮຽກຮ້ອງເອົາລາວ ແລະລົງປະຊາມະຕິຮົບກັບຝຣັ່ງ ແລະແຕ່ງເພັງຂ້າມໂຂງ, ແລະຍັງກຳຈັດນັກການເມືອງຄົນອີສານອີກໃນສະໄຫມ ປ. 2 ເຊັ່ນ ນາຍຕຽງ ສິຣິຂັນ (ສສ ສະກົນນະຄອນ) ນາຍຖວິນ ອຸດົນ (ສສ ສາຣະຄາມ) ນາຍຈຳລອງດາວເຮືອງ ແລະນາຍຟອງ ສິດທິທຳທີ່ເປັນເສຣີໄທ ແລະຊ່ວຍລາວອິດສະລະ ກໍ່ກຈັບແລະຂ້າຕາຍຂໍ້ຫາແຍກດິນແດນ.

ສະໄຫມສະຣິດ ທະນະລັດ ກໍນຳໃຊ້ເລື່ອງສຸຣະນາຣີ ປຸກລະດົມຊາດນິຍົມ ໃຫ້ຮູ້ສຶກເປັນ "ໄທ" ແກ່ຄົນອີສານ ເພາະແມ່ນການຕໍ່ສູ້ລະຫວ່າງຄວາມເປັນໄທກັບຄວາມເປັນລາວ ແລະ "ຣັດ" ສະໄຫມສະຣິດ ມຸ່ງສ້າງວິຣະກຳນີ້ ເພື່ອປະໂຫຍດຂອງລັດ ເຊັ່ນສ້າງ ກົມທະຫານຣາບຍິງສີສຸຣິໂຍໄທ ສຸຣະນາຣີ ເທພສະຕຣີ ແລະສີສຸນທອນ ຜລິດເປັນຫນ່ວຍຊ່ວຍຮົບ,

ທັງໄດ້ພະຍາຍາມເຮັດໃຫ້ກໍ່ກຫລັກວິຊາການ ເຊັ່ນໃນປີ 1957 ທາງຈັງຫວັດນະຄອນຣາຊະສີມາ ໄດ້ທຳການສຳຫລວດທົ່ງສຳຣິດ ທີ່ເຊື່ອວ່າເປັນບ່ອນສູ້ຮົບ ແລ້ວຂຽນບົດລາຍງານ ໃນວັນທີ 13 ເມສາ 1957 ວ່າເປັນບ່ອນສູ້ຮົບ ເພາະພົບກະດູກມະນຸດໃນຫນອງນ້ຳທີ່ເອີ້ນວ່າ "ຫນອງຫົວລາວ" ຈຶ່ງເອົາຈາຣຶກໄປໃສ່ວ່າແມ່ນບ່ອນສູ້ຮົບ ໃນປີ 2369 (1827) ເພາະເຈົ້າ ສຸດທິສານນຳທະຫານເດີນເທົ້າ 3200 ຄົນ, ທະຫານມ້າ 4000 ກັບໄປປາບແຕ່ບໍ່ຊະນະໄດ້ ຈາກນີ້ເຈົ້າອະນຸຈຶ່ງຮູ້ວ່າມີກອງທະຫານສະຫຍາມ ດັກສະກັດດ້ານຫລັງເພິ່ນຈຶ່ງກຽມ ຖອຍທັບ.

ສະໄຫມພົນເອກເປມ ຍິ່ງຫນັກຫນ້າທີ່ມັກກ່າວເຖິງນາງໂມຫລືທ້າວສຸຣະນາຣີ ເປັນປະຈຳ ທັງມີງານຂຽນເປັນເອກະສານຂອງນາຍສົມບູນ ໄທວັດຂະຣາມາດ (ຜູ້ວ່າຣາຊະການຈັງຫວັດ) ທີ່ກ່າວລາຍງານຕໍ່ ພົນເອກເປມ ໃນພິທີເປີດງານສະຫລອງໄຊຊະນະຂອງ

ທ້າວສຸຣະນາຣີ 23 ມິນາ 1986 ແລະສ້າງ ອະນຸສອນສະຖານສາວບຸນເຫລືອ ໃນບໍລິເວນ ຣຣ ບຸນເຫລືອວິທະຍານຸສອນ ອ. ຈໍຫໍ ຈ. ນະຄອນຣາຊະສີມາ.

ການສ້າງຮູບເງົາ ເລື່ອງ "ທ້າວສຸຣະນາຣີ" ຂອງນາຍພິສານ ອັກຄະລະເສຣີນີ, ຈຶ່ງເປັນການເດີນຕາມ ແນວຄິດຊາດໃຫຍ່ ທີ່ຜ່ານຂະບວນວິວັດຢ່າງເປັນລະບົບມາ ໂດຍຈະເອົາປະຫວັດສາດທີ່ບໍ່ມີຄວາມເປັນຈິງມາປັ້ນແຕ່ງເປັນການຫລອກລວງຄົນໃຫ້ເຊື່ອ, ທັງເປັນການທຳລາຍສາຍພົວພັນອັນດີຂອງສອງປະເທດລາວ-ໄທ, ແຕະຕ້ອງຈິດໃຈຊົນເຊື້ອຊາດລາວທັງທີ່ຢູ່ໃນ ສປປ ລາວ, ຢູ່ພາກອີສານໄທ ແລະຢູ່ຕ່າງແດນ, ແຕະຕ້ອງຜູ້ມີຈິດໃຈຜູ້ຮັກຫອມສັນຕິພາບໂດຍທົ່ວໄປ. ນັກວິຊາການຂອງໄທຈຳນວນບໍ່ໜ້ອຍກໍບໍ່ເຫັນດີນຳການປັ້ນແຕ່ງເລື່ອງນີ້ ການນຳປະຫວັດສາດມາຮັບໃຊ້ ການເມືອງ ແບບງົມງວາຍໃນຍຸກໂລກາພິວັດຈຶ່ງເປັນເລື່ອງນ່າລະອາຍທີ່ສຸດ.

## V. ສະຫລຸບ

ໃນພາກສະລຸບນີ້ ຂ້າພະເຈົ້າຢາກຍໍ້າຄືນວ່າ ການຄົ້ນຄວ້າປະຫວັດສາດແມ່ນວຽກໜຶ່ງທີ່ມີຄວາມສຳຄັນຂອງທຸກໆຊາດ ເຊິ່ງຊາດລາວເຮົາກໍມີການຄົ້ນຄວ້າປະຫວັດສາດໃນສະໄໝລ້ານຊ້າງ ໃນຮູບແບບພົງສາວະດານ ຈາກນັ້ນການຄົ້ນຄວ້າກໍໄດ້ຂະຫຍາຍຕົວມາເປັນລຳດັບ ໂດຍສະເພາະພາຍຫລັງປົດປ່ອຍແລ້ວ ພັກ-ລັດໄດ້ເອົາໃຈໃສ່ຊີ້ນຳວຽກນີ້ໂດຍກົງເຊິ່ງເບື້ອງຕົ້ນຜູ້ຊີ້ນຳວຽກນີ້ແມ່ນທ່ານພູມີວົງວິຈິດ, ຕໍ່ມາແມ່ນທ່ານສີຊະນະ ສີສານ, ແລະປະຈຸບັນແມ່ນທ່ານ ໂອສະກັນ ທຳມະເທວາ, ປະຈຸບັນໄດ້ເຮັດສຳເລັດປຶ້ມປະຫວັດສາດລາວເຫລັ້ມໃຫຍ່ ແຕ່ຄຸນນະພາບແມ່ນຍັງຈະຄ່ອຍໆປັບປຸງ ດຽວນີ້ກໍກຳລັງປັບປຸງດ້ານການສະກົດຕົວອັກສອນ ເອົາຮູບພາບ ແຜນວາດ ແຜນທີ່ເຂົ້າຕື່ມເຊິ່ງວຽກນີ້ແມ່ນກະຊວງກະຊວງກະແຫລງຂ່າວ ເປັນຜູ້ອຳນວຍຄວາມສະດວກໃຫ້.

ການຄົ້ນຄວ້າປະຫວັດສາດລາວນັ້ນ ແມ່ນພວກເຮົານຳໃຊ້ຫລັກການ ຫລືຫລັກຖານ 4 ປະເພດຄື ພົງສາວະດານ ບູຮານຄະດີ ພົງສາວະດານຂອງເພື່ອນບ້ານ ແລະບົດບັນທຶກຂອງຕາເວັນຕົກ, ໂດຍຈະປະສານສົມທົບ 4 ຫລັກການເຂົ້າກັນເພື່ອຊອກຫາຂໍ້ເທັດຈິງ, ຈາກນັ້ນກໍສາມາດຊອກເຫັນວ່າມັນມີຫລາຍທັດສະນະປະຫວັດສາດທີ່ຄວນທຳຄວາມເຂົ້າໃຈ ແລະກໍແນໃສ່ນຳໃຊ້ປະຫວັດສາດນີ້ ເພື່ອສຶກສາອົບຮົມຄົນໃຫ້ເກີດຄວາມຮັກຊາດ ຮັກວັດທະນະທຳເພື່ອເບິ່ງໄປຂ້າງໜ້າຢ່າງໝັ້ນໃຈພາຍໃຕ້ການນຳພາຂອງ ພປປລ ອັນແມ່ນກອງລະວັງໜ້າ ຜູ້ປຣີຊາສາມາດ ທີ່ຈະນຳພາຊາດລາວກ້າວໄປຢ່າງມີໄຊ.

ພວກເຮົາກໍຕ້ອງໄດ້ຮັບຮູ້ວ່າ ບັນຫາປະຫວັດສາດແມ່ນບັນຫາລະອຽດອ່ອນ ທີ່ຕ້ອງໃຊ້ເວລາຄົ້ນຄິດ ເພາະວ່າມັນມີຫລາຍບັນຫາທີ່ພວກເຮົາເຂົ້າໃຈຜິດ ທັງນີ້ກໍຍ້ອນວ່າການຄົ້ນຄວ້າບໍ່ເຖິງກອງ ການບໍ່ນຳໃຊ້ຫລັກການແລະວິທີການປະຫວັດສາດຍັງບໍ່ທີ່ຖືກຕ້ອງ ແລະກໍຍ້ອນການໃຊ້ຂໍ້ມູນຂອງເພື່ອນບ້ານທີ່ບິດເບືອນ ແລະເຊື່ອຂໍ້ມູນໂດຍປາສະຈາກການພິນິດພິເຄາະ ກ້າເຮົາຫາກຕັ້ງບັນຫາໂດຍນຳຫລັກການມາຈັບ ມາເຍືອງເບິ່ງ ຈຶ່ງຈະຮູ້ວ່າຂໍ້ມູນທີ່ເຮົາເຂົ້າໃຈນັ້ນແມ່ນຖືກບິດເບືອນບໍ່ຫນ້ອຍ. ພວກເຮົາຈຶ່ງຈຳເປັນທີ່ຈະຕ້ອງຄົ້ນຄວ້າແບບເປັນເຈົ້າຕົນເອງ ອາໄສເອກະສານປະກົມພູມຂອງລາວເອງເປັນພື້ນຖານແລ້ວຄວາມຈິງກໍຈະເປັນຄວາມຈິງ.

ບັນຫາປະຫວັດສາດສະໄຫມອະນຸວົງກໍເຊັ່ນດຽວກັນ ເຮົາຈະເຫັນວ່າ ການຄົ້ນຄວ້າຜ່ານມາ ຂາດການເນັ້ນຫນັກເອກະສານລາວ ເຊັ່ນ ພື້ນວຽງ ແລະເຮົາຊ້ຳພັດເຫັນແຕ່ເອກະສານທີ່ຝ່າຍໄທແຕ່ງເຕີມເສີມຕໍ່ ເມື່ອນຳມາໃຊ້ຈຶ່ງເກີດຄວາມເຂົ້າໃຈໄປຕາມນັ້ນ ທັງທີ່ບໍ່ມີຄວາມເປັນຈິງ, ເຮັດໃຫ້ເຂົ້າໃຈຜິດຕໍ່ບັນຫາເຈົ້າອະນຸວົງ ເຂົ້າໃຈວ່າວີຣະກຳນາງໂມມີຈິງ ເຂົ້າໃຈວ່າເຈົ້າມັນທາຕຸຣາດ ເຈົ້າຕິດສະ ເຈົ້ານ້ອຍເປັນກະບົດຕໍ່ເຈົ້າອະນຸວົງຈິງ ເຊິ່ງຄວາມຈິງບໍ່ເປັນແນວນັ້ນ ຈຶ່ງສົມຄວນທີ່ພວກເຮົາຕ້ອງມາເພິ່ງຕົນເອງ ເພິ່ງເອກະສານຂອງລາວເອງໃຫ້ຫລາຍຂຶ້ນ. ຕ້ອງຮູ້ການເລືອກນຳໃຊ້ເອກະສານ ຮູ້ໄຈ້ແຍກເອກະສານ ອັນໃດເຊື່ອໄດ້ຊ່ຳໃດ ເປັນຂໍ້ມູນຊັ້ນໃດ ຕ້ອງຄົ້ນຄວ້າວິໄຈຢ່າງຮອບດ້ານຈຶ່ງເຊື່ອຕາມວິທີວິທະຍາປະຫວັດສາດ.

ເມື່ອພວກເຮົາຫາກ ຄົ້ນຄິດຢ່າງຮອບຄອບແລ້ວ ເຮົາຈຶ່ງຈະເຫັນໄດ້ວ່າ ເຈົ້າອະນຸວົງແມ່ນວີຣະກະສັດຜູ້ດີເດັ່ນ 1 ໃນ 4 ຂອງລາວ (ຟ້າງຸ່ມ, ໄຊຍະເຊດຖາທິຣາດ ສຸຣິຍະວົງສາ ແລະອະນຸວົງ) ເພິ່ນເປັນນັກປົກຄອງ, ນັກການທະຫານ, ນັກກໍ່ສ້າງ, ນັກສິນລະປະ, ນັກຮົບ, ນັກຕໍ່ສູ້ເພື່ອເອກະຣາດລາວ, ນັກເສັຍສະລະຜູ້ຍິ່ງໃຫຍ່ ທີ່ໄດ້ສະລະຊີວິດເພື່ອແຜ່ນດິນລາວທີ່ຄົນລາວທຸກຍຸກທຸກສະໄຫມບໍ່ມີວັນລືມ.

ສ່ວນນາງໂມແມ່ນບໍ່ມີຕົວຕົນ ເປັນພຽງນິຍາຍທີ່ສ້າງຂຶ້ນເພື່ອຜົນທາງການເມືອງເພື່ອຫວັງລອກລວງຕົນເອງ ຫລອກລວງຄົນອີສານ ຄົນໂຄຣາດໃຫ້ຫລົງເຊື່ອ ເຮົາຈຶ່ງຈຳເປັນລື້ມຄືນຄືໃນວັນນີ້ ໂດຍຕ້ອງຮູ້ສ້າງວິກິດ ໃຫ້ເປັນໂອກາດ, ແລະການແກ້ບັນຫາຕ້ອງແກ້ທີ່ຕົ້ນເຫດ ບໍ່ແມ່ນແກ້ທີ່ປາຍເຫດ ຕົ້ນເຫດກໍເອົາບິດເບືອນຄວາມຈິງ ເຮົາກໍເອົາຄວາມຈິງມາເວົ້າວ່າມັນຖືກ ມັນຜິດແນວໃດ ດັ່ງສຸພາສິດລາວ "ຫນາມປັກກໍເອົາຫນາມບົ່ງ" ມັນເປັນຫລັກການແກ້ບັນຫາອັນແມ່ນພູມປັນຍາລາວມາແຕ່ບູຮານ ຄື ພວກເຮົາຕ້ອງຕໍ່ສູ້ດ້ວຍຮູບແບບຂອງພວກເຮົາ ຄືເອົາຄວາມເປັນມາຂອງສົງຄາມສະໄຫມ ເຈົ້າອະນຸມາເວົ້າ

ຄືນໃຫ້ຖືກຄວາມຈິງ ນຳມາເຜີຍແຜ່ຄືນໃຫ້ກວ້າງຂວາງທີ່ສຸດ ກຳຈັດປັດເປົ່າອອກສິ່ງທີ່ເຂົ້າໃຈບໍ່ຖືກຜ່ານມາ ຕ້ານທຸກກ້ອຍທຳນອງບິດເບືອນປະຫວັດສາດຂອງຄົນບໍ່ດີຝ່າຍໄທຂຽນໄວ້, ອັນນີ້ແມ່ນການຕໍ່ສູ້ດ້ວຍປັນຍາ ຫລືໃຊ້ປັນຍາວຸດ ຕ້ອງຍົກໃຫ້ເຫັນວ່ານາງໂມບໍ່ມີຕົວຕົນ, ບັ້ນຮົບທົ່ງສຳລິດ ແມ່ນບໍ່ມີບົດບາດຂອງນາງຍິງໂມຈັກໜ່ອຍເລີຍ, ຈາກນັ້ນ ໄຊຊະນະແມ່ນລໍຖ້າເຮົາຢູ່ຂ້າງໜ້າຢ່າງແນ່ນອນ ແຕ່ຖ້າເຮົາບໍ່ມີການຕໍ່ສູ້ຫຍັງຕໍ່ບັນຫານີ້ ຝ່າຍເຮົາກໍຈະປຣາໄຊຫລືຍອມຈຳນົນດ້ານຂໍ້ມູນຫລັກຖານ, ຖ້າຕໍ່ສູ້ແມ່ນຈະໄດ້ໄຊຊະນະ.

ຕ້ອງຊີ້ໃຫ້ເຫັນວ່າ ການສ້າງຮູບເງົາ ແມ່ນບໍ່ເຫມາະສົມກັບຍຸກສະໄຫມ, ເພາະມັນແມ່ນການຫມິ່ນປະມາດບັນພະບຸຣຸດຂອງລາວ, ມັນເປັນການແຕະຕ້ອງແນວຄິດຈິດໃຈຂອງຄົນລາວ, ແຕ່ລະຊາດກໍມີກຽດສັກສີເທົ່າທຽມກັນ ສະນັ້ນການກະທຳສິ່ງໜຶ່ງສິ່ງໃດທີ່ແຕະຕ້ອງສັກສີຂອງຜູ້ອື່ນເປັນສິ່ງທີ່ຝ່າຍໄທຕ້ອງໄດ້ທົບທວນຄືນ, ຈະມາອ້າງແຕ່ວ່າໄທມີປະຊາທິປະໄຕ ໃຜຢາກເຮັດຫຍັງກໍໄດ້ ມັນຄົງບໍ່ຖືກ ເພາະປະຊາທິປະໄຕຕ້ອງມີຂອບເຂດຂອງມັນ ມີຄຸນນະທຳຂອງມັນ ບໍ່ແມ່ນວ່າເມື່ອມີປະຊາທິປະໄຕແລ້ວຢາກຕີຫົວໃຜກໍຕີໄດ້ ອັນນັ້ນບໍ່ແມ່ນປະຊາທິປະໄຕ ແຕ່ແມ່ນນັກເລງອັນທະພານ, ສະນັ້ນຮູບເງົາທີ່ຫມິ່ນພະບໍຣົມມະເດຊານຸພາບຂອງອະດີດກະສັດລາວ ບໍ່ວ່າທາງກົງ ແລະທາງອ້ອມແມ່ນບໍ່ຄວນເຮັດ ເພາະວິຣະກຳອັນນີ້ ຄົນລາວໃຫ້ຄວາມເຄົາລົບນັບຖື.

ຂ້າພະເຈົ້າເຫັນວ່າ ມິດຕະພາບລາວ-ໄທ ໃນປະຈຸບັນກືວ່າພວມຂະຫຍາຍຕົວດີຢູ່ ລັດຖະບານຂອງທັງສອງປະເທດແມ່ນໄດ້ເອົາໃຈໃສ່ປັບປຸງບຳລຸງສ້າງມາເປັນລຳດັບ, ອີກຢ່າງທາອຽງຂອງ 10 ຊາດອາຊຽນກໍແມ່ນພວມຫັນຫນ້າປຶກສາຫາລືບັນດາຂໍ້ຂັດແຍ່ງທັງຫມົດໃນປະຫວັດສາດເພື່ອເຮັດໃຫ້ 10 ຊາດຂອງພວກເຮົາກ້າວໄປຂ້າງຫນ້າຢ່າງປະສົບຜົນສຳເລັດຢ່າງທີ່ປະເທດສະມາຊິກ **ອີຢູ** ເຂົ້າພວມກ້າວໄປໃນຢູໂຣບ,

ຂ້າພະເຈົ້າຂໍຊົມເຊີຍຈິດໃຈຮັກຊາດຂອງປະຊາຊົນລາວທຸກກ້ວນຫນ້າ ເພາະເມື່ອໄດ້ຍິນຂ່າວນີ້ ທຸກຄົນຕ່າງກໍບໍ່ດີໃຈ ທຸກໆສັງຄົມ ສະພາກາເຟ ຕ່າງກໍກ່າວຂານ ໂດຍສະເພາະສື່ມວນຊົນກໍແມ່ນໄດ້ເຮັດຫນ້າທີ່ຂອງຕົນໄດ້ດີຫລາຍ ໄດ້ກະຈາຍຂ່າວ ຂຽນຂ່າວ ໃຫ້ປະຊາຊົນໄດ້ຮັບຊາບ ນີ້ຄືປະຕິກິຣິຍາຕໍ່ບັນຫາດັ່ງກ່າວຢ່າງໄວວາ.

ຂ້າພະເຈົ້າຢາກຮຽກຮ້ອງວ່າ ພວກເຮົາສູນເສັຍຢ່າງໃຫຍ່ຫລວງແລ້ວຢູ່ໃນປະຫວັດສາດ ເສັຍດິນແດນ ເສັຍມູນມັງມໍລະດົກ ເສັຍຂອງຄູນ 3 ຢ່າງ (ພະແກ້ວມໍຣະກົດ ຊ້າງເຜືອກງານົບ ແລະກອງຫມາກແຄ້ງ) ເສັຍພົນລະເມືອງ ເສັຍເລືອດເນື້ອ ຊີວິດ ນ້ຳຕາ ຄຳພີດີກາ ບໍ່ຈັກວ່າທໍ່ໃດ ແຕ່ສະຫຍາມບໍ່ມີທາງປານີພວກເຮົາ ສະນັ້ນພວກເຮົາຕ້ອງລຸກ

ຍືນຕໍ່ສູ້ເພື່ອປະເທດຊາດ ໃຫ້ເຂົາຮູ້ວ່າພວກເຮົາບໍ່ພໍໃຈຕໍ່ການກະທຳຂອງສັກດີນາສະຫຍາມໃນອະດີດ ເພື່ອບໍ່ໃຫ້ປະຫວັດສາດຊ້ຳຮອຍເດີມ.

ພວກເຮົາຍຸກປະຈຸບັນຕ້ອງຮັບຮູ້ວ່າ ກ່ອນນີ້ ບັນພະບຸລຸດພວກເຮົາໄດ້ຕໍ່ສູ້ເຕົ້າໂຮມຊາດລາວໃຫ້ກວ້າງໃຫຍ່ໄພສານ ເຊັ່ນສະໄໝຟ້າງຸ່ມ, ເພີ່ນເຮັດໄດ້ແມ່ນຍ້ອນເພີ່ນອາດຫານ, ຍ້ອນເພີ່ນເດັດດ່ຽວ, ເພີ່ນອາດຫານເດັດດ່ຽວຍ້ອນເພີ່ນຮັກຊາດ, ຈະຮັກຊາດໄດ້ກໍຍ້ອນຊາບຊຶ້ງໃນປະຫວັດສາດຂອງຊາດ, ດັ່ງນັ້ນ ຄົນລຸ້ນພວກເຮົາ ຕ້ອງຮ່ວມ ແຮງກັບພັກລັດພ້ອມພາກັນປົກປັກຮັກສາແລະສ້າງສາພັດທະນາໃຫ້ຈະເລີນກ້າວໜ້າ ເຂັ້ມແຂງ.

ແລະຢາກຮຽກຮ້ອງໃຫ້ບັນດາທ່ານ ເອົາໃຈໃສ່ອ່ານປື້ມປະຫວັດສາດລາວທີ່ພິມອອກແລ້ວນັ້ນໃຫ້ຫລາຍຂຶ້ນ ເພື່ອພ້ອມພາກັນມີຄຳເຫັນໃນການດັດແປງຕໍ່ໜ້າໃຫ້ດີຂຶ້ນກວ່າເກົ່າ, ແລະຮຽກຮ້ອງໃຫ້ທ່ານເຂົ້າຊົມຫໍພິພິດທະພັນແຫ່ງຊາດ ເຊິ່ງມີການວາງສະແດງປະຫວັດສາດລາວທັງໝົດ 16 ພາກໃນປະຈຸບັນທີ່ກະຊວງຖະແຫລງຂ່າວໄດ້ຊຸ້ນຂ້ຽວວາງສະແດງຢູ່, ທ່ານກໍຈະເຂົ້າໃຈປະຫວັດສາດລາວແລະຮັກຊາດລາວ ຂອງພວກເຮົາຫລາຍຂຶ້ນ.

ຂ້າພະເຈົ້າໄດ້ສະເໜີມາທັງໝົດນັ້ນ ກໍເພື່ອເປັນເຄື່ອງປະດັບສະຕິປັນຍາເລັກໆນ້ອຍເຊິ່ງອາດຈະມີຖືກມີຜິດ ບໍ່ເຂົ້າໄດ້ກັບທັດສະນະ ຫລືບໍ່ເຂົ້າໄດ້ກັບຈິດໃຈທ່ານ ຂ້າພະເຈົ້າກໍຂໍອະໄພ ກໍຂໍໃຫ້ຖືວ່າອັນນັ້ນເປັນພຽງທັດສະນະໜຶ່ງທີ່ຍັງຕ້ອງພິຈາລະນາຄົ້ນຄວ້າຕໍ່ໄປ

ສຸດທ້າຍ ຂ້າພະເຈົ້າຂໍຮຽກຮ້ອງວ່າ ພວດເຮົາລູກລາວຫລານລາວລຸ້ນນີ້ແມ່ນຕັດສິນໃຈເດັດດ່ຽວ ສາມັກຄີກັນພາຍໃຕ້ການນຳພາຂອງ **ພປປລ** ແລ້ວເຮົາຈະໄດ້ຮັບໄຊຊະນະໃນທຸກໆບັນຫາຢ່າງແນ່ນອນ,

ຂໍຂອບໃຈທີ່ທ່ານໄດ້ອົດທົນຕິດຕາມຟັງແຕ່ຕົ້ນຕະຫລອດປາຍ

ຂໍອວຍພອນທຸກທ່ານຈົ່ງປະສົບແຕ່ໂຊກດີ,

**ຂໍຂອບໃຈ.**

2434095